ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ບົດແນະນຳ

## ວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ (ສະບັບປັບປຸງ)

**ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ**

**2016**

## ຄຳນຳ

ການພັດທະນາເສດຖະກິດ-ສັງຄົມ ໃນ ສປປ ລາວ ນັບມື້ນັບມີການຂະຫຍາຍຕົວ, ການລົງທຶນ ຈາກພາຍ ໃນ ແລະ ຕ່າງປະເທດ ກໍ່ມີການເພີ່ມຂຶ້ນ ຢ່າງຫລວງຫລາຍ ໃນຂະແໜງການຕ່າງໆ ເປັນຕົ້ນ: ຂະແໜງ ພະລັງງານ, ບໍ່ແຮ່, ອຸດສາຫະກຳ, ກະສິກຳ-ປ່າໄມ້, ພື້ນຖານໂຄງລ່າງ, ການບໍລິການ ແລະ ການທ່ອງທ່ຽວ. ການພັດທະນາ ໂຄງການລົງທຶນເຫລົ່ານັ້ນ ໄດ້ປະກອບສ່ວນເຮັດໃຫ້ລາຍຮັບຂອງຊາດເພີ່ມຂຶ້ນ, ສ້າງວຽກເຮັດງານທຳໃຫ້ແກ່ ປະຊາຊົນ ກ້າວໄປສູ່ການຫຼຸດພົ້ນອອກຈາກຄວາມທຸກຍາກ. ແຕ່ຄຽງຄູ່ກັນນັ້ນ ຖ້າບໍ່ມີການຄຸ້ມຄອງທາງດ້ານສິ່ງ ແວດລ້ອມ ແລະ ສັງຄົມ ທີ່ດີ ກໍ່ຈະສ້າງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ເຊັ່ນ: ຊັບພະຍາກອນທຳມະ ຊາດ ຫຼຸດໜ້ອຍຖອຍລົງ, ສິ່ງແວດລ້ອມເຊື່ອມໂຊມ ແລະ ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບຜົນກະທົບ. ສະນັ້ນ , ເພື່ອປ້ອງກັນ ແລະ ຫລຸດຜ່ອນຜົນກະທົບດັ່ງກ່າວ ຈຶ່ງຈຳເປັນຕ້ອງມີການຄຸ້ມຄອງໂຄງການລົງທຶນ ທີ່ດີ ແລະ ຮັບປະກັນ ເຮັດໃຫ້ການພັດທະນາ ມີຄວາມຍືນຍົງ.

ລັດຖະບານ ຖືເອົາການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ເປັນຂະບວນການໜຶ່ງທີ່ສຳຄັນ ໃນການພິຈາລະນາໂຄງການ ເພື່ອຮັບປະກັນໃຫ້ມີການພັດທະນາແບບ ຍືນຍົງ. ດັ່ງນັ້ນ, ທຸກໂຄງການລົງທຶນ ກ່ອນຈະເລີ່ມການກໍ່ສ້າງ ແລະ ຈັດຕັ້ງປະຕິບັດໂຄງການນັ້ນ, ຜູ້ພັດທະນາ ໂຄງການ ຕ້ອງດຳເນີນ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ທີ່ມີການດຳເນີນ ຂະບວນການມີສ່ວນຮ່ວມ ຂອງ ມວນຊົນ ຢ່າງຖືກຕ້ອງ.

ເພື່ອຮັບປະກັນໃຫ້ການມີສ່ວນຮ່ວມຂອງມວນຊົນ ຖືກດຳເນີນການໄປຢ່າງຖືກຕ້ອງຕາມຂັ້ນຕອນ, ລະບຽບການ, ເຕັກນິກ ແລະ ຮັບປະກັນຄວາມໂປ່ງໃສ; ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ຈຶ່ງໄດ້ສ້າງບົດແນະນຳ ວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ ສິ່ງແວດລ້ອມ ຂອງໂຄງການລົງທຶນ, ສະບັບເລກທີ 707/ກຊສ, ລົງວັນທີ 5 ກຸມພາ 2013 ເພື່ອເປັນເຄື່ອງມືໃຫ້ ພາກສ່ວນທີ່ກ່ຽວຂ້ອງ ລວມທັງຜູ້ພັດທະນາໂຄງການ ໄດ້ນຳໃຊ້ເຂົ້າໃນ ການຈັດຕັ້ງປະຕິບັດວຽກງານການມີສ່ວນ ຮ່ວມ ຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການລົງທຶນ ຢ່າງມີປະສິດທິຜົນ ທັງນີ້ເພື່ອຮັບປະກັນໃຫ້ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ໄດ້ມີສ່ວນຮ່ວມໃນຂະບວນການວາງ ແຜນ ແລະ ຕັດສິນບັນຫາ ກ່ຽວກັບ ຜົນປະໂຫຍດ ທີ່ຈະໄດ້ຮັບ ແລະ ການແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈາກໂຄງການລົງທຶນ.

ຜ່ານການຈັດຕັ້ງປະຕິບັດ ບົດແນະນຳດັ່ງກ່າວ ມາໃນໄລຍະໜຶ່ງ ເຫັນວ່າຍັງມີບາງດ້ານທີ່ຍັງບໍ່ທັນຈະແຈ້ງ, ແທດເໝາະ ແລະ ສອດຄ່ອງກັບກົນໄກການພັດທະນາໃນປະຈຸບັນ, ພຶດຕິກຳຕົວຈິງໃນການຈັດຕັ້ງປະຕິບັດວຽກງານ ການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ບັນດານິຕິກຳທີ່ກ່ຽວຂ້ອງ ທີ່ໄດ້ມີການປັບປຸງໃໝ່. ສະນັ້ນ, ເພື່ອຮັບປະກັນໃຫ້ບົດແນະນຳສະບັບນີ້ສອດຄ່ອງກັບສະພາບການພັດທະນາ ເສດຖະກິດ-ສັງຄົມ ແລະ ນະໂຍບາຍ, ກົດໝາຍ ແລະ ບັນດານິຕິກຳ ທີ່ກ່ຽວຂ້ອງ, ກະຊວງ

ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈຶ່ງຕ້ອງໄດ້ທົບທວນ ແລະ ປັບປຸງ ປຶ້ມແນະນຳ ວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນ ສະບັບນີ້ ໃນແຕ່ໄລຍະ.

ປຶ້ມແນະນຳ ວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການລົງທຶນ ຈຶ່ງໄດ້ຮັບການປັບປຸງໂດຍ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ), ສປປ ລາວ ພາຍໃຕ້ການສະໜັບສະໜູນທາງດ້ານວິຊາການ ແລະ ການເງິນ ຈາກອົງການສະຫະປະຊາຊາດເພື່ອການພັດທະນາ ໂດຍຜ່ານທາງໂຄງການເຊື່ອມໂຍງສິ່ງແວດລ້ອມເຂົ້າໃນການແກ້ໄຂຄວາມທຸກຍາກ. ປຶ້ມແນະນຳ ວ່າດ້ວຍການມີສ່ວນຮ່ວມຂອງມວນຊົນສະບັບນີ້ ໄດ້ຖອດຖອນເອົາບົດຮຽນ ຈາກການຈັດຕັ້ງປະຕິບັດຕົວຈິງໃນການທົບທວນບົດລາຍງານ ແລະ ແຜນຕ່າງໆ ຂອງພະນັກງານວິຊາການຂະແໜງການຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງບົດຮຽນຈາກການຈັດຕັ້ງປະຕິບັດຢູ່ໃນລະດັບສາກົນ.

ປຶ້ມແນະນຳ ວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນ ມີຈຸດປະສົງຫຼັກ ເພື່ອນຳໃຊ້ເປັນເຄື່ອງມືທີ່ສຳຄັນ ໃຫ້ແກ່ຜູ້ພັດທະນາໂຄງການ ແລະ ທີ່ປຶກສາດ້ານສິ່ງແວດລ້ອມ ໃນການຮັບປະກັນການຈັດຕັ້ງປະຕິບັດການມີສ່ວນຮ່ວມຂອງມວນຊົນ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມລະບຽບຫລັກການ, ມີຄວາມໂປ່ງໃສ່ ແລະ ທົ່ວເຖິງ ໂດຍສະເພາະແມ່ນການເຂົ້າຮ່ວມຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ. ພ້ອມດຽວກັນນັ້ນ, ຍັງເປັນການເພີ່ມທະວີການຈັດຕັ້ງປະຕິບັດ ຂະບວນການມີສ່ວນຮ່ວມຂອງມວນຊົນ ສຳລັບການກະກຽມບົດລາຍງານ **ສຕສ/ປຜສ** ໃຫ້ສອດຄ່ອງກັບຂໍ້ກຳນົດ ແລະ ເງື່ອນໄຂ ທີ່ **ກຊສ** ວາງອອກ ແລະ ສອດຄ່ອງກັບເຕັກນິກວິຊາການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ແລະ ການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍສະເພາະກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ/ນະຄອນ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ປຶ້ມແນະນຳສະບັບນີ້ ຈະຊ່ວຍໃຫ້ກຸ່ມເປົ້າໝາຍທີ່ນຳໃຊ້ ສາມາດຍົກລະດັບປະສິດທິພາບ ຂອງວຽກງານການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ຢູ່ໃນ ສປປ ລາວ ໃຫ້ສູງຂຶ້ນ.

ນະຄອນຫລວງວຽງຈັນ,ວັນທີ....... ເດືອນ...... ປີ 2016

ຫົວໜ້າກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ

# ສາລະບານ


ຄຳນຳ.......... ii

1 ພາກສະເໜີ.......... 6

2 ເປົ້າໝາຍ ແລະ ຈຸດປະສົງຂອງການມີສ່ວນຮ່ວມຂອງມວນຊົນ.......... 6

3 ນະໂຍບາຍ, ກົດໝາຍ ແລະ ລະບຽບການ.......... 8

4 ກຸ່ມເປົ້າໝາຍຫລັກທີ່ນຳໃຊ້ບົດແນະນຳ.......... 8

4.1 ຂະແໜງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ.......... 8

4.2 ເຈົ້າຂອງໂຄງການ.......... 9

4.3 ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ.......... 10

4.4 ຂະແໜງການທີ່ທີ່ກ່ຽວຂ້ອງ.......... 11

5 ຄາດໝາຍຜົນໄດ້ຮັບຈາກຂະບວນການມີສ່ວນຮ່ວມຂອງມວນຊົນ.......... 11

5.1 ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ.......... 11

5.2 ອົງການຈັດຕັ້ງລັດຖະບານ.......... 12

5.3 ເຈົ້າຂອງໂຄງການ.......... 12

6 ການວາງແຜນ ເພື່ອດຳເນີນການມີສ່ວນຮ່ວມຂອງມວນຊົນ.......... 13

6.1 ການກຳນົດຜູ້ມີສ່ວນຮ່ວມ ຫຼື ຜູ້ມີສ່ວນກ່ຽວຂ້ອງທັງໝົດ.......... 13

6.2 ການກຳນົດຂໍ້ມູນຂ່າວສານ ແລະ ວິທີການດຳເນີນການມີສ່ວນຮ່ວມຂອງມວນຊົນ.......... 15

6.3 ກຳນົດເຕັກນິກ, ເວລາ ແລະ ສະຖານທີ່.......... 17

6.4 ການສັງລວມເອົາຜົນການມີສ່ວນຮ່ວມຂອງມວນຊົນ ເຂົ້າໃນ ບສຕສ/ບປຜສ.......... 18

6.5 ການກຳນົດບຸກຄະລະກອນ ແລະ ງົບປະມານ.......... 18

7 ຂັ້ນຕອນການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.......... 19

7.1 ການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການສ້າງ ແລະ ຮັບຮອງ ບົດລາຍງານການກຳນົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ.......... 20

7.1.1 ຄາດໝາຍຜົນໄດ້ຮັບ.......... 20

7.1.2 ຜູ້ມີສ່ວນຮ່ວມຫລັກ.......... 20

7.1.3 ການວາງແຜນ ແລະ ການກະກຽມການມີສ່ວນຮ່ວມຂອງມວນຊົນ.......... 21

7.1.4 ວິທີການ ແລະ ກິດຈະກຳດຳເນີນການມີສ່ວນຮ່ວມຂອງມວນຊົນ.......... 21

7.1.5 ການລາຍງານຜົນການດຳເນີນການມີສ່ວນຮ່ວມຂອງມວນຊົນ.......... 22

7.2 ການມີສ່ວນຮ່ວມຂອງມວນຊົນໃນໄລຍະການເກັບກຳຂໍ້ມູນເພື່ອສ້າງ ບສຕສ/ບປຜສ.......... 22

7.2.1 ຄາດໝາຍຜົນໄດ້ຮັບ ........ 22

7.2.2 ຜູ້ມີສ່ວນຮ່ວມຫລັກ ........ 23

7.2.3 ການວາງແຜນ ແລະ ການກະກຽມການມີສ່ວນຮ່ວມຂອງມວນຊົນ ........ 23

7.2.4 ວິທີການ ແລະ ກິດຈະກຳການມີສ່ວນຮ່ວມຂອງມວນຊົນ ........ 24

7.2.5 ການລາຍງານຜົນການດຳເນີນການມີສ່ວນຮ່ວມຂອງມວນຊົນ ........ 25

7.3 ການມີສ່ວນຮ່ວມຂອງມວນຊົນໃນໄລຍະການສ້າງ ແລະ ທົບທວນ ບສຕສ/ບປຜສ ........ 26

7.3.1 ຄາດໝາຍຜົນໄດ້ຮັບ ........ 26

7.3.2 ຜູ້ມີສ່ວນຮ່ວມຫລັກ ........ 27

7.3.3 ການກະກຽມ ແລະ ກະກຽມ ແຜນການມີສ່ວນຮ່ວມຂອງມວນຊົນ ........ 29

7.3.4 ວິທີການ ແລະ ກິດຈະກຳການມີສ່ວນຮ່ວມຂອງມວນຊົນ ........ 31

7.4 ການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການກໍ່ສ້າງ ແລະ ດຳເນີນງານ ........ 34

7.4.1 ຄາດຄະເນຜົນທີ່ຈະໄດ້ຮັບ ........ 35

7.4.2 ຜູ້ມີສ່ວນຮ່ວມຫລັກ ........ 35

7.4.3 ການວາງແຜນ ແລະ ການກະກຽມການມີສ່ວນຮ່ວມຂອງມວນຊົນ ........ 35

7.4.4 ກິດຈະກຳ ແລະ ວິທີການ ດຳເນີນການມີສ່ວນຮ່ວມຂອງມວນຊົນ ........ 35

7.4.5 ການລາຍງານຜົນການດຳເນີນການມີສ່ວນຮ່ວມຂອງມວນຊົນ ........ 41

7.5 ການມີສ່ວນຮ່ວມຂອງມວນຊົນໃນໄລຍະສິ້ນສຸດ ແລະ ຟື້ນຟູໂຄງການ ........ 41

7.5.1 ຄາດຄະເນຜົນທີ່ຈະໄດ້ຮັບ ........ 41

7.5.2 ຜູ້ມີສ່ວນຮ່ວມຫລັກ ........ 42

7.5.3 ການວາງແຜນ ແລະ ການກະກຽມ ການມີສ່ວນຮ່ວມຂອງມວນຊົນ ........ 42

7.5.4 ວິທີການ ແລະ ກິດຈະກຳ ການມີສ່ວນຮ່ວມຂອງມວນຊົນ ........ 42

7.5.5 ການລາຍງານຜົນການມີສ່ວນຮ່ວມຂອງມວນຊົນ ........ 43

8 ການແກ້ໄຂບັນຫາ ຫຼື ຂໍ້ຄັດແຍ່ງ ........ 44

# 1 ພາກສະເໜີ

ເພື່ອເປັນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ມາດຕາ 21 ແລະ 22 ຂອງກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ, ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ກຊສ ຈຶ່ງໄດ້ສ້າງຄໍາແນະນໍາຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ, ສະບັບເລກທີ 8030/ກຊສ, ລົງວັນທີ 17 ທັນວາ 2013, ຄໍາແນະນໍາຂະບວນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ສະບັບເລກທີ 8029/ກຊສ, ລົງວັນທີ 17 ທັນວາ 2013 ເຊິ່ງທັງສອງນິຕິກໍາ ໄດ້ກໍານົດເອົາການມີສ່ວນຮ່ວມຂອງມວນຊົນ ແມ່ນເປັນໜຶ່ງໃນຂັ້ນຕອນທີ່ສໍາຄັນຂອງຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ແລະ ການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ.

ການມີສ່ວນຮ່ວມຂອງມວນຊົນ ໝາຍເຖິງ ຂະບວນການປຶກສາຫາລື, ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບໂຄງການລົງທຶນ ເພື່ອນໍາເອົາຄໍາຄິດເຫັນ ຈາກພາກສ່ວນທີ່ຄາດວ່າຈະໄດ້ຮັບຜົນກະທົບ ຫລື ໄດ້ຮັບຜົນປະໂຫຍດຈາກໂຄງການລົງທຶນ ກໍຄືຈາກຜູ້ທີ່ມີຄວາມສົນໃຈ ຕໍ່ໂຄງການລົງທຶນ ມາເປັນບ່ອນອີງໃນການສ້າງ ແລະ ພິຈາລະນາບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫລື ບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ.

**ຈຸດປະສົງ ຂອງບົດແນະນໍາສະບັບນີ້ ແມ່ນເພື່ອ:**

1. ຮັບປະກັນການຈັດຕັ້ງປະຕິບັດ ການມີສ່ວນຮ່ວມຂອງມວນຊົນ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມລະບຽບຫລັກການ, ມີຄວາມໂປ່ງໃສ ແລະ ທົ່ວເຖິງໂດຍສະເພາະແມ່ນ ການເຂົ້າຮ່ວມຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ໃນຂະບວນການມີສ່ວນຮ່ວມຂອງມວນຊົນດັ່ງກ່າວ;
2. ຮັບປະກັນ ໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ໄດ້ຮັບຄວາມເປັນທໍາໃນການແກ້ໄຂຜົນກະທົບທີ່ເກີດຈາກໂຄງການຢ່າງສົມເຫດສົມຜົນ.

# 2 ເປົ້າໝາຍ ແລະ ຈຸດປະສົງຂອງການມີສ່ວນຮ່ວມຂອງມວນຊົນ

ເປົ້າໝາຍລວມຂອງການດໍາເນີນ ຂະບວນການມີສ່ວນຮ່ວມຂອງມວນຊົນ ແມ່ນເພື່ອ:

1. ອໍານວຍຄວາມສະດວກ ແລະ ເປີດໂອກາດໃຫ້ມວນຊົນເປັນຕົ້ນແມ່ນປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ໄດ້ມີສ່ວນຮ່ວມ ແລະ ປະກອບຄຳເຫັນ ເຂົ້າໃນຂະບວນການພັດທະນາໂຄງການລົງທຶນ ແລະ ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ແລະ ຂະບວນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ;
2. ຮັບປະກັນໃຫ້ ຄໍາຄິດເຫັນ, ຂໍ້ສະເໜີ ແລະ ຂໍ້ຂ້ອງໃຈ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຜູ້ທີ່ສ່ວນຮ່ວມອື່ນໆ ໄດ້ຖືກພິຈາລະນາເຂົ້າໃນ ບປຜສ/ບສຕສ ແລະ ການຕັດສິນໃຈຂັ້ນສຸດທ້າຍ;

3. ຮັບປະກັນໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ໄດ້ຮັບຜົນປະໂຫຍດສູງສຸດ ແລະ ຜົນກະທົບດ້ານລົບໃຫ້ໜ້ອຍທີ່ສຸດ ຈາກການພັດທະນາໂຄງການ;

4. ຮັບປະກັນຂະບວນການສ້າງ ແລະ ຮັບຮອງ ບປຜສ/ບສຕສ ມີຄວາມໂປ່ງໃສ ແລະ ສ້າງສາຍພົວພັນທີ່ດີລະຫວ່າງຜູ້ມີສ່ວນຮ່ວມທັງໝົດ, ເຈົ້າຂອງໂຄງການ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຫລີກລ່ຽງ ຫລື ຫລຸດຜ່ອນຂໍ້ຂັດແຍ່ງ;

5. ສ້າງຄວາມເຊື່ອໝັ້ນຂອງມວນຊົນ ໃນຂະບວນການສ້າງ ແລະ ທົບທວນ ບປຜສ/ບສຕສ ລວມທັງການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ.

**ເພື່ອຮັບປະກັນໃຫ້ ບັນລຸຜົນໄດ້ຮັບ ເປົ້າໝາຍລວມຂອງການມີສ່ວນຮ່ວມຂອງມວນຊົນ, ຈຸດປະສົງຫລັກ ຂອງການ ມີສ່ວນຮ່ວມຂອງມວນຊົນແມ່ນມີດັ່ງລຸ່ມນີ້:**

- ເພື່ອລະບຸຜູ້ທີ່ມີສ່ວນຮ່ວມ ແລະ ຜູ້ມີແນວໂນ້ມຈະໄດ້ຮັບຜົນກະທົບ;
- ເຜີຍແຜ່ຂໍ້ມູນ ກ່ຽວກັບແຜນພັດທະນາໂຄງການລົງທຶນ ແລະ ຜົນກະທົບດ້ານບວກ ແລະ ດ້ານລົບ ທີ່ອາດຈະເກີດຂຶ້ນຈາກໂຄງການລົງທຶນ ລວມທັງຂະບວນການມີສ່ວນຮ່ວມຂອງມວນຊົນ ໃຫ້ແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ;
- ເພື່ອເກັບກໍາຂໍ້ມູນພື້ນຖານທາງດ້ານສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທໍາມະຊາດ;
- ເພື່ອປຶກສາຫາລື ແລະ ແລກປ່ຽນຄໍາຄິດເຫັນ ກັບປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ທີ່ສ່ວນຮ່ວມອື່ນໆ ກ່ຽວກັບການອອກແບບໂຄງການ, ການຄັດເລືອກທາງເລືອກ ແລະ ການກໍານົດມາດຕະການຫລຸດຜ່ອນຜົນກະທົບ ລວມທັງແຜນການທົດແທນຄ່າເສຍຫາ, ຈັດສັນຍົກຍ້າຍ ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຂອງໂຄງການ;
- ເພື່ອບັນທຶກ ແລະ ບັນຈຸຄໍາຄິດເຫັນ, ຂໍ້ສະເໜີ ແລະ ຂໍ້ຂ້ອງໃຈ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ທີ່ສ່ວນຮ່ວມອື່ນໆ ເຂົ້າໃນ ບປຜສ/ບສຕສ ແລະ ການຕັດສິນໃຈຂັ້ນສຸດທ້າຍ;
- ສ້າງສາຍພົວພັນທີ່ດີລະຫວ່າງຜູ້ມີສ່ວນຮ່ວມທັງໝົດ, ເຈົ້າຂອງໂຄງການ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຮັບປະກັນຂະບວນການຕັດສິນໃຈຮັບຮອງ ບປຜສ/ບສຕສ ໃຫ້ມີຄວາມໂປ່ງໃສ ແລະ ຫລີກລ່ຽງ ຫລື ຫລຸດຜ່ອນຂໍ້ຂັດແຍ່ງ ແລະ ເພີ່ມຄວາມເຊື່ອໝັ້ນຂອງມວນຊົນໃນຂະບວນການສ້າງ ແລະ ທົບທວນ ບປຜສ/ບສຕສ ລວມທັງການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ.

ບົດແນະນໍາ ວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນສະບັບນີ້ ນໍາໃຊ້ຕໍ່ທຸກໂຄງການລົງທຶນ ແລະ ກິດຈະການຕ່າງໆ ຢູ່ໃນ ສປປ ລາວ ຕາມທີ່ຈັດໄດ້ແບ່ງອອກເປັນໂຄງການ ຢູ່ໃນກຸ່ມ 1 (ກສຕສ) ຫຼື ກຸ່ມ 2 (ກປຜສ) ຕາມຂໍ້ຕົກລົງ ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ບັນຊີໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຈະຕ້ອງດໍາເນີນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ເຊິ່ງຕ້ອງດໍາເນີນຂະບວນການໃຫ້ສອດຄ່ອງກັບຄໍາແນະນໍາຂະບວນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່

ສິ່ງແວດລ້ອມ, ສະບັບເລກທີ 8029/ກຊສ, ລົງວັນທີ 17 ທັນວາ 2013 ແລະ ຄໍາແນະນໍາຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ, ສະບັບເລກທີ 8030/ກຊສ, ລົງວັນທີ 17 ທັນວາ 2013.

# 3 ນະໂຍບາຍ, ກົດໝາຍ ແລະ ລະບຽບການ

ບົດແນະນໍາ ວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ສ້າງຂຶ້ນມາ ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ບັນດານິຕິກໍາ ດັ່ງລຸ່ມນີ້:

1. ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ(ສະບັບປັບປຸງ), ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ມາດຕາ 48 ການມີສ່ວນຮ່ວມຂອງມວນຊົນ;
2. ຄໍາແນະນໍາຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ, ສະບັບເລກທີ 8030/ກຊສ, ລົງວັນທີ 17 ທັນວາ 2013, ຂໍ້ 2.14 ການມີສ່ວນຮ່ວມຂອງມວນຊົນ ແລະ ຂໍ້ 2.15 ຂັ້ນຕອນການມີສ່ວນຮ່ວມຂອງມວນຊົນ;
3. ຄໍາແນະນໍາຂະບວນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ສະບັບເລກທີ 8029/ກຊສ, ລົງວັນທີ 17 ທັນວາ 2013, ຂໍ້ 2.10 ການມີສ່ວນຮ່ວມຂອງມວນຊົນ ແລະ ຂໍ້ 2.11 ຂັ້ນຕອນການມີສ່ວນຮ່ວມຂອງມວນຊົນ.
4. ດໍາລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ, ສະບັບເລກທີ 84/ນຍ, ລົງວັນທີ 20 ເມສາ 2016: ການດໍາເນີນກິດຈະກໍາ ທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ແມ່ນໄດ້ຜ່ານຂະບວນການປຶກສາຫາລືກັບມວນຊົນ ເປັນຕົ້ນແມ່ນ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ

# 4 ກຸ່ມເປົ້າໝາຍຫລັກທີ່ນໍາໃຊ້ບົດແນະນໍາ

ບົດແນະນໍາ ວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນໄດ້ສ້າງຂຶ້ນມາເພື່ອເປັນເຄື່ອງມື ສໍາລັບກຸ່ມເປົ້າໝາຍທີ່ນໍາໃຊ້ ດັ່ງນີ້:

## 4.1 ຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ

1. **<u>ກະຊວງຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມ (ກຊສ)</u>** ເປັນເຈົ້າການຫຼັກໃນການທົບທວນ ບປຜສ ໂດຍອີງຕາມ ຄໍາແນະນໍາ ວ່າດ້ວຍ ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ, ສະບັບເລກທີ 8030/ກຊສ;

2. <u>**ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ/ນະຄອນ**</u> ເປັນເຈົ້າການຫຼັກໃນການທົບທວນ ບສຕສ ໂດຍອີງຕາມ ຄຳແນະນຳ ວ່າດ້ວຍ ຂະບວນການສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ, ສະບັບເລກທີ 8029/ກຊສ:

<u>**ທັງສອງອົງການຈັດຕັ້ງດັ່ງກ່າວແມ່ນມີພາລະບົດບາດ ແລະ ຄວາມຮັບຜິດຊອບ:**</u>

- ເປັນຜູ້ປະສານງານ ກັບຂະແໜງການທີ່ກ່ຽວຂ້ອງ ຢູ່ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າຂອງໂຄງການ ໃນການດຳເນີນການມີສ່ວນຮ່ວມຂອງມວນຊົນ ເພື່ອເຜີຍແຜ່ຂໍ້ມູນ ກ່ຽວກັບ ຈຸດປະສົງ, ຜົນປະໂຫຍດ ແລະ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ອາດຈະເກີດຂຶ້ນ ຈາກຂັ້ນຕອນທັງໝົດ ຂອງການພັດທະນາໂຄງການລົງທຶນ ແລະ ກິດຈະການຕ່າງໆ;
- ເປັນເຈົ້າການຫຼັກ ໃນການກະກຽມ ແລະ ດຳເນີນ ກອງປະຊຸມປຶກສາຫາລື, ກອງປະຊຸມເຜີຍແຜ່ຂໍ້ມູນໃນແຕ່ລະຂັ້ນ ແລະ ກອງປະຊຸມວິຊາການ ໂດຍປະສານສົມທົບເຈົ້າຂອງໂຄງການ ແລະ ອົງການປົກຄອງທ້ອງຖິ່ນ ແລະ ເຂົ້າຮ່ວມການຕິດຕາມກວດກາພາກສະໜາມ ຕາມຄວາມຈຳເປັນ;
- ແຈ້ງ ແລະ ແນະນຳ ໃຫ້ຜູ້ມີສ່ວນຮ່ວມທັງໝົດ ເຂົ້າຮ່ວມຂະບວນການມີສ່ວນຮ່ວມຂອງມວນຊົນ; ແລະ
- ຮັບຄຳຮ້ອງທຸກທີ່ຕິດພັນກັບຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຈາກປະຊາຊົນຜູ້ທີ່ຖືກຜົນກະທົບ ແລະ ຜູ້ມີສ່ວນຮ່ວມ ແລະ ເປັນເຈົ້າການຫຼັກ ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງ ຕາມຄວາມຮັບຜິດຊອບຂອງຕົນ.

## 4.2 ເຈົ້າຂອງໂຄງການ

ເຈົ້າຂອງໂຄງການມີໜ້າທີ່ ແລະ ຄວາມຮັບຜິດຊອບດັ່ງລຸ່ມນີ້:

- ສະໜອງງົບປະມານທັງໝົດ ແລະ ຊັບພະຍາກອນອື່ນໆ ຕາມຄວາມຈຳເປັນ ເພື່ອຮັບປະກັນການຈັດຕັ້ງປະຕິບັດກິດຈະກຳການມີສ່ວນຮ່ວມຂອງມວນຊົນ ໃຫ້ບັນລຸຕາມຈຸດປະສົງ ແລະ ຄາດໝາຍ ຂອງປຶດແນະນຳສະບັບນີ້;
- ສ້າງແຜນດຳເນີນການມີສ່ວນຮ່ວມຂອງມວນຊົນໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະກຳຕ່າງໆ, ກຳນົດເວລາ ແລະ ກິດຈະກຳລະອຽດ ໃນການຈັດຕັ້ງປະຕິບັດການມີສ່ວນຮ່ວມຂອງມວນຊົນ;
- ຮັບປະກັນໃຫ້ປະຊາຊົນທ້ອງຖິ່ນໄດ້ເຂົ້າຮ່ວມ ໃນຂະບວນການມີສ່ວນຮ່ວມຂອງມວນຊົນ ເພື່ອໃຫ້ເຂົາເຈົ້າມີຄວາມເຂົ້າໃຈເລິກເຊິ່ງ ກ່ຽວກັບ ຜົນກະທົບ ແລະ ຄວາມສ່ຽງ ທີ່ກ່ຽວຂ້ອງກັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຈະເກີດຂຶ້ນ ແລະ ເພື່ອສັງລວມເອົາຄຳຄິດເຫັນ ປະກອບເຂົ້າໃນບົດລາຍງານ ສຕສ/ປຜສ ຢ່າງຄົບຖ້ວນ;

- ດຳເນີນການເຜີຍແຜ່ຂໍ້ມູນ ທີ່ກ່ຽວຂ້ອງກັບໂຄງການ, ຜົນກະທົບດ້ານບວກ ແລະ ດ້ານລົບ ແລະ ມາດຕະການຫຼຸດຜ່ອນ ຜ່ານທາງສື່ຕ່າງໆ (ວິທະຍຸ, ໂທລະພາບ, ໜັງສືພິມ);
- ຈັດຕັ້ງກອງປະຊຸມປຶກສາຫາລື ພາຍໃຕ້ການແນະນຳ ແລະ ການອຳນວຍຄວາມສະດວກ ຂອງອົງການຈັດ ຕັ້ງລັດຖະບານ ຮ່ວມກັບຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ມີສ່ວນຮ່ວມອື່ນໆ ໃນໄລຍະການສ້າງ ແລະ ທົບທວນ ບົດລາຍງານ ສຕສ/ປຜສ ແລະ ນຳສະເໜີຜົນການປະເມີນ ຂອງບົດລາຍງານດັ່ງກ່າວ ແລະ ແຜນການຕ່າງໆ;
- ສ້າງຕັ້ງສູນຂໍ້ມູນຂ່າວສານ ແລະ ປະຊາສຳພັນ ເພື່ອໃຫ້ມວນຊົນສາມາດເຂົ້າເຖິງຂໍ້ມູນຂ່າວສານຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ;
- ຮັບປະກັນໃຫ້ການມີສ່ວນຮ່ວມຂອງມວນຊົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີອິດສະລະ ໂດຍປາສະ ຈາກການນາບຂູ່, ບັງຄັບ ຫຼື ການໃຫ້ສິນບົນ.

## 4.3 ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ

ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆຕ້ອງໄດ້ມີສ່ວນຮ່ວມ ດັ່ງນີ້:

- ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ແຜນການພັດທະນາ ໂຄງການລົງທຶນ ແລະ ກິດຈະການຕ່າງໆ, ຜົນປະໂຫຍດທີ່ຈະໄດ້ຮັບ, ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ອາດຈະເກີດຂຶ້ນ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ;
- ໃຫ້ຄວາມຮ່ວມມື ໃນການຕອບສະໜອງ ຂໍ້ມູນຂ່າວສານ ກ່ຽວກັບ ສະພາບສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງທ້ອງຖິ່ນ ໃນຂອບເຂດພື້ນທີ່ໂຄງການລົງທຶນ ແລະ ກິດຈະການຕ່າງໆ ແລະ ພື້ນທີ່ໃກ້ຄຽງ ເພື່ອເປັນຂໍ້ມູນໃນການສ້າງ ບສຕສ/ບປຜສ;
- ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ບສຕສ/ບປຜສ ລວມທັງຂໍ້ມູນບົດລາຍງານຄວາມຄືບໜ້າ ກ່ຽວກັບການຈັດຕັ້ງປະຕິບັດ ມາດຕະການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;
- ເຂົ້າຮ່ວມການຕິດຕາມກວດກາພາກສະໜາມ ແລະ ເປັນເຈົ້າການເຂົ້າຮ່ວມ ກອງປະຊຸມປຶກສາຫາລື ໃນຂັ້ນຕ່າງໆ ເພື່ອປະກອບຄຳເຫັນ ຕໍ່ກັບການສ້າງ ແລະ ທົບທວນ ບສຕສ/ບປຜສ;
- ນຳສະເໜີ ອົງການປົກຄອງທ້ອງຖິ່ຕາມລຳດັບຂັ້ນ ຢ່າງເປັນທາງການ ເພື່ອແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ເກີດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ;
- ເຂົ້າຮ່ວມໃນກິດຈະກຳ ການຕິດຕາມກວດກາ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ມາດຕະການການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ແລະ ມີໜ້າທີ່ລາຍງານໃຫ້ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມລຳດັບຂັ້ນຮັບຊາດ ໃນກໍລະນີທີ່ພົບເຫັນບັນຫາຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ເກີດຂຶ້ນ.

## 4.4 ຂະແໜງການທີ່ທີ່ກ່ຽວຂ້ອງ

ຂະແໜງການທີ່ທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບ ວຽກງານການມີສ່ວນຮ່ວມຂອງມວນຊົນດັ່ງນີ້:

- ເຂົ້າຮ່ວມກອງປະຊຸມປຶກສາຫາລື ຂັ້ນບ້ານ, ເມືອງ, ແຂວງ ແລະ ປະກອບຄໍາເຫັນທາງດ້ານວິຊາການ;
- ປະສານສົມທົບ ແລະ ໃຫ້ການຮ່ວມມື ກັບກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອອໍານວຍຄວາມສະດວກ ໃນການຈັດຕັ້ງກອງປະຊຸມປຶກສາຫາລື.

# 5 ຄາດໝາຍຜົນໄດ້ຮັບຈາກຂະບວນການມີສ່ວນຮ່ວມຂອງມວນຊົນ

ການມີສ່ວນຮ່ວມຂອງມວນຊົນ ສາມາດນໍາເອົາຜົນປະໂຫຍດອັນຫລວງຫລາຍ ມາໃຫ້ແກ່ຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ, ເຈົ້າຂອງໂຄງການ ແລະ ອົງການຈັດຕັ້ງລັດຖະບານ ດັ່ງນີ້:

## 5.1 ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ

ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນໆ ຈະໄດ້ຮັບຜົນປະໂຫຍດຈາກການເຂົ້າຮ່ວມຂະບວນການມີສ່ວນຮ່ວມຂອງມວນຊົນດັ່ງນີ້:

- ໄດ້ຮັບຂໍ້ມູນຂ່າວສານຢ່າງຈະແຈ້ງ ແລະ ຄົບຖ້ວນ ກ່ຽວກັບ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ລວມທັງຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ, ບັນດາທາງເລືອກທີ່ມີ ແລະ ສິດ ແລະ ຄວາມຮັບຜິດຊອບຂອງຊຸມຊົນ;
- ມີໂອກາດໄດ້ສະແດງຄວາມຄິດເຫັນຂອງຕົນ ແລະ ຍົກເອົາບັນຫາຂໍ້ຂ້ອງໃຈຕ່າງໆ ແລະ ມີອິດທະພົນຕໍ່ຂະບວນການຕັດສິນໃຈ ກ່ອນການພິຈາລະນາຮັບຮອງໂຄງການ;
- ປະກອບຄໍາເຫັນ ຕໍ່ກັບ ບສຕສ/ບປຜສ ແລະ ຜຄຕສ ໂດຍຄໍາເຫັນດັ່ງກ່າວ ຕ້ອງປະກອບເຂົ້າຢູ່ໃນ ບົດລາຍງານສະບັບປັບປຸງສຸດທ້າຍ;
- ມີຄວາມເຂົ້າໃຈ ຕໍ່ກັບຜົນກະທົບທີ່ຄາດຄະເນໄວ້ ແລະ ຜົນປະໂຫຍດທີ່ຈະໄດ້ຮັບ ຈາກໂຄງການລົງທຶນ ແລະ ຈະໄດ້ຮັບຜົນປະໂຫຍດຫລາຍຂຶ້ນ ຈາກໂອກາດຕ່າງໆ ທີ່ຕອບສະໜອງ ໂດຍໂຄງການ;
- ເປັນເຈົ້າການເຂົ້າຮ່ວມ ໃນການຕິດຕາມກວດກາໂຄງການ ເພື່ອຮັບປະກັນໃຫ້ໂຄງການປະຕິບັດຕາມພັນທະຕ່າງໆ ແລະ ຄວາມຮັບຜິດຊອບ ທີ່ໄດ້ລະບຸໄວ້ ຢ່າງຄົບຖ້ວນ ໂດຍສົມທຽບກັບເປົ້າໝາຍ ແລະ ຜົນໄດ້ຮັບ;
- ໄດ້ຮັບຜົນປະໂຫຍດ ຈາກກົນໄກການຮ້ອງທຸກ ແລະ ຂະບວນການແກ້ໄຂຂໍ້ຂັດແຍ່ງ ທີ່ມີຄວາມໂປ່ງໃສ, ຍຸຕິທໍາ ແລະ ປອດໄພ ແລະ ມີຄວາມເຂົ້າໃຈແຈ້ງ ກ່ຽວກັບ ຂະບວນການຕັດສິນໃຈ.

## 5.2 ອົງການຈັດຕັ້ງລັດຖະບານ

ອົງການຈັດຕັ້ງລັດຖະບານຈະໄດ້ຮັບຜົນປະໂຫຍດຈາກການຈັດຕັ້ງປະຕິບັດຂະບວນການມີສ່ວນຮ່ວມຂອງມວນຊົນດັ່ງນີ້:

- ສ້າງເງື່ອນໄຂໃຫ້ ປະຊາຊົນທ້ອງຖິ່ນ ໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບ ແນວທາງ, ນະໂຍບາຍ, ຍຸດທະສາດ ແລະ ແຜນການພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ ສູງຂຶ້ນກວ່າເກົ່າ;
- ຜົນປະໂຫຍດ ຈາກການເພີ່ມຄວາມເຊື່ອໝັ້ນວ່າເຈົ້າຂອງໂຄງການ ໄດ້ນໍາເອົາຄວາມຄິດເຫັນຂອງປະຊາຊົນທ້ອງຖິ່ນ ເຂົ້າໃນການວາງແຜນ ແລະ ອອກແບບ ໂຄງການ;
- ສົ່ງເສີມຂອດການປະສານງານລະຫວ່າງຂະແໜງການລັດຖະບານທີ່ກ່ຽວຂ້ອງ ໃນແຕ່ລະຂັ້ນ (ແຂວງ/ນະຄອນຫລວງ ແລະ ເມືອງ) ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງ ໂຄງການລົງທຶນ;
- ສ້າງໂອກາດໃຫ້ຂະແໜງການລັດຖະບານທີ່ກ່ຽວຂ້ອງ ໄດ້ຮັບຂໍ້ມູນຂ່າວສານ ທີ່ຊັດເຈນ ແລະ ຮັບຮູ້ເຖິງ ຄວາມຄິດເຫັນປະຊາຊົນທ້ອງຖິ່ນ ກ່ຽວກັບ ໂຄງການລົງທຶນ ເພື່ອເປັນພື້ນຖານໃນການພິຈາລະນາ ໃນເວລາດໍາເນີນຂະບວນການທົບທວນ ບສຕສ/ບປຜສ, ຜຄຕສ ແລະ ການຕິດຕາມກວດກາ ການຈັດຕັ້ງປະຕິບັດ ຜຄຕສ;
- ຕອບສະໜອງຂໍ້ມູນຂ່າວສານອັນຈໍາເປັນ ໃຫ້ແກ່ລັດຖະບານ ເພື່ອເປັນບ່ອນອີງໃນການພິຈາລະນາຮັບຮອງໂຄງການລົງທຶນ;
- ສ້າງຄວາມເຊື່ອໝັ້ນໃຫ້ແກ່ມວນຊົນ ຕໍ່ກັບຂະບວນການປຶກສາຫາລື ແລະ ຂະບວນການພິຈາລະນາ ໂຄງການທີ່ມີຄວາມໂປ່ງໃສ, ມີຄວາມຮັບຜິດຊອບ ແລະ ມີຄວາມເປັນທໍາ.

## 5.3 ເຈົ້າຂອງໂຄງການ

ເຈົ້າຂອງໂຄງການ ຈະໄດ້ຮັບຜົນປະໂຫຍດ ຈາກການຈັດຕັ້ງປະຕິບັດຂະບວນການມີສ່ວນຮ່ວມຂອງມວນຊົນດັ່ງນີ້:

- ໄດ້ຮັບປະໂຫຍດ ຈາກຄວາມເຂົ້າໃຈຂອງປະຊາຊົນທ້ອງຖິ່ນ ກ່ຽວກັບ ແຜນການພັດທະນາໂຄງການ ເພີ່ມສູງຂຶ້ນ ແລະ ຫລຸດຜ່ອນຄວາມສ່ຽງໃນການເກີດຂໍ້ຂັດແຍ່ງ ຍ້ອນຄວາມບໍ່ເຂົ້າໃຈ ຂອງປະຊາຊົນ ແລະ ຫລີກລ່ຽງຄວາມຫລ້າຊ້າຂອງການພິຈາລະນາອະນຸມັດໂຄງການລົງທຶນ ແລະ ກິດຈະການຕ່າງໆ;
- ຊ່ວຍໃຫ້ເຈົ້າຂອງໂຄງການ ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ຄວາມຕ້ອງການ, ທັດສະນະ ແລະ ຂໍ້ຂ້ອງໃຈຂອງປະຊາຊົນທ້ອງຖິ່ນ ເພື່ອຮັບປະກັນວ່າ ການວາງແຜນ ແລະ ການອອກແບບ ໂຄງການ ສອດຄ່ອງກັບສະພາບຕົວຈິງ ແລະ ມີຂໍ້ມູນຂ່າວສານ ກ່ຽວກັບ ສະພາບຢູ່ທ້ອງຖິ່ນ ຢ່າງຖືກຕ້ອງຄົບຖ້ວນ ເພື່ອຫລີກລ່ຽງ ແລະ ຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ;
- ໄດ້ຮັບຂໍ້ມູນ ທີ່ຈໍາເປັນ ເພື່ອນໍາໃຊ້ໃນການສ້າງ ບສຕສ/ບປຜສ ແລະ ຜຄຕສ.

## 6 ການວາງແຜນ ເພື່ອດຳເນີນການມີສ່ວນຮ່ວມຂອງມວນຊົນ

ກ່ອນການດຳເນີນການມີສ່ວນຮ່ວມຂອງມວນຊົນ, ເຈົ້າຂອງໂຄງການ ຕ້ອງກຳນົດແຜນການດຳເນີນການມີສ່ວນຮ່ວມຂອງມວນຊົນ ໂດຍເປັນສ່ວນສຳຄັນໜຶ່ງຢູ່ໃນບົດລາຍງານ ຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ ສຳລັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຫຼື ແຜນການມີສ່ວນຮ່ວມຂອງມວນຊົນ ສຳລັບການສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ ແລ້ວນຳສະເໜີໃຫ້ ກຊສ ຫຼື ພຊສ ກ່ອນການດຳເນີນການເກັບກຳຂໍ້ມູນ ແລະ ການສ້າງບົດລາຍງານ. ພາຍຫລັງທີ່ໄດ້ຮັບຮອງ ບສຕສ/ບປຜສ, ແຜນການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການຈັດຕັ້ງປະຕິບັດໂຄງການ ຕ້ອງລະບຸເຂົ້າຢູ່ໃນ ຜຄຕສ. ແຜນການມີສ່ວນຮ່ວມຂອງມວນຊົນ ຕ້ອງໄດ້ຮັບການທົບທວນ ແລະ ປັບປຸງ ໃນເວລາທີ່ຕໍ່ອາຍຸໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຢູ່ໃນຕະຫຼອດອາຍຸຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ. ການວາງແຜນກິດຈະກຳການມີສ່ວນຮ່ວມຂອງມວນຊົນ ຕ້ອງປະຕິບັດຕາມຂະບວນການລຸ່ມນີ້:

1. ການກຳນົດຜູ້ມີສ່ວນຮ່ວມ ຫຼື ຜູ້ມີສ່ວນກ່ຽວຂ້ອງທັງໝົດ;
2. ການກຳນົດຂໍ້ມູນຂ່າວສານ ແລະ ວິທີການດຳເນີນການມີສ່ວນຮ່ວມຂອງມວນຊົນ;
3. ການກຳນົດເຕັກນິກ, ເວລາ ແລະ ສະຖານທີ່;
4. ການສັງລວມຜົນຂອງການມີສ່ວນຮ່ວມຂອງມວນຊົນເຂົ້າໃນການ ບປຜສ/ບສຕສ;
5. ການກຳນົດ ບຸກຄະລະກອນ ແລະ ງົບປະມານ.

❖ **ການມີສ່ວນຮ່ວມຂອງມວນຊົນທີ່ດີ ຕ້ອງສະແດງໃຫ້ເຫັນ:**

- **ຄວາມຄົບຖ້ວນ:** ກວມເອົາຜູ້ມີສ່ວນຮ່ວມທັງມົດ ໂດຍບໍ່ມີການຈຳແນກ ກ່ຽວກັບ ເພດ, ຊົນເຜົ່າ, ສາດສະໜາ ຫຼື ສັນຊາດ;
- **ຄວາມເປີດກວ້າງ ແລະ ໂປ່ງໃສ:** ຜູ້ມີສ່ວນຮ່ວມ ມີຄວາມເຂົ້າໃຈ ຂະບວນການ ແລະ ກິດຈະກຳ, ມີການແລກປ່ຽນຂໍ້ມູນຂ່າວສານ ຢ່າງເປີດກວ້າງ ແລະ ກົງໄປກົງມາ, ການປຶກສາຫາລື ໂດຍປາສະຈາກການບັງຄັບ ຫຼື ນາບຂູ່;
- **ຄວາມກ່ຽວຂ້ອງ:** ເນັ້ນນັກໃສ່ ບັນຫາ ທີ່ມີຜົນ ແລະ ປະກອບສ່ວນ ໂດຍກົງ ຕໍ່ການປັບປຸງໂຄງການ ແລະ ຕິດພັນກັບບົດລາຍງານ ແລະ ແຜນຕ່າງໆ;
- **ຄວາມຍຸຕິທຳ:** ດຳເນີນການຢ່າງເປັນທຳ ແລະ ປາສະຈາກການລຳອຽງ ຕໍ່ຜູ້ມີສ່ວນຮ່ວມ ໃດໜຶ່ງ, ການພິຈາລະນາ ຄວາມຄິດເຫັນທັງໝົດ ຢ່າງຖືກຕ້ອງ;
- **ການຊີ້ແຈງ:** ຕໍ່ກັບຄວາມຕ້ອງການ ແລະ ຄວາມຄິດເຫັນ ຂອງຜູ້ມີສ່ວນຮ່ວມ;
- **ຄວາມເຊື່ອໝັ້ນ:** ສ້າງຄວາມໝັ້ນໃຈ ແລະ ຄວາມເຊື່ອໝັ້ນ ລະຫວ່າງຊຸມຊົນທ້ອງຖິ່ນ ແລະ ມວນຊົນອື່ນໆ;

### 6.1 ການກຳນົດຜູ້ມີສ່ວນຮ່ວມ ຫຼື ຜູ້ມີສ່ວນກ່ຽວຂ້ອງທັງໝົດ

ຜູ້ມີສ່ວນຮ່ວມໄດ້ຈັດແບ່ງອອກເປັນ 2 ປະເພດ: (1) ຜູ້ທີ່ຕ້ອງໄດ້ມີສ່ວນຮ່ວມ ແລະ (2) ກຸ່ມທີ່ມີຄວາມສົນໃຈຢາກເຂົ້າຮ່ວມ. ຕາຕະລາງ 1 ກຳນົດ ບຸກຄົນ ຫຼື ກຸ່ມຄົນ ທີ່ມີສ່ວນຮ່ວມໃນຂະບວນການປຶກສາຫາລື.

ໃນການວາງແຜນກິດຈະກຳ ການມີສ່ວນຮ່ວມຂອງມວນຊົນ ໃຫ້ຕິດພັນກັບກຸ່ມຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ທັງໝົດ, ເຈົ້າຂອງໂຄງການ ໂດຍປະສານສົມທົບກັບ ກຊສ ຫຼື ພຊສ ຕ້ອງປະສານງານກັບ ອົງການຈັດຕັ້ງລັດຖະບານທີ່ກ່ຽວຂ້ອງ ແລະ ຜູ້ມີສ່ວນຮ່ວມ ຢູ່ໃນຂັ້ນທ້ອງຖິ່ນ (ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງ, ອົງການຈັດຕັ້ງສັງຄົມຕ່າງໆ) ເພື່ອກຳນົດຜູ້ມີສ່ວນຮ່ວມ ດັ່ງກ່າວ.

### ຕາຕະລາງ 1 ປະເພດກຸ່ມຂອງຜູ້ມີສ່ວນຮ່ວມຫລັກ

| ກຸ່ມທີ່ຕ້ອງເຂົ້າຮ່ວມ | ກຸ່ມທີ່ມີຄວາມສົນໃຈຢາກເຂົ້າຮ່ວມ |
|---|---|
| • ປະຊາຊົນ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ ຈາກໂຄງການ ລວມທັງອົງການຈັດຕັ້ງຂອງບ້ານ<br>• ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ກ່ຽວຂ້ອງ ໃນແຕ່ລະຂັ້ນ<br>• ຂະແໜງການທີ່ກ່ຽວຂ້ອງຫລັກ ໃນແຕ່ລະຂັ້ນ<br>• ຂະແໜງການທີ່ກ່ຽວຂ້ອງ ໃນແຕ່ລະຂັ້ນ<br>• ອົງການປົກຄອງທ້ອງຖິ່ນ(ແຂວງ ແລະ ເມືອງ)<br>• ອົງການຈັດຕັ້ງສັງຄົມຕ່າງໆ | • ຫ້ອງການ ເຂດເລືອກຕັ້ງສະພາແຫ່ງຊາດ<br>• ໂຄງການລົງທຶນຕ່າງໆ ທີ່ອາດໄດ້ຮັບຜົນກະທົບ<br>• ອົງການສາກົນທີ່ເປັນຜູ້ໃຫ້ທຶນຫລັກ ແລະ ຄູ່ຮ່ວມພັດທະນາ<br>• ມະຫາວິທະຍາໄລແຫ່ງຊາດລາວ<br>• ອົງການຈັດຕັ້ງສາກົນ ທີ່ບໍ່ຂຶ້ນກັບລັດຖະບານ<br>• ກຸ່ມຄົນທີ່ມີຄວາມສົນໃຈ |

ໃນການສ້າງແຜນການມີສ່ວນຮ່ວມ, ເຈົ້າຂອງໂຄງການຕ້ອງໄດ້ພິຈາລະນາ ນຳໃຊ້ຕາຕະລາງກຳນົດຜູ້ມີສ່ວນຮ່ວມ ເຊິ່ງຕາຕະລາງດັ່ງກ່າວ ຈະຊ່ວຍໃຫ້ເຈົ້າຂອງໂຄງການ ກຳນົດຜູ້ມີສ່ວນຮ່ວມ ທີ່ກ່ຽວຂ້ອງສະເພາະກັບໂຄງການ, ລະບຸແຈ້ງຜູ້ມີສ່ວນຮ່ວມໃນໂຄງການ ແລະ ສ້າງແຜນ ແລະ ວິທີການ ການມີສ່ວນຮ່ວມ. ຕົວຢ່າງແບບແນະນຳ ໄດ້ລະບຸຢູ່ໃນຕາຕະລາງ 2.

### ຕາຕະລາງ 2 ຕາຕະລາງ ຕົວຢ່າງການກຳນົດຜູ້ມີສ່ວນຮ່ວມ

| ລດ. | ກຸ່ມຜູ້ມີສ່ວນຮ່ວມ | ຫົວຂໍ້/ບັນຫາທີ່ກ່ຽວຂ້ອງ | ຮູບແບບການມີສ່ວນຮ່ວມ |
|---|---|---|---|
| 1 | ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ(ຈັດແບ່ງ ແລະ ກຳນົດລະອຽດ ໂດຍອີງຕາມທີ່ຢູ່ອາໄສຂອງຜູ້ທີ່ໄດ້ຮັບຜົນກະທົບແຕ່ລະຄົນ/ກຸ່ມຄົນ-ໃນກໍລະນີ ກຸ່ມຄົນທີ່ບໍ່ສາມາດຊ່ວຍເຫລືອຕົນເອງໄດ້ ໂດຍຕ້ອງໄດ້ກຳນົດຢ່າງຈະແຈ້ງ ເນື່ອງຈາກວ່າພວກເຂົາເປັນກຸ່ມທີ່ຕ້ອງໄດ້ຮັບຄວາມເອົາໃຈໃສ່ເປັນພິເສດ ເຊິ່ງອາດຈະ | ໄດ້ຮັບຜົນກະທົບທາງກົງ ໂດຍຜ່ານການຈັດສັນຍົກຍ້າຍທີ່ຢູ່ອາໄສ ເຊິ່ງຖືກຮັບຮູ້ສິດຢ່າງຖືກຕ້ອງ ຕາມກົດໝາຍ | ການມີສ່ວນຮ່ວມຜ່ານການເຈລະຈາ ໂດຍກົງ ຢູ່ໃນລະດັບຄອບຄົວ, ຊຸກຍູ້ສົ່ງເສີມ ໃຫ້ເຂົ້າຮ່ວມ ໃນການປຶກສາຫາລືຢູ່ໃນຊຸມຊົນ, ເຂົ້າຮ່ວມການປຶກສາຫາລື ກັບ ກປສສ |

| | | | |
|---|---|---|---|
| | ຕ້ອງການຮູບແບບການມີສ່ວນຮ່ວມ ສະເພາະ) | | |

ຕາຕະລາງກຳນົດຜູ້ມີສ່ວນຮ່ວມ ຕ້ອງໄດ້ສ້າງຂຶ້ນກ່ອນ ໄລຍະການປຶກສາຫາລືແຕ່ເລີ່ມຕົ້ນ ແລະ ປະກອບເຂົ້າຢູ່ໃນແຜນການມີສ່ວນຮ່ວມຂອງມວນຊົນ, ສຳລັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຕ້ອງໄດ້ສ້າງ ບປຜສ ແມ່ນໃຫ້ຄັດຕິດຢູ່ໃນ ບົດລາຍງານຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ ແລ້ວນຳສົ່ງໃຫ້ ກຊສ ເພື່ອທົບທວນຄວາມຄົບຖ້ວນ.

## 6.2 ການກຳນົດຂໍ້ມູນຂ່າວສານ ແລະ ວິທີການດຳເນີນການມີສ່ວນຮ່ວມຂອງມວນຊົນ

ຂໍ້ມູນຂ່າວສານທີ່ຈະຕ້ອງປະຊາສຳພັນໃຫ້ຜູ້ມວນຊົນຮັບຊາບ ປະກອບມີແຕ່ບໍ່ຈຳກັດດັ່ງລຸ່ມນີ້:

- ປະຫວັດຄວາມເປັນມາຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ;
- ລັກສະນະຂອງໂຄງການ: ປະເພດ ແລະ ຂະໜາດຂອງໂຄງການ, ອົງປະກອບຫລັກ, ພື້ນທີ່ຕັ້ງໂຄງການ, ແຜນໄລຍະເວລາການຈັດຕັ້ງປະຕິບັດໂຄງການ ແລະ ໂຄງປະກອບການຈັດຕັ້ງ ໂຄງການ;
- ຂໍ້ມູນພື້ນຖານດ້ານ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;
- ຂໍ້ມູນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ;
- ມາດຕະການຫລຸດຜ່ອນຜົນກະທົບ ເປັນຕົ້ນແມ່ນ ຂໍ້ມູນ ກ່ຽວກັບ ການທົດແທນຄ່າເສຍຫາຍ ແລະ ຈັດສັນຍົກຍ້າຍປະຊາຊົນ;
- ຂໍ້ມູນຂ່າວສານ ກ່ຽວກັບ ແຜນການຈັດຕັ້ງກິດຈະກຳການກໍ່ສ້າງທີ່ເປັນອັນຕະລາຍຕໍ່ມວນຊົນ ເປັນຕົ້ນແມ່ນ: ການລະເບີດຫີນ, ນຳໃຊ້ສານເຄມີ, ຂົນສົ່ງວັດຖຸໜັກ ແລະ ອື່ນໆ;
- ຂໍ້ມູນອື່ນໆທີ່ກ່ຽວຂ້ອງ.

ເຈົ້າຂອງໂຄງການຕ້ອງປະສານສົມທົບກັບ ກຊສ ຫຼື ພຊສ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການດຳເນີນການປຶກສາຫາລື ແລະ ຮັບຟັງຄວາມຄິດເຫັນ ຂອງປະຊາຊົນທ້ອງຖິ່ນ ຫຼື ກຸ່ມຄົນ (ຊາວໜຸ່ມ, ແມ່ຍິງ, ຊົນເຜົ່າ, ຜູ້ທີ່ດ້ອຍໂອກາດ), ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບທາງກົງ ແລະ ທາງອ້ອມ ຈາກໂຄງການລົງທຶນ ກ່ຽວກັບ ແຜນການພັດທະນາໂຄງການ, ຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ ສຳລັບ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ບສຕສ/ບປຜສ ແລະ ຜຄຕສ. ພ້ອມນັ້ນ, ເຈົ້າຂອງໂຄງການ ໂດຍປະສານສົມທົບກັບ ກຊສ ຫຼື ພຊສ ຕ້ອງນຳເອົາ ບສຕສ/ບປຜສ ແລະ ຜຄຕສ ມາປຶກສາຫາລືຮ່ວມກັບປະຊາຊົນທ້ອງຖິ່ນຜູ້ທີ່ໄດ້ຮັບຜົນກະທົບທາງກົງ ແລະ ທາງອ້ອມ ຈາກໂຄງການລົງທຶນ ຢູ່ໃນແຕ່ລະຂັ້ນ (ບ້ານ, ເມືອງ, ແຂວງ/ສູນກາງ).

ການກຳນົດ ວິທີການມີສ່ວນຮ່ວມຂອງມວນຊົນ ຕ້ອງໃຫ້ສອດຄ່ອງ ແລະ ເໝາະສົມກັບກຸ່ມຜູ້ມີສ່ວນຮ່ວມ. ລະດັບ ແລະ ວິທີການມີສ່ວນຮ່ວມຂອງມວນຊົນ. ວິທີການມີສ່ວນຮ່ວມຂອງມວນຊົນ ແມ່ນຫຼາຍວິທີ ແລະ ວິທີທີ່ນຳໃຊ້ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງ ສປປ ລາວ ໂດຍທົ່ວໄປແມ່ນປະກອບມີ 5 ວິທີດັ່ງລຸ່ມນີ້:

## 1. ການເຜີຍແຜ່ຂໍ້ມູນຂ່າວສານ

ເປັນວິທີການໜຶ່ງທີ່ຜູ້ນຳສະເໜີໂຄງການ ສາມາດເຜີຍແຜ່ຂໍ້ມູນໃຫ້ແກ່ມວນຊົນ ໂດຍຜ່ານວິທີການ ດັ່ງນີ້:

- **ການເຜີຍແຜ່ໂດຍຮູບແບບເອກະສານ ເຊັ່ນ:** ບົດລາຍງານ, ຈົດໝາຍຂ່າວ (ເຜີຍແຜ່ໃນໄລຍະເວລາທີ່ກຳນົດແນ່ນອນ), ໜັງສືແຈ້ງການ (ສຳລັບການປ່ຽນແປງໃດໆ ຫຼື ອຸປະຕິເຫດ ທີ່ອາດສ້າງຜົນກະທົບ);
- **ເຜີຍແຜ່ຜ່ານສື່:** ໂດຍກຳນົດເງື່ອນໄຂໄວ້ວ່າ ຕ້ອງພິຈາລະນາ ເຖິງຄວາມສອດຄ່ອງກັບສະພາບຂອງທ້ອງຖິ່ນ ເຊັ່ນ: ວີດີໂອ, ໂທລະພາບ, ວາລະສານ, ແຜ່ນພັບ, ວິທະຍຸ, ເວບໄຊສ;
- **ເຜີຍແຜ່ ຜ່ານລາຍການຂ່າວ :**ໂດຍກຳນົດເງື່ອນໄຂໄວ້ວ່າ ບົດຂ່າວ ຕ້ອງກະທັດຫັດ, ລ່າສຸດ ແລະ ນຳໃຊ້ພາສາທີ່ເໝາະສົມ;
- **ເຜີຍແຜ່ ຢູ່ສູນຂໍ້ມູນຂ່າວສານ ແລະ ປະຊາສຳພັນ:** ໂດຍຢູ່ພາຍໃຕ້ເງື່ອນໄຂ ດັ່ງໄປນີ້: (i) ຕັ້ງຢູ່ສະຖານທີ່ສາມາດເຂົ້າເຖິງສະດວກ ໂດຍມີສອງແຫ່ງ (ສະຖານທີ່ໜຶ່ງ ຢູ່ເຂດຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ອີກໜຶ່ງ ຢູ່ຫ້ອງການຂອງໂຄງການ); (ii) ຕ້ອງມີ ລະບົບຄຸ້ມຄອງທີ່ດີ ແລະ ຂໍ້ມູນຂ່າວສານ ຕ້ອງໄດ້ຮັບການປັບປຸງຢ່າງເປັນປະຈຳ.
- **ເຜີຍແຜ່ຜ່ານກະດານຂ່າວ**: ຕັ້ງຢູ່ພື້ນທີ່ ສາມາດເຂົ້າເຖິງງ່າຍ
- ການທັດສະນະສຶກສາ ຢ້ຽມຢາມໂຄງການ

## 2. ການປຶກສາຫາລື ແລະ ການມີສ່ວນຮ່ວມ

ການສື່ສານສະຫວ່າງສອງຄົນຂຶ້ນໄປ ເຊິ່ງທີ່ຜູ້ນຳສະເໜີ ສາມາດສົ່ງຂໍ້ມູນໃຫ້ແກ່ມວນຊົນ ພ້ອມທັງເປີດໂອກາດໃຫ້ມວນຊົນ ໄດ້ສະແດງຄວາມຄິດເຫັນ ຕໍ່ກັບຂະບວນການຕັດສິນໃຈ ບົດສະເໜີໂຄງການ ໂດຍຜ່ານວິທີການ ສຳພາດ, ສຳຫລວດ, ການເປີດໂອກາດໃຫ້ມວນຊົນ ສະແດງຄຳຄິດເຫັນ (ຕົວຢ່າງ: ສະແດງຄຳຄິດເຫັນ ຜ່ານທາງ ເວບໄຊສ, ໄປສະນີ, ໂທລະສານ) ຫຼື ການປຶກສາຫາລື ໃນກອງປະຊຸມ.

## 3. ການເຂົ້າຮ່ວມ

ການແລກປ່ຽນຂໍ້ມູນ ແລະ ຄວາມຄິດເຫັນ ເຊິ່ງກັນ ແລະ ກັນ ລະຫວ່າງຜູ້ນຳສະເໜີ ແລະ ມວນຊົນ ກ່ຽວກັບຜົນການສຶກສາ, ການສຳຫຼວດ ແລະ ການຄົ້ນຄວ້າວິໄຈ ແລະ ການສ້າງຄວາມເຂົ້າໃຈ ແລະ ການຕົກລົງເຫັນດີ ຕໍ່ກັບໂຄງການ ແລະ ຜົນກະທົບທີ່ເກີດຈາກໂຄງການລວມທັງມາດຕະການແກ້ໄຂຜົນກະທົບ ໂດຍຜ່ານວິທີການ ຕິດຕາມກວດກາ ແລະ ການເຂົ້າຮ່ວມໃນກິດຈະກຳຕ່າງໆ.

## 4. ການເຈລະຈາ

ການປຶກສາຫາລືພາຍໃນ ລະຫວ່າງຜູ້ນຳສະເໜີ ແລະ ຜູ້ມີສ່ວນຮ່ວມຫລັກ ເພື່ອສ້າງຄວາມເຫັນດີເປັນເອກະພາບ ແລະ ບັນລຸວິທີການແກ້ໄຂບັນຫາຮ່ວມກັນ, ຕົວຢ່າງ: ມາດຕະການຫລຸດຜ່ອນຜົນກະທົບ ແລະ ການທົດແທນຄ່າເສຍຫາຍ.

## 5. ການແກ້ໄຂຂໍ້ຄັດແຍ່ງ

ການແກ້ໄຂ ຂໍ້ຄັດແຍ່ງ/ການຮ້ອງທຸກ ກ່ຽວກັບ ບັນຫາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ເກີດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ສາມາດສົ່ງຄຳຮ້ອງທຸກ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ: ໜ່ວຍງານແກ້ໄຂຄຳຮ້ອງທຸກ ຂອງໂຄງການ, ອົງການປົກຄອງທ້ອງຖິ່ນ, ຄະນະກຳມະການໄກ່ເກ່ຍຂັ້ນບ້ານ ໃນແຕ່ລະບ້ານ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢູ່ຂັ້ນທ້ອງຖິ່ນ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຫຼື ສານ.

## 6.3 ກຳນົດເຕັກນິກ, ເວລາ ແລະ ສະຖານທີ່

ໃນການວາງແຜນການມີສ່ວນຮ່ວມ, ເຈົ້າຂອງໂຄງການ ຈະຕ້ອງໄດ້ກຳນົດກິດຈະກຳຕ່າງໆ ທີ່ຈະດຳເນີນໃນແຕ່ໄລຍະ ຂອງການສ້າງ ບສຕສ/ບປຜສ, ກຳນົດເວລາ ຂອງແຕ່ລະກິດຈະກຳ, ກຳນົດພາກສ່ວນທີ່ຮັບຜິດຊອບ, ວິທີການຈັດຕັ້ງປະຕິບັດ, ແຜນງົບປະມານ ແລະ ຂໍ້ມູນອື່ນໆ ທີ່ກ່ຽວຂ້ອງກັບໃນແຕ່ໄລຍະເວລາ ແລະ ຮັບປະກັນທາງດ້ານປະສິດທິພາບ ຂອງການດຳເນີນການມີສ່ວນຮ່ວມຂອງມວນຊົນ. ກ່ອນການນຳໃຊ້ ເຕັກນິກ ແລະ ອຸປະກອນ ເພື່ອຊ່ວຍເຜີຍແຜ່ຂໍ້ມູນ ໃນຂະບວນການມີສ່ວນຮ່ວມຂອງມວນຊົນ, ຕ້ອງໄດ້ມີການທົດລອງກ່ອນ ແລະ ຄຳນຶງເຖິງສະພາບການຈັດຕັ້ງປະຕິບັດທີ່ເໝາະສົມ ແລະ ຮັບປະກັນວ່າ ປະຊາຊົນທ້ອງຖິ່ນ ມີຄວາມເຂົ້າໃຈ ແລະ ສາມາດ ເຂົ້າເຖິງຂໍ້ມູນຂ່າວສານໄດ້ຢ່າງສະດວກ.

ການພິຈາລະນາໂດຍທົ່ວໄປ ທາງດ້ານເຕັກນິກ ແລະ ວິທີການ ກ່ຽວກັບ ການມີສ່ວນຮ່ວມຂອງມວນຊົນ ຢ່າງໜ້ອຍສຸດຕ້ອງປະກອບມີ ດັ່ງນີ້:

- ແຜນການມີສ່ວນຮ່ວມຂອງມວນຊົນ ຈະຕ້ອງກຳນົດແຈ້ງ ເວລາໃດທີ່ຈະດຳເນີນການປຶກສາຫາລື, ປຶກສາຫາລືກັບໃຜ ແລະ ການວາງແຜນການສຸກເສີນ ສຳລັບການປ່ຽນແປງໃນລະຫວ່າງຂະບວນການປຶກສາຫາລື;
- ການປຶກສາຫາລື ຕ້ອງໄດ້ດຳເນີນເປັນພາສາລາວ ແລະ ພາສາຊົນເຜົ່າ ໃນກໍລະນີທີ່ນຳໃຊ້ ປະຈຳວັນ ຫຼື ຜູ້ມີສ່ວນຮ່ວມ ບໍ່ເຂົ້າໃຈພາສາລາວຢ່າງພຽງພໍ ແລະ ໃນກໍລະນີມີຄວາມຈຳເປັນຕ້ອງໄດ້ແປເປັນພາສາຊົນເຜົ່າ;
- ການປຶກສາຫາລື ຕ້ອງຈັດຂຶ້ນຢູ່ໃນສະຖານທີ່ ແລະ ໃນເວລາ ທີ່ມີຄວາມສະດວກສະບາຍສຳລັບຜູ້ມີສ່ວນຮ່ວມຢູ່ທ້ອງຖິ່ນ. ຕ້ອງອຳນວຍຄວາມສະດວກໃຫ້ປະຊາຊົນ ແລະ ຜູ້ມີສ່ວນຮ່ວມ ເດີນທາງມາເຂົ້າຮ່ວມກອງປະຊຸມປຶກສາຫາລື. ການຈັດກອງປະຊຸມ ຕ້ອງຈັດຂຶ້ນຢູ່ໃນລະດູການທີ່ປະຊາຊົນບໍ່ໄດ້ທຳການຜະລິດ ແລະ ເວລາທີ່ແມ່ຍິງມີຄວາມສະດວກ ເຂົ້າຮ່ວມໄດ້(ຕົວຢ່າງ: ບໍ່ຈັດປະຊຸມໃນໄລຍະເວລາແຕ່ງຢູ່ຄົວກິນ);
- ການປຶກສາຫາລື ຕ້ອງເປັນຮູບແບບທີ່ອຳນວຍຄວາມສະດວກ ແລະ ສົ່ງເສີມໂອກາດ ການປຶກສາຫາລື ແລະ ການເຂົ້າຮ່ວມ ຂອງກຸ່ມຊົນເຜົ່າ (ເຊັ່ນ: ຄອບຄົວທຸກຍາກ, ແມ່ຍິງທີ່ເປັນຫົວໜ້າຄອບຄົວ, ຊົນເຜົ່າ ແລະ ເຖົ້າແກ່ແນວໂຮມ);
- ສຳລັບການປຶກສາຫາລື ແລະ ການປະຊາສຳພັນ ແຕ່ລະຄັ້ງ ຕ້ອງກຳນົດເວລາທີ່ພຽງພໍ. ຈຸດປະສົງຂອງການປຶກສາຫາລືຕ້ອງກ່ຽວຂ້ອງກັບຜູ້ມີສ່ວນຮ່ວມ, ເປີດໂອກາດໃຫ້ຜູ້ມີສ່ວນຮ່ວມ ໄດ້ປະກອບຄຳເຫັນ, ສັກຖາມ ແລະ ໄດ້ຮັບຄຳອະທິບາຍຊີ້ແຈງ ຈາກເຈົ້າຂອງໂຄງການ ພ້ອມທັງຮັບນຳໄປພິຈາລະນາເຂົ້າໃນການອອກແບບໂຄງການຄືນ. ສະນັ້ນ, ຈຶ່ງຕ້ອງຈັດສັນເວລາທີ່ພຽງພໍ ເພື່ອໃຫ້ຜູ້ມີສ່ວນຮ່ວມ ໄດ້ສະແດງຄຳເຫັນ ເຊິ່ງຈະຊ່ວຍໃຫ້ເຈົ້າຂອງ

ໂຄງການ ຮັບຮູ້, ເຂົ້າໃຈ ແລະ ໄດ້ຮັບຜົນປະໂຫຍດ ຈາກການສະແດງທັດສະນະ, ຄວາມຕ້ອງການ ແລະ ຂໍ້ຂ້ອງໃຈ ຂອງປະຊາຊົນທ້ອງຖິ່ນ;

- ການນຳໃຊ້ເຄື່ອງມືສື່ສານ ຕ້ອງມີຄວາມກ່ຽວຂ້ອງ ແລະ ເໝາະສົມ, ສະໜອງຂໍ້ມູນທີ່ຄົບຖ້ວນ ກ່ຽວກັບໂຄງການ ແລະ ຜົນກະທົບ ດ້ານບວກ ແລະ ດ້ານລົບ ແລະ ເຄື່ອງມືດັ່ງກ່າວ ສາມາດເຂົ້າໃຈງ່າຍ, ເໝາະສົມກັບວັດທະນະທຳ ແລະ ຄວາມສາມາດ ຂອງທ້ອງຖິ່ນ. ຮູບພາບ ແລະ ວິທີການປະຊາສຳພັນດ້ວຍບົດຄວາມສື່ສານ ຕ້ອງໄດ້ນຳໃຊ້ ຖ້າມີຄວາມເປັນໄປໄດ້. ພິຈາລະນານຳໃຊ້ບົດສະຫລຸບຫຍໍ້ ແລະ ຮູບແບບບົດສະເໜີ ທີ່ຈະແຈ້ງ ເປັນບູລິມະສິດທຳອິດ.

## 6.4 ການສັງລວມເອົາຜົນການມີສ່ວນຮ່ວມຂອງມວນຊົນ ເຂົ້າໃນ ບສຕສ/ບປຜສ

ເຈົ້າຂອງໂຄງການ ຕ້ອງໄດ້ບັນທຶກ ແລະ ເກັບຮັກສາ ຄຳເຫັນ, ຄວາມຄິດເຫັນ, ຂໍ້ແນະນຳ ແລະ ຂໍ້ຂ້ອງໃຈ ທັງໝົດ ຂອງຜູ້ມີສ່ວນຮ່ວມ ໄວ້ຢ່າງຄົບຖ້ວນ ເພື່ອເປັນຂໍ້ມູນໃຫ້ແກ່ອົງການຈັດຕັ້ງລັດຖະບານ ໃນການກວດກາ. ຄຳເຫັນທີ່ໄດ້ຮັບ, ສັນຍາທີ່ກ່ຽວຂ້ອງກັບເຈົ້າຂອງໂຄງການ ແລະ ວິທີການທີ່ນຳໃຊ້ ເພື່ອປັບປຸງການອອກແບບໂຄງການ ແລະ ມາດຕະການຫລຸດຜ່ອນ ຕ້ອງເກັບຮັກສາໄວ້ ແລະ ເຜີຍແຜ່ໃຫ້ມວນຊົນ ຮັບຊາບ ແລະ ຄັດຕິດຢູ່ໃນ ບສຕສ/ບປຜສ.

ການມີສ່ວນຮ່ວມຂອງມວນຊົນແມ່ນມີບົດບາດສຳຄັນ ໃນການປັບປຸງ ບປຜສ/ບສຕສ ແລະ ຜຄຕສ ແລະ ການອອກແບບໂຄງການ. ສະນັ້ນ, ການລວມເອົາຄວາມຄິດເຫັນທີ່ໄດ້ຮັບມາບັນຈຸເຂົ້າໃນ ບສຕສ/ບປຜສ ແລະ ຜຄຕສ ແມ່ນມີຄວາມຈຳເປັນ ແລະ ເປັນຂໍ້ຜູກມັດທາງດ້ານກົດໝາຍ ຂອງເຈົ້າຂອງໂຄງການ. ແຜນການມີສ່ວນຮ່ວມຂອງມວນຊົນ ຕ້ອງກຳນົດວ່າ ຄວາມຄິດເຫັນທີ່ໄດ້ຮັບຈາກຜູ້ມີສ່ວນຮ່ວມ ຈະໄດ້ຮັບການແກ້ໄຂ ໂດຍສອດຄ່ອງກັບບົດແນະນຳສະບັບນີ້ ດ້ວຍວິທີການໃດ.

## 6.5 ການກຳນົດບຸກຄະລະກອນ ແລະ ງົບປະມານ

ເຈົ້າຂອງໂຄງການ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ທີ່ຕິດພັນກັບການດຳເນີນການມີສ່ວນຂອງມວນຊົນໃນທຸກຂັ້ນຕອນ ຂອງຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຫຼື ການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຕ້ອງກຳນົດ ແລະ ສະໜອງ ງົບປະມານ ໃຫ້ພຽງພໍ(ລວມທັງງົບປະມານ ສຳລັບຊັບພະຍາກອນມະນຸດ ແລະ ອຸປະກອນ) ເພື່ອຮັບປະກັນການຈັດຕັ້ງປະຕິບັດແຕ່ລະກິດຈະກຳຂອງການດຳເນີນການມີສ່ວນຮ່ວມຂອງມວນຊົນ ໃນແຕ່ລະໄລຍະ ຢ່າງມີປະສິດທິຜົນ. ການຄາດຄະເນງົບປະມານ ຕ້ອງພິຈາລະນາຮອບດ້ານດັ່ງນີ້:

- **ການຈັດກອງປະຊຸມປຶກສາຫາລື:** ຜູ້ພັດທະນາໂຄງການ ຕ້ອງຮັບຜິດຊອບ ຄ່າເດີນທາງ, ຄ່າກິນຢູ່ພັກເຊົາ ຂອງຜູ້ເຂົ້າຮ່ວມ (ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການ ແລະ ອົງການຈັດຕັ້ງລັດທີ່ກ່ຽວຂ້ອງທັງຂັ້ນສູນກາງ ແລະ ທ້ອງຖິ່ນ), ຄ່າເຊົ່າຫ້ອງປະຊຸມ, ຄ່າບໍລິຫານ ແລະ ຄ່າສິ້ນເປືອງອື່ນໆ;

- **ການສ້າງຕັ້ງສູນປະຊາສໍາພັນ:** ຜູ້ພັດທະນາໂຄງການ ຕ້ອງຮັບຜິດຊອບ ຄ່າປຸກສ້າງສູນປະຊາສໍາພັນ, ຄ່າເກັບກໍາ ແລະ ສະໜອງ ຂໍ້ມູນຂ່າວສານ ລວມທັງຄ່າບູລະນະຮັກສາຕະຫລອດໄລຍະໂຄງການ ແລະ ກິດຈະການຕ່າງໆ;
- ການເຜີຍແຜ່ຂໍ້ມູນ ໂດຍຜ່ານສື່ຕ່າງໆ;
- ການໄປທັດສະນະສຶກສາ ຢ້ຽມຢາມໂຄງການ ຕາມຄວາມເຫມາະສົມ.

ນອກຈາກງົບປະມານ ທີ່ໄດ້ກໍານົດສໍາລັບແຕ່ລະກິດຈະກໍາແລ້ວ, ເຈົ້າຂອງໂຄງການ ຕ້ອງຮັບຜິດຊອບງົບປະມານເພີ່ມເຕີມ ໃນການດໍາເນີນການມີສ່ວນຂອງມວນຊົນ ໃນກໍລະນີງົບປະມານ ບໍ່ພຽງພໍ ຫລື ມີກິດຈະກໍາໃດໜຶ່ງທີ່ບໍ່ໄດ້ກໍານົດຢູ່ໃນແຜນງົບປະມານ ແຕ່ເຫັນວ່າມີຄວາມຈໍາເປັນ. ເຈົ້າຂອງໂຄງການຕ້ອງໄດ້ກໍານົດ ງົບປະມານສຸກເສີນໄວ້ ສໍາລັບເຫດການດັ່ງກ່າວ ໃນໄລຍະການວາງແຜນ ການມີສ່ວນຮ່ວມຂອງມວນຊົນ.

## 7 ຂັ້ນຕອນການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ໂດຍອີງຕາມ ຄໍາແນະນໍາວ່າດ້ວຍ ຂະບວນການສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ, ຂັ້ນຕອນການມີສ່ວນຮ່ວມຂອງມວນຊົນ ປະກອບມີ 5 ຂັ້ນຕອນ ຄື:

(1) ການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການກະກຽມ ແລະ ຮັບຮອງ ບົດລາຍງານການກໍານົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ;

(2) ການມີສ່ວນຮ່ວມຂອງມວນຊົນໃນໄລຍະເກັບກໍາຂໍ້ມູນ ເພື່ອສ້າງ ບສຕສ/ບປຜສ;

(3) ການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການສ້າງ ແລະ ທົບທວນ ບສຕສ/ບປຜສ;

(4) ການມີສ່ວນຮ່ວມຂອງມວນຊົນ ໃນໄລຍະກໍ່ສ້າງ ແລະ ດໍາເນີນໂຄງການ;

(5) ການມີສ່ວນຮ່ວມຂອງມວນຊົນ ໃນໄລຍະກະກຽມປິດໂຄງການ;

**ເຊິ່ງໃນແຕ່ໄລຍະ ປະກອບດ້ວຍບາດກ້າວ ດັ່ງລຸ່ມນີ້:**

1. ຄາດຄະເນຜົນທີ່ຈະໄດ້ຮັບ
2. ຜູ້ມີສ່ວນຮ່ວມຫລັກ
3. ການວາງແຜນ ແລະ ການກະກຽມການມີສ່ວນຮ່ວມຂອງມວນຊົນ
4. ການດໍາເນີນການມີສ່ວນຮ່ວມຂອງມວນຊົນ
5. ການລາຍງານຜົນການມີສ່ວນຮ່ວມຂອງມວນຊົນ

## 7.1 ການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການສ້າງ ແລະ ຮັບຮອງ ບົດລາຍງານການກໍານົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ

ການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການກະກຽມ ແລະ ຮັບຮອງ ບົດລາຍງານການກໍານົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ ແມ່ນໃຊ້ສໍາລັບ ໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຕ້ອງໄດ້ດໍາເນີນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ເທົ່ານັ້ນ ໂດຍສອດຄ່ອງກັບ ຂໍ້ 2.3 ຂອງຄໍາແນະນໍາ ວ່າດ້ວຍຂະບວນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ, ສະບັບເລກທີ **8030/**ກຊສ, ລົງວັນທີ 17 ທັນວາ **2013.**

### 7.1.1 ຄາດໝາຍຜົນໄດ້ຮັບ

ເຈົ້າຂອງໂຄງການ ມີພັນທະໃນການຮັບປະກັນວ່າ ການຈັດຕັ້ງປະຕິບັດຂະບວນການມີສ່ວນຮ່ວມຂອງມວນຊົນໃນໄລຍະນີ ຕ້ອງໄດ້ບັນລຸຜົນຕາມການຄາດໝາຍຜົນໄດ້ຮັບດັ່ງລຸ່ມນີ້:

- ຂໍ້ມູນ ກ່ຽວກັບ ສະພາບສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທໍາມະຊາດ ຢູ່ໃນພື້ນທີ່ໂຄງການ ແລະ ພື້ນທີ່ໃກ້ຄຽງກັບໂຄງການລວມທັງ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມແລະ ສິ່ງແວດລ້ອມທໍາມະຊາດ ເບື້ອງຕົ້ນ ເພື່ອເປັນພື້ນຖານໃນການສ້າງ ບົດລາຍງານການກໍານົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ ສໍາລັບການດໍາເນີນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ;
- ປະຊາຊົນທ້ອງຖິ່ນ, ຜູ້ທີ່ຄາດວ່າຈະໄດ້ຮັບຜົນກະທົບຈາກໂຄງການ, ອົງການປົກຄອງຂັ້ນບ້ານ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ແຂວງ ໄດ້ຮັບຂໍ້ມູນ ກ່ຽວກັບ ແຜນພັດທະນາທະນາໂຄງການ, ຜົນກະທົບດ້ານບວກ ແລະ ດ້ານລົບທີ່ຄາດຄະເນຈະເກີດຂຶ້ນຈາກການພັດທະນາໂຄງການ;
- ກໍານົດຜູ້ມີສ່ວນຮ່ວມ ແລະ ວິທີການດໍາເນີນການມີສ່ວນຮ່ວມຂອງມວນຊົນ ສໍາລັບການດໍາເນີນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ;
- ປະຊາຊົນທ້ອງຖິ່ນ, ຜູ້ທີ່ຄາດວ່າຈະໄດ້ຮັບຜົນກະທົບຈາກໂຄງການ, ອົງການປົກຄອງຂັ້ນບ້ານ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ແຂວງ ໄດ້ມີສ່ວນຮ່ວມໃນຂະບວນການພັດທະນາໂຄງການ ໃນໄລຍະການສຶກສາຄວາມເປັນໄປໄດ້ ແລະ ການອອກແບບໂຄງການເບື້ອງຕົ້ນ;
- ສໍາເລັດການສ້າງ ແລະ ຮັບຮອງ ບົດລາຍງານການກໍານົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ ສໍາລັບການດໍາເນີນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ.

### 7.1.2 ຜູ້ມີສ່ວນຮ່ວມຫລັກ

ຜູ້ມີສ່ວນຮ່ວມຫລັກ ແມ່ນໄດ້ແບ່ງອອກເປັນສອງໄລຍະດັ່ງລຸ່ມນີ້:

- **ຜູ້ມີສ່ວນຮ່ວມຫລັກ ໃນໄລຍະການສ້າງ ບົດລາຍງານການກໍານົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ ປະກອບມີ**: ບັນດາບ້ານຕ່າງໆ ທີ່ຄາດວ່າຈະໄດ້ຮັບຜົນກະທົບຈາກໂຄງການ, ຫຊສ, ພຊສ, ຫ້ອງວ່າການ

ປົກຄອງເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ແຂວງ ລວມທັງ ປກຊ ແລະ ປກສ ໃນກໍລະນີມີຄວາມຈໍາເປັນ.

- **ຜູ້ມີສ່ວນຮ່ວມຫລັກ ໃນໄລຍະການທົບທວນ ບົດລາຍງານການກໍານົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ ປະກອບມີ:** ກຊສ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ເປັນຕົ້ນແມ່ນຂະແໜງການຮັບຜິດຊອບໂຄງການລົງທຶນ ແລະ ກິດຈະການຕ່າງໆ.

### 7.1.3 ການວາງແຜນ ແລະ ການກະກຽມການມີສ່ວນຮ່ວມຂອງມວນຊົນ

ເຈົ້າຂອງໂຄງການ ເປັນເຈົ້າການຫລັກໃນການ ວາງແຜນ ແລະ ກະກຽມການມີສ່ວນຮ່ວມຂອງມວນຊົນ ໂດຍປະສານສົມທົບກັບ ຫຊສ ຕ້ອງດໍາເນີນຕາມຂະບວນການລຸ່ມນີ້:

- ກະກຽມແຜນການມີສ່ວນຮ່ວມຂອງມວນຊົນ ຊຶ່ງປະກອບມີ: ກໍານົດບ້ານ, ຜູ້ມີສ່ວນຮ່ວມ, ຮູບແບບ, ວິທີການ, ຄ່າໃຊ້ຈ່າຍ ແລະ ເອກະສານທີ່ກ່ຽວຂ້ອງ ທີ່ຈະນໍາໃຊ້ ໃນການດໍາເນີນການມີສ່ວນຮ່ວມຂອງມວນຊົນ ໂດຍໃຫ້ສອດຄ່ອງກັບຂັ້ນຕອນໃນການວາງແຜນການມີສ່ວນຮ່ວມຂອງມວນຊົນ ໃນຂໍ້ 6.
- ນໍາສົ່ງໜັງສືສະເໜີ ພ້ອມຄັດຕິດ ເອກະສານທີ່ຈະນໍາໃຊ້ທັງໝົດຫາ ຫຊສ ເພື່ອປະສານງານກັບ ອົງການປົກຄອງເມືອງ, ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງຂັ້ນບ້ານ ຢ່າງໜ້ອຍ 15 ວັນລັດຖະການ ແລະ ຫຊສ ຕ້ອງສົ່ງໜັງສືແຈ້ງການເຖິງ ອົງການປົກຄອງຂັ້ນບ້ານ ຢ່າງໜ້ອຍ 5 ວັນ ລັດຖະການ ກ່ອນການດໍາເນີນການມີສ່ວນຮ່ວມຂອງມວນຊົນ. ພ້ອມດຽວກັນນີ້ ເຈົ້າຂອງໂຄງການ ຕ້ອງສະເໜີເຖິງ ພຊສ ເພື່ອແຕ່ງຕັ້ງວິຊາການຢ່າງໜ້ອຍ 1 ທ່ານເຂົ້າຮ່ວມ.

### 7.1.4 ວິທີການ ແລະ ກິດຈະກໍາດໍາເນີນການມີສ່ວນຮ່ວມຂອງມວນຊົນ

**ວິທີການມີສ່ວນຮ່ວມຂອງມວນຊົນແມ່ນປະກອບມີ:**

- ການເຜີຍແຜ່ຂໍ້ມູນຂ່າວສານ, ການສໍາພາດ ແລະ ປຶກສາຫາລືຮ່ວມກັບອົງການປົກຄອງບ້ານ ພ້ອມດ້ວຍ ຂະແໜງການທີ່ກ່ຽວຂ້ອງເມືອງ ແລະ ແຂວງ ໄລຍະເກັບກໍາຂໍ້ມູນເພື່ອສ້າງ ບົດລາຍງານການກໍານົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ; ແລະ
- ປຶກສາຫາລືກັບ ກຊສ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ໃນໄລຍະທົບທວນ ແລະ ຮັບຮອງ ບົດລາຍງານການກໍານົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກບົດລາຍງານ.

**ເຈົ້າຂອງໂຄງການຕ້ອງ ດໍາເນີນກິດຈະກໍາ ການມີສ່ວນຮ່ວມຂອງມວນຊົນດັ່ງນີ້:**

- ເຜີຍແຜ່ ຂໍ້ມູນຂ່າວສານກ່ຽວກັບແຜນພັດທະນາໂຄງການ ຢູ່ໃນແຕ່ລະບ້ານທີ່ຄາດວ່າ ຈະໄດ້ຮັບຜົນກະທົບຈາກໂຄງການ ຊຶ່ງປະກອບມີ: ຈຸດປະສົງຂອງໂຄງການ, ທີ່ຕັ້ງ, ເນື້ອທີ່, ປະເພດ ແລະ ຂະໜາດຂອງໂຄງການ, ອົງປະກອບ ແລະ ກິດຈະກໍາຕ່າງໆຂອງໂຄງການ ແລະ ອື່ນໆ;
- ສໍາພາດ ຫລື ປຶກສາຫາຫລືກັບອົງການປົກຄອງບ້ານ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ແຂວງ ເພື່ອເກັບກໍາຂໍ້ມູນ ກ່ຽວກັບ ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ສໍາລັບການສ້າງບົດລາຍງານການກໍານົດ

ຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ ສຳລັບການດຳເນີນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;

- ປະຊຸມປຶກສາຫາລືກັບ ກຊສ ໃນໄລຍະການທົບທວນ ແລະ ຮັບຮອງ ບົດລາຍງານການກຳນົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ.
- ບັນທຶກ ເອົາຄຳເຫັນຕ່າງໆ ແລະ ທັດສະນະ ຂອງອົງການປົກຄອງບ້ານ, ປະຊາຊົນທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອສ້າງເປັນບົດບັນທຶກກອງປະຊຸມປຶກສາຫາລື ທີ່ມີການຢັ້ງຢືນຈາກອົງການປົກຄອງບ້ານ, ເມືອງ ແລະ ເຈົ້າຂອງໂຄງການ.

### 7.1.5 ການລາຍງານຜົນການດຳເນີນການມີສ່ວນຮ່ວມຂອງມວນຊົນ

ຫລັງຈາກສຳເລັດການດຳເນີນການມີສ່ວນຮ່ວມ ຫລື ປຶກສາຫາລືທຸກຄັ້ງ, ເຈົ້າຂອງໂຄງການ ຕ້ອງ:

- ສ້າງບົດລາຍງານ ການມີສ່ວນຮ່ວມຂອງມວນຊົນ ໃຫ້ສອດຄ່ອງກັບ ບົດແນະນຳການຂຽນ ບປຜສ ພ້ອມທັງຮັບປະກັນບົດລາຍງານດັ່ງກ່າວປະກອບມີເອກະສານຄັດຕິດທີ່ຄົບຖ້ວນຄື: ບົດບັນທຶກກອງປະຊຸມປຶກສາຫາລື, ລາຍຊື່ຜູ້ເຂົ້າຮ່ວມ, ເອກະສານທີ່ນຳໃຊ້ທັງໝົດ ແລະ ຮູບພາບບັນຍາກາດຕົວຈິງ;
- ນຳສົ່ງ ບົດລາຍງານການມີສ່ວນຮ່ວມຂອງມວນຊົນ ຫາ ພຊສ, ຫຊສ, ອົງການປົກຄອງເມືອງ ແລະ ບັນດາບ້ານທີ່ໄດ້ປຶກສາຫາລື;
- ສັງລວມເອົາຄຳເຫັນຕ່າງໆ ແລະ ທັດສະນະ ຂອງອົງການປົກຄອງບ້ານ, ປະຊາຊົນທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອນຳໃຊ້ເປັນຂໍ້ມູນສຳຄັນ ໃຫ້ແກ່ການສ້າງບົດລາຍງານການກຳນົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ;
- ຄັດຕິດ ບົດລາຍງານການມີສ່ວນຮ່ວມຂອງມວນຊົນ ເປັນເອກະສານຊ້ອນທ້າຍຂອງບົດລາຍງານການກຳນົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ ແລະ ນຳສົ່ງຫາ ກຊສ ເພື່ອທົບທວນ ແລະ ຮັບຮອງ.

## 7.2 ການມີສ່ວນຮ່ວມຂອງມວນຊົນໃນໄລຍະການເກັບກຳຂໍ້ມູນເພື່ອສ້າງ ບສຕສ/ບປຜສ

ການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການເກັບກຳຂໍ້ມູນເພື່ອສ້າງ ບສຕສ/ບປຜສ ແມ່ນສຸມໃສ່ວຽກງານການເກັບກຳຂໍ້ມູນທີ່ຈຳເປັນສຳລັບການສ້າງ ບສຕສ/ບປຜສ ແລະ ຜຄຕສ. ສະນັ້ນ, ການມີສ່ວນຮ່ວມຂອງມວນຊົນໃນຂັ້ນຕອນນີ້ຄວນໃຫ້ຄວາມສຳຄັນ ແລະ ລົງເລິກ ເປັນພິເສດ ເຊິ່ງເປັນໂອກາດ ທີ່ຈະເຮັດໃຫ້ໂຄງການ ໄດ້ຮັບຄວາມເຫັນດີຈາກປະຊາຊົນທ້ອງຖິ່ນແຕ່ເລີ່ມຕົ້ນ ແລະ ສ້າງເງື່ອນໄຂສະດວກ ໃຫ້ແກ່ການເຈລະຈາ ແລະ ການປຶກສາຫາລື ໃນໄລຍະການທົບທວນ ບສຕສ/ບປຜສ ໂດຍ ພຊສ ຫຼື ກຊສ.

### 7.2.1 ຄາດໝາຍຜົນໄດ້ຮັບ

ເຈົ້າຂອງໂຄງການ ມີພັນທະໃນການຮັບປະກັນວ່າ ການຈັດຕັ້ງປະຕິບັດຂະບວນການມີສ່ວນຮ່ວມຂອງມວນຊົນໃນໄລຍະນີ້ ຕ້ອງໄດ້ບັນລຸຜົນຕາມການຄາດໝາຍຜົນໄດ້ຮັບດັ່ງລຸ່ມນີ້:

- ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ອົງການປົກຄອງຂັ້ນບ້ານ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ແຂວງ ໄດ້ມີຄວາມເຂົ້າໃຈດີຂຶ້ນ ກ່ຽວກັບແຜນພັດທະນາທະນາໂຄງການ, ລັກສະນະຂອງໂຄງການ, ຜົນປະໂຫຍດ ແລະ ຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ທີ່ຄາດຄະເນຈະເກີດຂຶ້ນຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ລວມທັງຄວາມໝາຍຄວາມສຳຄັນ ແລະ ຂັ້ນຕອນການມີສ່ວນຮ່ວມຂອງມວນຊົນ.

- ຂໍ້ມູນ ກ່ຽວກັບ ສະພາບສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ຢູ່ໃນຂອບເຂດໂຄງການ, ຂໍ້ມູນສະຖິຕິຈາກບ້ານ ແລະ ເມືອງ ແລະ ຂໍ້ມູນອື່ນໆ ລວມທັງຄຳຄິດເຫັນ, ຂໍ້ຂ້ອງໃຈ ແລະ ຂໍ້ສະເໜີຂອງ ປະຊາຊົນຜູ້ທີ່ຄາດວ່າຈະໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນໆ ເພື່ອເປັນຂໍ້ມູນພື້ນຖານໃນການສ້າງ ແລະ ສັງລວມເຂົ້າເປັນ ບສຕສ/ບປຜສ ແລະ ຜຄຕສ.

### 7.2.2 ຜູ້ມີສ່ວນຮ່ວມຫລັກ

ຜູ້ມີສ່ວນຮ່ວມຫລັກ ໃນໄລຍະການເກັບກຳຂໍ້ມູນເພື່ອສ້າງ ບສຕສ/ບປຜສ ປະກອບມີ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຫລື ຕາງໜ້າກຸ່ມຄົນ (ຊາວໜຸ່ມ, ແມ່ຍິງ, ຊົນເຜົ່າ, ຜູ້ທີ່ດ້ອຍໂອກາດ, ບໍ່ສາມາດຊ່ວຍເຫລືອຕົນເອງໄດ້), ອົງການປົກຄອງບ້ານ, ຫ້ອງວ່າການປົກຄອງເມືອງ, ຕາງໜ້າຈາກ ກຊສ, ພຊສ, ຫຊສ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ລວມທັງ ປກຊ ແລະ ປກສ ໃນກໍລະນີມີຄວາມຈຳເປັນ.

### 7.2.3 ການວາງແຜນ ແລະ ການກະກຽມການມີສ່ວນຮ່ວມຂອງມວນຊົນ

ເຈົ້າຂອງໂຄງການ ເປັນເຈົ້າການຫລັກໃນການວາງແຜນ ແລະ ກະກຽມການມີສ່ວນຮ່ວມຂອງມວນຊົນ ໂດຍປະສານສົມທົບກັບ ກຊສ (ສຳລັບ ບປຜສ) ຫລື ພຊສ (ສຳລັບ ບສຕສ) ຕ້ອງດຳເນີນຕາມຂະບວນການລຸ່ມນີ້:

- ເຈົ້າຂອງໂຄງການຕ້ອງສ້າງແຜນກິດຈະກຳ ເຊິ່ງກຳນົດບ້ານທີ່ຈະດຳເນີນການເກັບກຳຂໍ້ມູນ ແລະ ການປຶກສາຫາລື. ແຜນດັ່ງກ່າວນີ້ ຕ້ອງປະກອບມີ ບົດສະເໜີ ກ່ຽວກັບ ແຜນພັດທະນາໂຄງການ ແລະ ຂໍ້ມູນໂຄງການ, ກຳນົດຜູ້ມີສ່ວນຮ່ວມ, ວິທີການມີສ່ວນຮ່ວມ ແລະ ເຜີຍແຜ່ຂໍ້ມູນ, ວັນເວລາ, ສະຖານທີ່ ແລະ ແຜນງົບປະມານ ລວມທັງ ວາລະກອງປະຊຸມຂັ້ນບ້ານ ເພື່ອຮັບປະກັນໃຫ້ການມີສ່ວນຮ່ວມຂອງມວນຊົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

- ແຜນການມີສ່ວນຮ່ວມຂອງມວນຊົນ ຕ້ອງນຳສົ່ງໃຫ້ ກຊສ ຫຼື ພຊສ ເພື່ອທົບທວນ ແລະ ຮັບຮອງແຜນດັ່ງກ່າວໃຫ້ຮັບປະກັນການນຳໃຊ້ພາສາ, ເຄື່ອງມື ແລະ ວິທີການ ທີ່ເໝາະສົມ ກັບສະພາບຂອງທ້ອງຖິ່ນ ແລະ ມີຄວາມເຂົ້າໃຈ ແລະ ຕອບສະໜອງ ເວລາ ແລະ ງົບປະມານ ໃຫ້ພຽງພໍ ເພື່ອຮັບປະກັນການບັນລຸຄາດໝາຍຜົນໄດ້ຮັບ. ກຊສ ຫລື ພຊສ ຕ້ອງດຳເນີນການທົບທວນແຜນການມີສ່ວນຮ່ວມຂອງມວນຊົນຕ້ອງໃຫ້ສຳເລັດພາຍໃນ 5 ວັນ ລັດຖະການ ແລະ ກະກຽມບົດນຳສະເໜີ ກ່ຽວກັບ ການມີສ່ວນຮ່ວມຂອງມວນຊົນໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃຫ້ສຳເລັດກ່ອນການດຳເນີນການມີສ່ວນຮ່ວມຂອງມວນຊົນ.

- ***ໃນກໍລະນີ ບປຜສ***, ກຊສ ໂດຍປະສານສົມທົບກັບເຈົ້າຂອງໂຄງການ ໃນການກະກຽມ ແລະ ນຳສົ່ງ ແຈ້ງການ ຫຼື ບັດເຊີນ ລວມທັງເອກະສານທີ່ກ່ຽວຂ້ອງ ເຖິງພາກສ່ວນທີ່ກ່ຽວຂ້ອງຫາ ພຊສ ເພື່ອປະສານງານກັບ ຫຊສ ຢ່າງໜ້ອຍ 15 ວັນລັດຖະການ. ຫຊສ ຕ້ອງປະສານກັບ ຫ້ອງວ່າການປົກຄອງເມືອງ, ຂະແໜງການທີ່ກ່ຽວຂ້ອງ ຂັ້ນເມືອງ ແລະ ອົງການປົກຄອງຂັ້ນບ້ານ ຢ່າງໜ້ອຍ 5 ວັນລັດຖະການ ກ່ອນການດຳເນີນການມີສ່ວນຮ່ວມ ຂອງມວນຊົນ.

- ***ໃນກໍລະນີ ບສຕສ***, ພຊສ ໂດຍປະສານສົມທົບກັບເຈົ້າຂອງໂຄງການ ໃນການກະກຽມ ແລະ ນຳສົ່ງ ແຈ້ງການ ຫຼື ບັດເຊີນ ລວມທັງເອກະສານທີ່ກ່ຽວຂ້ອງ ເຖິງພາກສ່ວນທີ່ກ່ຽວຂ້ອງຫາ ຫຊສ ຢ່າງໜ້ອຍ 10 ວັນລັດຖະການ ເພື່ອປະສານງານກັບ ຫ້ອງວ່າການປົກຄອງເມືອງ, ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງຂັ້ນບ້ານ ຢ່າງໜ້ອຍ 5 ວັນລັດຖະການ ກ່ອນການດຳເນີນການມີສ່ວນຮ່ວມຂອງມວນຊົນ.

### 7.2.4 ວິທີການ ແລະ ກິດຈະກຳການມີສ່ວນຮ່ວມຂອງມວນຊົນ

ວິທີການມີສ່ວນຮ່ວມຂອງມວນຊົນໃນໄລຍະນີ້ ແມ່ນປະກອບມີ ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ປຶກສາຫາລືຂັ້ນບ້ານ, ເກັບກຳຂໍ້ມູນໂດຍການ ສຳພາດຜູ້ທີ່ໄດ້ຮັບຜົນກະທົບ, ອົງການປົກຄອງບ້ານ ແລະ ຂະແໜງການທີ່ກ່ຽວຂ້ອງ, ການລົງສຳຫລວດພື້ນທີ່ພາກສະໜາມເພື່ອເກັບກຳຂໍ້ມູນຕົວຈິງ. ກິດຈະກຳການມີສ່ວນຮ່ວມຂອງມວນຊົນປະກອບມີດັ່ງນີ້:

❖ **ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ປຶກສາຫາລືຂັ້ນບ້ານ:**

ກຊສ ຫລື ພຊສ ເປັນເຈົ້າການຫລັກໃນການດຳເນີນກອງປະຊຸມເຜີຍແຜ່ຂໍ້ມູນຂ່າວສານ ແລະ ປຶກສາຫາລືຂັ້ນບ້ານ ໂດຍປະສານສົມທົບກັບເຈົ້າຂອງໂຄງການ ຕາມຂະບວນການລຸ່ມນີ້:

- ເຈົ້າຂອງໂຄງການ ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບແຜນພັດທະນາໂຄງການ ຢູ່ໃນແຕ່ລະບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຊຶ່ງປະກອບມີ: ຈຸດປະສົງຂອງໂຄງການ, ທີ່ຕັ້ງ, ເນື້ອທີ່, ປະເພດ ແລະ ຂະໜາດຂອງໂຄງການ, ອົງປະກອບ ແລະ ກິດຈະກຳຕ່າງໆຂອງໂຄງການ ແລະ ອື່ນໆ.
- **<u>ໃນກໍລະນີໂຄງການ ບປຜສ</u>**, ທີມງານວິຊາການຂອງ ກຊສ ເຜີຍແຜ່ ຄວາມໝາຍຄວາມສຳຄັນ ແລະ ຂັ້ນຕອນການມີສ່ວນຮ່ວມຂອງມວນຊົນໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ.
- **<u>ໃນກໍລະນີໂຄງການ ບສຕສ,</u>** ທີມງານວິຊາການຂອງ ພຊສ ເຜີຍແຜ່ ຄວາມໝາຍຄວາມສຳຄັນ ແລະ ຂັ້ນຕອນການມີສ່ວນຮ່ວມຂອງມວນຊົນໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ.
- ເປີດໂອກາດ ແລະ ອຳນວຍຄວາມສະດວກໃຫ້ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ ໃນການປະກອບຄຳຄິດຄຳເຫັນ, ຂໍ້ຂ້ອງໃຈ ແລະ ຂໍ້ສະເໜີຕ່າງໆ ກ່ຽວກັບ ໂຄງການລົງທຶນ ຕໍ່ ເຈົ້າຂອງໂຄງການ.

- ເຈົ້າຂອງໂຄງການຮ່ວມກັບ ກຊສ ຫລື ພຊສ ຕ້ອງບັນທຶກ ຄຳຄິດຄຳເຫັນ, ຂໍ້ຂ້ອງໃຈ ແລະ ຂໍ້ສະເໜີຕ່າງໆ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ ເພື່ອສ້າງເປັນບົດບັນທຶກກອງປະຊຸມປຶກສາຫາລື ທີ່ມີການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ເມືອງ, ທຊສ, ພຊສ, ກຊສ ແລະ ເຈົ້າຂອງໂຄງການ ຫລື ຕາງໜ້າຜູ້ບໍລິການດ້ານສິ່ງແວດລ້ອມ.

❖ **ການລົງສຳພາດ ແລະ ສຳຫລວດພາກສະໜາມ:**

- ເຈົ້າຂອງໂຄງການ ຮ່ວມກັບຕາງໜ້າວິຊາການຂອງ ກຊສ, ພຊສ , ທຊສ ແລະ ຫ້ອງວ່າການປົກຄອງເມືອງ ດຳເນີນການສຳພາດ ນາຍບ້ານ ແລະ ຄອບຄົວຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ເພື່ອເກັບກຳຂໍ້ມູນສະຖິຕິ ບ້ານລວມທັງ ຂໍ້ມູນເສດຖະກິດ-ສັງຄົມ, ການສຶກສາ, ສຸຂະພາບ, ການນຳໃຊ້ຊັບພະຍາກອນທຳມະຊາດ (ທີ່ດິນ, ແຫຼ່ງນ້ຳ ແລະ ປ່າໄມ້), ພື້ນຖານໂຄງລ່າງ, ຮີດຄອງປະເພນີ, ວັດທະນາທຳ ແລະ ອື່ນໆ.
- ເຈົ້າຂອງໂຄງການ ຮ່ວມກັບຕາງໜ້າວິຊາການຂອງ ກຊສ, ພຊສ , ທຊສ, ຫ້ອງວ່າການປົກຄອງເມືອງ; ຂະແໜງການທີ່ກ່ຽວຂ້ອງ, ຄະນະບ້ານ, ປກຊ ແລະ ປກສ (ໃນກໍລະນີມີຄວາມຈຳເປັນ) ລົງສຳຫລວດພາກສະໜາມ ແລະ ເກັບຕົວຢ່າງຂໍ້ມູນພື້ນຖານໃຫ້ຄົບຖ້ວນ ລວມທັງ ຈັບຈຸດພິກັດ ແລະ ບັນທຶກຮູບພາບ ຫລື ວີດີໂອຂອງສະພາບພື້ນທີ່ໂຄງການຕົວຈິງກ່ອນການດຳເນີນການກໍ່ສ້າງໂຄງການ.
- ລວບລວມ ແລະ ວິເຄາະ ເພື່ອຄັດເລືອກຂໍ້ມູນທີ່ຖືກຕ້ອງທາງດ້ານຫລັກວິທະຍາສາດ ແລະ ບັນຈຸເຂົ້າໃນ ບສຕສ ຫລື ບປຜສ.

## 7.2.5 ການລາຍງານຜົນການດຳເນີນການມີສ່ວນຮ່ວມຂອງມວນຊົນ

ຫລັງຈາກສຳເລັດການດຳເນີນການມີສ່ວນຮ່ວມ ຫລື ປຶກສາຫາລືທຸກຄັ້ງ, ເຈົ້າຂອງໂຄງການຕ້ອງ

- ສ້າງບົດລາຍງານ ການມີສ່ວນຮ່ວມຂອງມວນຊົນ ໃຫ້ສອດຄ່ອງກັບ ບົດແນະນຳການຂຽນ ບສຕສ/ບປຜສ ພ້ອມທັງຮັບປະກັນບົດລາຍງານດັ່ງກ່າວປະກອບມີເອກະສານຄັດຕິດທີ່ຄົບຖ້ວນຄື: ບົດບັນທຶກກອງປະຊຸມປຶກສາຫາລື, ລາຍຊື່ຜູ້ເຂົ້າຮ່ວມ, ເອກະສານທີ່ນຳໃຊ້ທັງໝົດ ແລະ ຮູບພາບບັນຍາກາດຕົວຈິງ.
- ນຳສົ່ງ ບົດລາຍງານການມີສ່ວນຮ່ວມຂອງມວນຊົນຫາ ພຊສ, ທຊສ, ອົງການປົກຄອງເມືອງ ແລະ ບັນດາບ້ານທີ່ໄດ້ປຶກສາຫາລື.
- ສັງລວມເອົາຄຳຄິດຄຳເຫັນ, ຂໍ້ຂ້ອງໃຈ ແລະ ຂໍ້ສະເໜີຕ່າງໆ ຂອງອົງການປົກຄອງບ້ານ, ປະຊາຊົນທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອນຳໃຊ້ເປັນຂໍ້ມູນສຳຄັນ ໃຫ້ແກ່ການສ້າງ ບສຕສ ຫລື ບປຜສ ແລະ ຜຄຕສ.
- ຄັດຕິດ ບົດລາຍງານການມີສ່ວນຮ່ວມຂອງມວນຊົນ ເປັນເອກະສານຊ້ອນທ້າຍຂອງ ບສຕສ/ບປຜສ.

## 7.3 ການມີສ່ວນຮ່ວມຂອງມວນຊົນໃນໄລຍະການສ້າງ ແລະ ທົບທວນ ບສຕສ/ບປຜສ

ການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການສ້າງ ແລະ ທົບທວນ ບສຕສ/ບປຜສ ແມ່ນສຸມໃສ່ ການຈັດກອງປະຊຸມປຶກສາຫາລືຂັ້ນຕ່າງໆ ເພື່ອເຜີຍແຜ່ຮ່າງ ບສຕສ/ບປຜສ ແລະ ຜຄຕສ ແລະ ປະກອບຄຳເຫັນ ເພື່ອປັບປຸງ ບສຕສ/ບປຜສ ແລະ ຜຄຕສ ຮັບປະກັນໃຫ້ມີເນື້ອໃນລະອຽດ, ຈະແຈ້ງ, ຄົບຖ້ວນ ແລະ ສົມບູນ ກ່ອນນຳສົ່ງຫາ ພຊສ ຫລື ກຊສ ເພື່ອດຳເນີນການທົບທວນ ແລະ ພິຈາລະນາຮັບຮອງ ບສຕສ/ບປຜສ ແລະ ຜຄຕສ.

### 7.3.1 ຄາດໝາຍຜົນໄດ້ຮັບ

ເຈົ້າຂອງໂຄງການ ມີພັນທະໃນການຮັບປະກັນວ່າ ການຈັດຕັ້ງປະຕິບັດຂະບວນການມີສ່ວນຮ່ວມຂອງມວນຊົນໃນໄລຍະນີ ຕ້ອງໄດ້ບັນລຸຜົນຕາມການຄາດໝາຍຜົນໄດ້ຮັບດັ່ງລຸ່ມນີ້:

- ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ອົງການປົກຄອງຂັ້ນບ້ານ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ແຂວງ ໄດ້ມີຄວາມເຂົ້າໃຈເລິກເຊິ່ງ ກ່ຽວກັບ ບສຕສ ຫລື ບປຜສ ແລະ ຜຄຕສ ເປັນຕົ້ນແມ່ນ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ທີ່ສຳຄັນ, ມາດຕະການຫລຸດຜ່ອນຜົນກະທົບ, ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ (ຖ້າມີ) ແລະ ຂະບວນການມີສ່ວນຮ່ວມຂອງມວນຊົນໃນໄລຍະການກໍ່ສ້າງ ແລະ ດຳເນີນໂຄງການ ລວມທັງງົບປະມານໃນການຈັດຕັ້ງປະຕິບັດ ແລະ ຕິດຕາມກວດການຈັດຕັ້ງປະຕິບັດ ຜຄຕສ.
- ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ, ຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ມີສ່ວນຮ່ວມອື່ນໆ ໄດ້ມີສ່ວນຮ່ວມ ໃນຂະບວນການສ້າງ ແລະ ທົບທວນ ບສຕສ/ບປຜສ ເພື່ອປະກອບຄຳຄິດເຫັນ, ຂໍ້ຂ້ອງໃຈ ແລະ ຂໍ້ສະ ເໜີຕ່າງໆ ຕໍ່ບົດລາຍງານດັ່ງກ່າວເລີ່ມແຕ່ສະບັບທຳອິດ ຈົນເຖິງສະບັບຮັບຮອງສຸດທ້າຍ ຢ່າງຕໍ່ເນື່ອງ.
- ຄຳຄິດເຫັນ, ຂໍ້ຂ້ອງໃຈ ແລະ ຂໍ້ສະເໜີທັງໝົດຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ, ຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ມີສ່ວນຮ່ວມອື່ນໆ ໄດ້ຖືກພິຈາລະນາ ແລະ ບັນຈຸເຂົ້າໃນການປັບປຸງ ບສຕສ/ບປຜສ ແລະ ຜຄຕສ ໃຫ້ມີເນື້ອໃນລະອຽດ, ຈະແຈ້ງ, ຄົບຖ້ວນ ແລະ ສົມບູນ ເພື່ອຮັບປະກັນຄວາມເຫັນດີເປັນເອກະພາບ ແລະ ການສະໜັບສະໜູນໃຫ້ມີການພັດທະນາໂຄງການ ຈາກປະຊາຊົນຜູ້ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນ ທັງນີ້ກໍ່ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຕໍ່ກັບອົງການຈັດຕັ້ງຂອງລັດ ແລະ ເຈົ້າຂອງໂຄງການ ແລະ ຫລຸດຜ່ອນຂໍ້ຂັດແຍ່ງ.
- ພຊສ ຫລື ກຊສ ພິຈາລະນາ ອອກ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຮັບຮອງ ບສຕສ/ບປຜສ ແລະ ຜຄຕສ ບົນພື້ນຖານຄວາມສອດຄ່ອງກັບນະໂຍບາຍ, ກົດໝາຍ, ແລະ ລະບຽບການ ແລະ ບົດແນະນຳວິຊາການທີ່ກ່ຽວຂ້ອງ ແລະ ໄດ້ຜ່ານຂະບວນການມີສ່ວນຮ່ວມຂອງມວນຊົນທີ່ມີຄວາມໂປ່ງໃສ ແລະ ໄດ້ຮັບການເຫັນດີຈາກປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ.

### 7.3.2 ຜູ້ມີສ່ວນຮ່ວມຫລັກ

ຜູ້ມີສ່ວນຮ່ວມຫລັກ ໃນໄລຍະການສ້າງ ແລະ ທົບທວນ ບສຕສ/ບປຜສ ປະກອບມີ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຫລື ຕາງໜ້າກຸ່ມຄົນ (ຊາວໜຸ່ມ, ແມ່ຍິງ, ຊົນເຜົ່າ, ຜູ້ທີ່ດ້ອຍໂອກາດ, ບໍ່ສາມາດຊ່ວຍເຫລືອຕົນເອງໄດ້), ອົງການປົກຄອງບ້ານ, ຫ້ອງວ່າການປົກຄອງເມືອງ, ຕາງໜ້າຈາກ ກຊສ, ພຊສ, ຫຊສ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ, ແຂວງ ແລະ ສູນກາງ ລວມທັງ ຜູ້ທີ່ມີຄວາມສົນໃຈອື່ນໆ: ອົງການຈັດຕັ້ງສັງຄົມຕ່າງໆ, ອົງການຈັດຕັ້ງສາກົນ, ຜູ້ໃຫ້ທຶນ ແລະ ອື່ນໆ ຊຶ່ງໄດ້ຈັດແບ່ງອອກເປັນ 02 ກຸ່ມຜູ້ມີສ່ວນຮ່ວມ ດັ່ງທີ່ໄດ້ສະແດງຢູ່ໃນຕາຕະລາງ 3 ແລະ 4 ດັ່ງນີ້.

ຕາຕະລາງ 3 ກຸ່ມຜູ້ມີສ່ວນຮ່ວມຫລັກ ສຳລັບ ໂຄງການ ບປຜສ

| ກອງປະຊຸມປຶກສາຫາລື | ກຸ່ມທີ່ຕ້ອງໄດ້ເຂົ້າຮ່ວມ | ກຸ່ມທີ່ມີຄວາມສົນໃຈຢາກ ເຂົ້າຮ່ວມ |
|---|---|---|
| ຂັ້ນບ້ານ | ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ທັງໝົດ, ຕາງໜ້າກຸ່ມຄົນ (ຊາວໜຸ່ມ, ແມ່ຍິງ, ຊົນເຜົ່າ, ຜູ້ທີ່ດ້ອຍໂອກາດ, ບໍ່ສາມາດຊ່ວຍເຫລືອຕົນເອງໄດ້), ອົງການປົກຄອງບ້ານ, ຄະນະກຸ່ມບ້ານ, ກຊສ, ພຊສ , ຫຊສ, ຂະແໜງການຮັບຜິດຊອບໂຄງການຂັ້ນເມືອງ ແລະ ຫ້ອງວ່າການປົກຄອງເມືອງ. | ຜູ້ໃຫ້ທຶນ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ, ອົງການຈັດຕັ້ງລັດທີ່ມີຄວາມສົນໃຈ, ອົງການຈັດຕັ້ງສັງຄົມຕ່າງໆ, ອົງການຈັດຕັ້ງສາກົນ, ມະຫາວິທະຍາໄລ ແລະ ຜູ້ທີ່ມີຄວາມສົນໃຈອື່ນໆ. |
| ຂັ້ນເມືອງ | ຕາງໜ້າປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ (ເປັນຕົ້ນແມ່ນຜູ້ທີ່ຍັງມີຂໍ້ຂອງໃຈທີ່ຍັງບໍ່ໄດ້ຮັບການແກ້ໄຂ) ອົງການປົກຄອງ (ນາຍບ້ານ, ແນວໂຮມ, ຊາວໜຸ່ມ ແລະ ແມ່ຍິງ), ຄະນະກຸ່ມບ້ານ, ຕາງໜ້າຊົນເຜົ່າ ແລະ ຜູ້ທີ່ບໍ່ສາມາດຊ່ວຍ ເຫລືອໂຕເອງໄດ້, ກຊສ, ພຊສ, ຫຊສ, ຕາງໜ້າຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ, ຂະແໜງການຮັບຜິດຊອບໂຄງການຂັ້ນແຂວງ, ອົງການຈັດຕັ້ງມະຫາຊົນ ແລະ ແນວລາວສ້າງຊາດຂັ້ນເມືອງ ແລະ ຫ້ອງວ່າການປົກຄອງເມືອງ. | ຜູ້ໃຫ້ທຶນ, ອົງການຈັດຕັ້ງລັດທີ່ມີຄວາມສົນໃຈ, ອົງການຈັດຕັ້ງສັງຄົມຕ່າງໆ, ອົງການຈັດຕັ້ງສາກົນ, ມະຫາວິທະຍາໄລ ແລະ ຜູ້ທີ່ມີຄວາມສົນໃຈອື່ນໆ. |
| ລົງພາກສະໜາມ ແລະ | ຕາງໜ້າປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ (ເປັນຕົ້ນ | ຜູ້ໃຫ້ທຶນ, ອົງການຈັດຕັ້ງລັດທີ່ມີຄວາມ |

| | | |
|---|---|---|
| ກອງປະຊຸມຂັ້ນວິຊາການ | ແມ່ນຜູ້ທີ່ຍັງມີຂໍ້ຂ້ອງໃຈທີ່ຍັງບໍ່ໄດ້ຮັບການແກ້ໄຂ), ນາຍບ້ານ, ກຊສ, ພຊສ, ທຊສ, ຂະແໜງການທີ່ກ່ຽວຂອງຂັ້ນເມືອງ, ແຂວງ ແລະ ສູນກາງ, ປກຊ ແລະ ປກສ (ໃນກໍລະນີ ຈໍາເປັນ). | ສົນໃຈ, ອົງການຈັດຕັ້ງສັງຄົມຕ່າງໆ, ອົງການຈັດຕັ້ງສາກົນ, ມະຫາວິທະຍາໄລ ແລະ ຜູ້ທີ່ມີຄວາມສົນໃຈອື່ນໆ. |
| ຂັ້ນແຂວງ/ສູນກາງ | ຕາງໜ້າປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ (ເປັນຕົ້ນແມ່ນຜູ້ທີ່ຍັງມີຂໍ້ຂ້ອງໃຈທີ່ຍັງບໍ່ໄດ້ຮັບການແກ້ໄຂ), ນາຍບ້ານ, ກຊສ, ພຊສ, ທຊສ, ຂະແໜງການທີ່ກ່ຽວຂອງຂັ້ນເມືອງ, ແຂວງ ແລະ ສູນກາງ ແລະ ຫ້ອງວ່າການປົກຄອງແຂວງ. | ຜູ້ໃຫ້ທຶນ, ອົງການຈັດຕັ້ງລັດທີ່ມີຄວາມສົນໃຈ, ອົງການຈັດຕັ້ງສັງຄົມຕ່າງໆ, ອົງການຈັດຕັ້ງສາກົນ, ມະຫາວິທະຍາໄລ ແລະ ຜູ້ທີ່ມີຄວາມສົນໃຈອື່ນໆ. |

### ຕາຕະລາງ 4 ກຸ່ມຜູ້ມີສ່ວນຮ່ວມຫລັກ ສໍາລັບ ໂຄງການ ບສຕສ

| ກອງປະຊຸມປຶກສາຫາລື | ກຸ່ມທີ່ຕ້ອງໄດ້ເຂົ້າຮ່ວມ | ກຸ່ມທີ່ມີຄວາມສົນໃຈຢາກ ເຂົ້າຮ່ວມ |
|---|---|---|
| ຂັ້ນບ້ານ | ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ທັງໝົດ, ຕາງໜ້າກຸ່ມຄົນ (ຊາວໜຸ່ມ, ແມ່ຍິງ, ຊົນເຜົ່າ, ຜູ້ທີ່ດ້ອຍໂອກາດ, ບໍ່ສາມາດຊ່ວຍເຫລືອຕົນເອງໄດ້), ອົງການປົກຄອງບ້ານ, ຄະນະກຸ່ມບ້ານ, ພຊສ, ທຊສ, ຂະແໜງການຮັບຜິດຊອບໂຄງການຂັ້ນເມືອງ ແລະ ຫ້ອງວ່າການປົກຄອງເມືອງ. | ຜູ້ໃຫ້ທຶນ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ, ອົງການຈັດຕັ້ງລັດທີ່ມີຄວາມສົນໃຈ, ອົງການຈັດຕັ້ງສັງຄົມຕ່າງໆ, ອົງການຈັດຕັ້ງສາກົນ, ມະຫາວິທະຍາໄລ ແລະ ຜູ້ທີ່ມີຄວາມສົນໃຈອື່ນໆ. |
| ຂັ້ນເມືອງ | ຕາງໜ້າປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ (ເປັນ ຕົ້ນແມ່ນຜູ້ທີ່ຍັງມີຂໍ້ຂ້ອງໃຈທີ່ຍັງບໍ່ໄດ້ຮັບການແກ້ໄຂ) ອົງການປົກຄອງ (ນາຍບ້ານ, ແນວໂຮມ, ຊາວໜຸ່ມ ແລະ ແມ່ຍິງ), ຄະນະກຸ່ມບ້ານ, ຕາງໜ້າຊົນເຜົ່າ ແລະ ຜູ້ທີ່ບໍ່ສາມາດຊ່ວຍເຫລືອໂຕເອງໄດ້, ພຊສ, ທຊສ , ຕາງໜ້າ ກຊສ, ຂະ ແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ຂັ້ນແຂວງ, ອົງການຈັດຕັ້ງມະຫາຊົນ ແລະ ແນວລາວສ້າງຊາດຂັ້ນເມືອງ ແລະ ຫ້ອງວ່າການປົກຄອງເມືອງ. | ຜູ້ໃຫ້ທຶນ, ອົງການຈັດຕັ້ງລັດທີ່ມີຄວາມສົນໃຈ, ອົງການຈັດຕັ້ງສັງຄົມຕ່າງໆ, ອົງການຈັດຕັ້ງສາກົນ, ມະຫາວິທະຍາໄລ ແລະ ຜູ້ທີ່ມີຄວາມສົນໃຈອື່ນໆ |

| | | |
|---|---|---|
| ລົງພາກສະໜາມ ແລະ ກອງປະຊຸມຂັ້ນວິຊາການ (ໃນກໍລະນີມີຄວາມຈໍາເປັນ) | ຕາງໜ້າປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ (ເປັນຕົ້ນແມ່ນຜູ້ທີ່ຍັງມີຂໍ້ຂອງໃຈທີ່ຍັງບໍ່ໄດ້ຮັບການແກ້ໄຂ), ນາຍບ້ານ, ພຊສ, ທຊສ, ຕາງໜ້າງ ກຊສ, ຂະແໜງການທີ່ກ່ຽວຂອງຂັ້ນເມືອງ ແລະ ແຂວງ, ປກຊ ແລະ ປກສ (ໃນກໍລະນີ ຈໍາເປັນ) | ຜູ້ໃຫ້ທຶນ, ອົງການຈັດຕັ້ງລັດທີ່ມີຄວາມສົນໃຈ, ອົງການຈັດຕັ້ງສັງຄົມຕ່າງໆ, ອົງການຈັດຕັ້ງສາກົນ, ມະຫາວິທະຍາໄລ ແລະ ຜູ້ທີ່ມີຄວາມສົນໃຈອື່ນໆ |

### 7.3.3 ການກະກຽມ ແລະ ກະກຽມ ແຜນການມີສ່ວນຮ່ວມຂອງມວນຊົນ

ເຈົ້າຂອງໂຄງການ ເປັນເຈົ້າການຫລັກໃນການ ວາງແຜນ ແລະ ກະກຽມການມີສ່ວນຮ່ວມຂອງມວນຊົນ ໂດຍປະສານສົມທົບກັບ ກຊສ (ສໍາລັບ ບປຜສ) ຫລື ພຊສ (ສໍາລັບ ບສຕສ) ຕ້ອງດໍາເນີນຕາມຂະບວນການລຸ່ມນີ້:

- ກ່ອນການດໍາເນີນການປຶກສາຫາລືແຕ່ລະຂັ້ນ, ເຈົ້າຂອງໂຄງການຕ້ອງສ້າງແຜນການດໍາເນີນການມີສ່ວນຮ່ວມຂອງມວນຊົນ ໂດຍປະຕິບັດຕາມ 05 ຂັ້ນຕອນຂອງການວາງແຜນການມີສ່ວນຮ່ວມຂອງມວນຊົນທີ່ໄດ້ລະບຸໄວ້ໃນຂໍ້ 6 ຂອງບົດແນະນໍາສະບັບນີ້ ແລະ ນໍາສົ່ງໃຫ້ ກຊສ ຫຼື ພຊສ ເພື່ອທົບທວນ ແລະ ຮັບຮອງແຜນດັ່ງກ່າວ ໃຫ້ຮັບປະກັນການນໍາໃຊ້ພາສາ, ເຄື່ອງມື ແລະ ວິທີການ ທີ່ເໝາະສົມ ກັບສະພາບຂອງທ້ອງຖິ່ນ ແລະ ມີຄວາມເຂົ້າໃຈ ແລະ ຕອບສະໜອງ ເວລາ ແລະ ງົບປະມານ ໃຫ້ພຽງພໍ ເພື່ອຮັບປະກັນການບັນລຸຄາດໝາຍຜົນໄດ້ຮັບ.
- ກຊສ ຫລື ພຊສ ຕ້ອງດໍາເນີນການທົບທວນແຜນການມີສ່ວນຮ່ວມຂອງມວນຊົນຕ້ອງໃຫ້ສໍາເລັດພາຍໃນ 5 ວັນລັດຖະການ ແລະ ກະກຽມບົດນໍາສະເໜີ ກ່ຽວກັບ ການມີສ່ວນຮ່ວມຂອງມວນຊົນໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃຫ້ສໍາເລັດກ່ອນການດໍາເນີນການມີສ່ວນຮ່ວມຂອງມວນຊົນ.
- ກຊສ ຫລື ພຊສ ໂດຍປະສານສົມທົບກັບເຈົ້າຂອງໂຄງການ ໃນການກະກຽມ ແລະ ນໍາສົ່ງ ແຈ້ງການ ຫຼື ບັດເຊີນ ລວມທັງເອກະສານທີ່ກ່ຽວຂ້ອງ ເຖິງພາກສ່ວນທີ່ກ່ຽວຂ້ອງລ່ວງໜ້າກອນການດໍາເນີນກອງປະຊຸມປຶກສາຫາລືແຕ່ລະຂັ້ນ ຊຶ່ງກໍານົດເວລາການປະສານງານ ແລະ ນໍາສົ່ງເອກະສານ ຫາພາກສ່ວນທີ່ກ່ຽວຂ້ອງແມ່ນໄດ້ລະບຸໄວ້ໃນຕາຕະລາງລຸ່ມນີ້:

ຕາຕະລາງ 5 ກໍານົດເວລາໃນການການປະສານງານ ແລະ ນໍາສົ່ງເອກະສານ ຫາພາກສ່ວນທີ່ກ່ຽວຂ້ອງ

| ກອງປະຊຸມປຶກສາຫາລື | ໂຄງການ ບປຜສ | ໂຄງການ ບສຕສ |
|---|---|---|
| ຂັ້ນບ້ານ | • ກຊສ ນໍາສົ່ງ ແຈ້ງການ ຫຼື ບັດເຊີນ ລວມທັງເອກະສານທີ່ກ່ຽວຂ້ອງເຖິງ ພຊສ ເພື່ອປະສານງານກັບ ທຊສ ລ່ວງໜ້າຢ່າງໜ້ອຍ 15 ວັນລັດຖະການ;<br>• ພາຍຫລັງທີ່ໄດ້ຮັບໜັງສືແຈ້ງການຈາກ ພຊສ, ທຊສ ຕ້ອງປະສານກັບ ຫ້ອງ | • ພຊສ ນໍາສົ່ງ ແຈ້ງການ ຫຼື ບັດເຊີນ ລວມທັງເອກະສານທີ່ກ່ຽວຂ້ອງເຖິງ ທຊສ ຢ່າງໜ້ອຍ 10 ວັນລັດຖະການ;<br>• ພາຍຫລັງທີ່ໄດ້ຮັບໜັງສືແຈ້ງການຈາກ ພຊສ, ທຊສ ປະສານງານ ກັບຫ້ອງວ່າການປົກຄອງເມືອງ, ຂະແໜງການທີ່ |

| ກອງປະຊຸມປຶກສາຫາລື | ໂຄງການ ບປຜສ | ໂຄງການ ບສຕສ |
|---|---|---|
| | ວ່າການປົກຄອງເມືອງ, ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງຂັ້ນບ້ານ ລ່ວງໜ້າຢ່າງໜ້ອຍ 5 ວັນລັດຖະການ | ກ່ຽວ ຂ້ອງຂັ້ນເມືອງ ແລະ ອົງການປົກຄອງຂັ້ນບ້ານລ່ວງໜ້າຢ່າງໜ້ອຍ 5 ວັນລັດຖະການ. |
| ຂັ້ນເມືອງ | • ກຊສ ນຳສົ່ງ ແຈ້ງການ ຫຼື ບັດເຊີນ ລວມທັງເອກະສານທີ່ກ່ຽວຂ້ອງເຖິງ ຂະແໜງການທີ່ກ່ຽວຂອງຂັ້ນສູນກາງ ແລະ ພຊສ ລ່ວງໜ້າຢ່າງໜ້ອຍ 15ວັນລັດຖະການ;<br>• ພາຍຫລັງທີ່ໄດ້ຮັບໜັງສືແຈ້ງການຈາກ ກຊສ, ພຊສ ຕ້ອງປະສານງານຫາຂະແໜງການທີ່ຮັບຜິດຊອບໂຄງການຂັ້ນແຂວງ ແລະ ຫຊສ ລ່ວງໜ້າຢ່າງໜ້ອຍ 10 ວັນລັດຖະການ;<br>• ພາຍຫລັງທີ່ໄດ້ຮັບໜັງສືແຈ້ງການຈາກ ພຊສ, ຫຊສ ຕ້ອງປະສານກັບ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງຂັ້ນບ້ານ ລ່ວງໜ້າຢ່າງໜ້ອຍ 5 ວັນລັດຖະການ | • ພຊສ ນຳສົ່ງ ແຈ້ງການ ຫຼື ບັດເຊີນລວມທັງເອກະສານທີ່ກ່ຽວຂ້ອງເຖິງ ຫຊສ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ຢ່າງໜ້ອຍ 10 ວັນລັດຖະການ;<br>• ພາຍຫລັງທີ່ໄດ້ຮັບໜັງສືແຈ້ງການຈາກ ພຊສ, ຫຊສ ປະສານງານ ກັບຫ້ອງວ່າການປົກຄອງເມືອງ, ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງຂັ້ນບ້ານລ່ວງໜ້າຢ່າງໜ້ອຍ 5 ວັນລັດຖະການ. |
| ຂັ້ນວິຊາການ | • ກຊສ ນຳສົ່ງ ແຈ້ງການ ຫຼື ບັດເຊີນ ລວມທັງເອກະສານທີ່ກ່ຽວຂ້ອງເຖິງ ຂະແໜງການທີ່ກ່ຽວຂອງຂັ້ນສູນກາງ ແລະ ພຊສ ລ່ວງໜ້າຢ່າງໜ້ອຍ 15 ວັນລັດຖະການ;<br>• ພາຍຫລັງທີ່ໄດ້ຮັບໜັງສືແຈ້ງການຈາກ ກຊສ, ພຊສ ຕ້ອງປະສານງານຫາຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ແລະ ຫຊສ ລ່ວງໜ້າຢ່າງໜ້ອຍ 10 ວັນລັດຖະການ;<br>• ພາຍຫລັງທີ່ໄດ້ຮັບໜັງສືແຈ້ງການຈາກ ພຊສ, ຫຊສ ຕ້ອງປະສານກັບ ຂະ ແໜງການທີ່ກ່ຽວຂ້ອງຂັ້ນເມືອງ ແລະ ອົງການປົກຄອງຂັ້ນບ້ານ ລ່ວງໜ້າຢ່າງໜ້ອຍ 5 ວັນລັດຖະການ | • ໃນກໍລະນີມີຄວາມຈຳເປັນຕ້ອງມີການລົງກວດກາພາກສະໜາມ ແລະ ຈັດກອງປະຊຸມວິຊາການ, ກຳນົດເວລາໃນການປະສານງານ ແລະ ນຳສົ່ງເອກະສານຫາພາກສ່ວນທີ່ກ່ຽວຂ້ອງ ໃຫ້ປະຕິບັດຄືກັນກັບ ກອງປະຊຸມຂັ້ນເມືອງ. |
| ຂັ້ນແຂວງ/ສູນກາງ | • ກຳນົດເວລາໃນການປະສານງານ ແລະ ນຳສົ່ງເອກະສານຫາພາກສ່ວນທີ່ກ່ຽວຂ້ອງໃຫ້ປະຕິບັດຄືກັນກັບ ກອງປະຊຸມຂັ້ນວິຊາການ. | |

### 7.3.4 ວິທີການ ແລະ ກິດຈະກຳການມີສ່ວນຮ່ວມຂອງມວນຊົນ

ວິທີການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການສ້າງ ແລະ ທົບທວນ ບສຕສ ຫລື ບປຜສ ແມ່ນນຳໃຊ້ ຮູບແບບການປຶກສາຫາລືຂັ້ນບ້ານ, ຂັ້ນເມືອງ, ການລົງພາກສະໜາມຕົວຈິງ ແລະ ກອງປະຊຸມຂັ້ນວິຊາການ ແລະ ກອງປະຊຸມຂັ້ນແຂວງ/ສູນກາງ ຊຶ່ງກິດຈະກຳການມີສ່ວນຮ່ວມຂອງມວນຊົນປະກອບມີດັ່ງນີ້:

1. **ກອງປະຊຸມປຶກສາຫາລືຂັ້ນບ້ານ**

ຈຸດປະສົງແມ່ນເພື່ອເຜີຍແຜ່ ກ່ຽວກັບ ຮ່າງ ບສຕສ ຫລື ບປຜສ ແລະ ຜສຕສ ສະບັບທຳອິດ ແລະ ສັງລວມເອົາຄຳຄິດເຫັນ ແລະ ຂໍ້ສະເໜີເພີ່ມເຕີມຈາກປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ ເພື່ອນຳໄປປັບປຸງຮ່າງ ບສຕສ ຫລື ບຜປສ ແລະ ຜຄຕສ ຮັບປະກັນໃຫ້ມີເນື້ອໃນຄົບຖ້ວນ ແລະ ຄວາມເປັນເອກະພາບໃນຂັ້ນບ້ານ ກ່ອນການຈັດຕັ້ງປະຕິບັດກອງປະຊຸມປຶກສາຫາລືຂັ້ນເມືອງ, ໂດຍປະຕິບັດຕາມກິດຈະກຳລຸ່ມນີ້:

- ເຈົ້າຂອງໂຄງການນຳສະເໜີຮ່າງບົດລາຍງານ ບສຕສ ຫລື ບປຜສ ແລະ ຜສຕສ ສະບັບທຳອິດ, ເປີດໂອກາດ ແລະ ອຳນວຍຄວາມສະດວກໃຫ້ຜູ້ເຂົ້າຮ່ວມໄດ້ປະກອບຄຳເຫັນ ໄດ້ຢ່າງເຕັມທີ່.
- ເຈົ້າຂອງໂຄງການ ຮ່ວມກັບ ກຊສ ເປັນເຈົ້າການໃນການບັນທຶກທຸກຄຳເຫັນ, ສ້າງ ແລະ ຜ່ານບົດບັນທຶກກອງປະຊຸມ ຮ່ວມກັນລະຫວ່າງເຈົ້າຂອງໂຄງການ ຫຼື ຜູ້ບໍລິການດ້ານສິ່ງແວດລ້ອມ, ຜູ້ຕາງໜ້າ ກຊສ, ພຊສ, ຫຊສ, ຫ້ອງວ່າການປົກຄອງເມືອງ ແລະ ອົງການປົກຄອງຂັ້ນບ້ານ.
- ນຳສົ່ງສຳເນົາ ບົດບັນທຶກກອງປະຊຸມທີ່ມີລາຍເຊັນຄົບຖ້ວນ ແລະ ລາຍຊື່ຜູ້ເຂົ້າຮ່ວມ ໃຫ້ທຸກພາກສ່ວນທີ່ເຂົ້າຮ່ວມ.
- ເຈົ້າຂອງໂຄງການຕ້ອງສັງລວມ ແລະ ບັນຈຸຄຳເຫັນ ແລະ ຂໍ້ສະເໜີທັງໝົດ ຈາກການປຶກສາຫາລືຂັ້ນບ້ານເຂົ້າໃນການປັບປຸງ ບສຕສ, ບປຜສ ແລະ ຜຄຕສ. ໃນກໍລະນີ ບາງຄຳເຫັນ ຫລື ຂໍ້ສະເໜີທີ່ບໍ່ສາມາດສະ ໜອງຕາມການສະເໜີຈາກກອງປະຊຸມປຶກສາຫາລືຂັ້ນບ້ານ, ເຈົ້າຂອງໂຄງການຕ້ອງໄດ້ໃຫ້ເຫດຜົນທີ່ສົມເຫດສົມຜົນ ແລະ ຊີ້ແຈງອະທິບາຍໃຫ້ລະອຽດ ຢູ່ໃນບົດລາຍງານ ບສຕສ, ບປຜສ ແລະ ຜຄຕສ ສະບັບປັບປຸງ.
- <u>**ສຳລັບໂຄງການ ບສຕສ**</u>, ຫລັງຈາກສຳເລັດການປັບປຸງ ຕາມຄຳເຫັນຈາກກອງປະຊຸມປຶກສາຫາລືຂັ້ນບ້ານແລ້ວ ເຈົ້າຂອງໂຄງການຕ້ອງນຳສົ່ງຄຳຮ້ອງ ພ້ອມທັງ ບສຕສ ແລະ ຜຄຕສ ສະບັບປັບປຸງ ທີ່ຄັດຕິດບົດລາຍງານການມີສ່ວນຮ່ວມຂອງມວນຊົນ ຫາ ພຊສ ເພື່ອດຳເນີນຂະບວນການຂະບວນການທົບທວນ ບສຕສ ແລະ ຜຄຕສ ຕາມລະບຽບການ.
- <u>**ສຳລັບໂຄງການ ບປຜສ,**</u> ຫລັງຈາກສຳເລັດການປັບປຸງຕາມຄຳເຫັນຈາກກອງປະຊຸມປຶກສາຫາລືຂັ້ນບ້ານແລ້ວ ເຈົ້າຂອງໂຄງການຮ່ວມກັບ ກຊສ ຕ້ອງກະກຽມຈັດກອງປະຊຸມປຶກສາຫາລືຂັ້ນເມືອງ.

2. **ກອງປະຊຸມປຶກສາຫາລືຂັ້ນເມືອງ**

❖ <u>**ໃນກໍລະນີໂຄງການ ບສຕສ:**</u>

ຈຸດປະສົງແມ່ນເພື່ອຊີ້ແຈງອະທິບາຍກ່ຽວກັບ ບສຕສ ແລະ ຜສຕສ ສະບັບປັບປຸງຈາກກອງປະຊຸມປຶກສາຫາລືຂັ້ນບ້ານ ແລະ ສະເໜີຜົນການທົບທວນ ບສຕສ ແລະ ຜສຕສ ເພື່ອສັງລວມເອົາຄຳຄິດເຫັນ ແລະ ຂໍ້ສະເໜີເພີ່ມ

ເຕີມຈາກຕາງໜ້າຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ ນຳໄປປັບປຸງ ບສຕສ ແລະ ຜຄຕສ ຮັບປະກັນໃຫ້ມີເນື້ອໃນຄົບຖ້ວນສົມບູນ ແລະ ສາມາດຮັບຮອງໄດ້, ໂດຍມີກິດຈະກຳດັ່ງລຸ່ມນີ້:

- ເຈົ້າຂອງໂຄງການນຳສະເໜີ ແລະ ຊີ້ແຈ້ງອະທິບາຍ ກ່ຽວກັບ ບສຕສ ແລະ ຜສຕສ ສະບັບປັບປຸງ ພ້ອມທັງເປີດໂອກາດ ແລະ ອຳນວຍຄວາມສະດວກໃຫ້ຜູ້ເຂົ້າຮ່ວມໄດ້ປະກອບຄຳເຫັນ ແລະ ຂໍ້ສັກຖາມ ເພີ່ມເຕີມໄດ້ຢ່າງເຕັມທີ່;
- ພຊສ ເປັນເຈົ້າການໃນການບັນທຶກທຸກຄຳເຫັນ, ສ້າງ ແລະ ຜ່ານບົດບັນທຶກກອງປະຊຸມ ຮ່ວມກັນລະຫວ່າງເຈົ້າຂອງໂຄງການ ຫຼື ຜູ້ບໍລິການດ້ານສິ່ງແວດລ້ອມ, ຜູ້ຕາງໜ້າ ພຊສ, ຫຊສ, ຫ້ອງວ່າການປົກຄອງເມືອງ ແລະ ອົງການປົກຄອງຂັ້ນບ້ານ;
- ນຳສົ່ງສຳເນົາ ບົດບັນທຶກກອງປະຊຸມທີ່ມີລາຍເຊັນຄົບຖ້ວນ ແລະ ລາຍຊື່ຜູ້ເຂົ້າຮ່ວມ ໃຫ້ທຸກພາກສ່ວນທີ່ເຂົ້າຮ່ວມ;
- ເຈົ້າຂອງໂຄງການຕ້ອງສັງລວມ ແລະ ບັນຈຸຄຳເຫັນ ແລະ ຂໍ້ສະເໜີທັງໝົດ ຈາກການປຶກສາຫາລືຂັ້ນເມືອງເຂົ້າໃນການປັບປຸງ ບສຕສ ແລະ ຜຄຕສ ສະບັບສຸດທ້າຍ ແລ້ວນຳສົ່ງຫາ ພຊສ ເພື່ອພິຈາລະນາອອກໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຮັບຮອງ ບສຕສ ແລະ ຜຄຕສ. ໃນບາງກໍລະນີ ຕາມການພິຈາລະນາຂອງ ພຊສ ອາດຕ້ອງການລົງກວດກາພາກສະໜາມ ແລະ ຈັດກອງປະຊຸມຂັ້ນວິຊາການເພີ່ມເຕີມ ຖ້າຫາກວ່າມີຄວາມຈຳເປັນ ກ່ອນການອອກ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ.

❖ ***<u>ໃນກໍລະນີໂຄງການ ບປຜສ:</u>***

ຈຸດປະສົງແມ່ນເພື່ອຊີ້ແຈງອະທິບາຍ ກ່ຽວກັບ ບປຜສ ແລະ ຜສຕສ ສະບັບປັບປຸງຈາກກອງປະຊຸມປຶກສາຫາລືຂັ້ນບ້ານ ເພື່ອສັງລວມເອົາຄຳຄິດເຫັນ ແລະ ຂໍ້ສະເໜີເພີ່ມເຕີມຈາກຕາງໜ້າຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ ນຳໄປປັບປຸງ ບປຜສ ແລະ ຜຄຕສ ຮັບປະກັນໃຫ້ມີເນື້ອໃນຄົບຖ້ວນສົມບູນ ແລະ ເປັນກະພາບກັນໃນຂັ້ນເມືອງກ່ອນນຳສະເໜີຫາ ກຊສ ດຳເນີນຂະບວນການທົບທວນ, ໂດຍມີກິດຈະກຳດັ່ງລຸ່ມນີ້:

- ເຈົ້າຂອງໂຄງການນຳສະເໜີ ແລະ ຊີ້ແຈ້ງອະທິບາຍ ກ່ຽວກັບ ບສຕສ ແລະ ຜສຕສ ສະບັບປັບປຸງ ແລະ ກຊສ ສະເໜີຜົນການທົບທວນ ພ້ອມທັງເປີດໂອກາດ ແລະ ອຳນວຍຄວາມສະດວກໃຫ້ຜູ້ເຂົ້າຮ່ວມໄດ້ປະກອບຄຳເຫັນ ແລະ ຂໍ້ສັກຖາມ ເພີ່ມເຕີມໄດ້ຢ່າງເຕັມທີ່;
- ກຊສ ເປັນເຈົ້າການໃນການບັນທຶກທຸກຄຳເຫັນ, ສ້າງ ແລະ ຜ່ານບົດບັນທຶກກອງປະຊຸມ ຮ່ວມກັນລະຫວ່າງເຈົ້າຂອງໂຄງການ ຫຼື ຜູ້ບໍລິການດ້ານສິ່ງແວດລ້ອມ, ຜູ້ຕາງໜ້າ ກຊສ, ພຊສ, ຫຊສ, ຫ້ອງວ່າການປົກຄອງເມືອງ ແລະ ອົງການປົກຄອງຂັ້ນບ້ານ;
- ນຳສົ່ງສຳເນົາ ບົດບັນທຶກກອງປະຊຸມທີ່ມີລາຍເຊັນຄົບຖ້ວນ ແລະ ລາຍຊື່ຜູ້ເຂົ້າຮ່ວມ ໃຫ້ທຸກພາກສ່ວນທີ່ເຂົ້າຮ່ວມ;

- ເຈົ້າຂອງໂຄງການຕ້ອງສັງລວມ ແລະ ບັນຈຸຄໍາເຫັນ ແລະ ຂໍ້ສະເໜີທັງໝົດ ຈາກການປຶກສາຫາລືຂັ້ນເມືອງ ເຂົ້າໃນການປັບປຸງ ບປຜສ ແລະ ຜຄຕສ ແລ້ວນໍາສົ່ງຫາ ກຊສ ເພື່ອດໍາເນີນຂະບວນການທົບທວນ ແລະ ລົງກວດກາພາກສະໜາມ ແລະ ຈັດກອງປະຊຸມຂັ້ນວິຊາການ.
- ຫລັງຈາກສໍາເລັດການປັບປຸງ ຕາມຄໍາເຫັນຈາກກອງປະຊຸມປຶກສາຫາລືຂັ້ນເມືອງແລ້ວ ເຈົ້າຂອງໂຄງການຕ້ອງນໍາສົ່ງຄໍາຮ້ອງ ພ້ອມທັງ ບປຜສ ແລະ ຜຄຕສ ສະບັບປັບປຸງ ທີ່ຄັດຕິດບົດລາຍງານການມີສ່ວນຮ່ວມຂອງມວນຊົນ ຫາ ພຊສ ເພື່ອດໍາເນີນຂະບວນການຂະບວນການທົບທວນ ບປຜສ ແລະ ຜຄຕສ ຕາມລະບຽບການ.

### 3. ກອງປະຊຸມປຶກສາຫາລືຂັ້ນວິຊາການ

ຈຸດປະສົງ ແມ່ນເພື່ອນໍາສະເໜີຜົນການທົບທວນ ແລະ ລົງກວດກາພາກສະໜາມຕົວຈິງ ກ່ຽວກັບ ບສຕສ/ບປຜສ ໃນໄລຍະການທົບທວນ:

- ເຈົ້າຂອງໂຄງການນໍາສະເໜີ ກ່ຽວກັບ ລັກສະນະຂອງໂຄງການ ລວມທັງ ຊີ້ແຈງອະທິບາຍ ກ່ຽວກັບ ບປຜສ ແລະ ຜສຕສ ສະບັບປັບປຸງຈາກກອງປະຊຸມປຶກສາຫາລືຂັ້ນເມືອງ ແລະ ກຊສ ນໍາສະເໜີ ຜົນການທົບທວນ ບປຜສ ແລະ ຜສຕສ ພ້ອມທັງເປີດໂອກາດ ແລະ ອໍານວຍຄວາມສະດວກໃຫ້ຜູ້ເຂົ້າຮ່ວມໄດ້ປະກອບ ຄໍາເຫັນ ແລະ ຂໍ້ສັກຖາມ ເພີ່ມເຕີມໄດ້ຢ່າງເຕັມທີ່;
- ກຊສ ເປັນເຈົ້າການໃນການບັນທຶກທຸກຄໍາເຫັນ, ສ້າງ ແລະ ຜ່ານບົດບັນທຶກກອງປະຊຸມ ຮ່ວມກັນລະຫວ່າງເຈົ້າຂອງໂຄງການ ຫຼື ຜູ້ບໍລິການດ້ານສິ່ງແວດລ້ອມ, ຜູ້ຕາງໜ້າ ກຊສ, ພຊສ, ຫຊສ, ຫ້ອງວ່າການປົກຄອງເມືອງ ແລະ ອົງການປົກຄອງຂັ້ນບ້ານ;
- ນໍາສົ່ງສໍາເນົາ ບົດບັນທຶກກອງປະຊຸມທີ່ມີລາຍເຊັນຄົບຖ້ວນ ແລະ ລາຍຊື່ຜູ້ເຂົ້າຮ່ວມ ໃຫ້ທຸກພາກສ່ວນທີ່ເຂົ້າຮ່ວມ;
- ເຈົ້າຂອງໂຄງການຕ້ອງສັງລວມ ແລະ ບັນຈຸຄໍາເຫັນ ແລະ ຂໍ້ສະເໜີທັງໝົດ ຈາກການປຶກສາຫາລືຂັ້ນວິຊາການ ເຂົ້າໃນການປັບປຸງ ບປຜສ ແລະ ຜຄຕສ ກ່ອນການດໍາເນີນກອງປະຊຸມຂັ້ນແຂວງ/ສູນກາງ.

### 4. ກອງປະຊຸມປຶກສາຫາລື ຂັ້ນແຂວງ/ສູນກາງ

ຈຸດປະສົງແມ່ນເພື່ອ ຊີ້ແຈງອະທິບາຍ ກ່ຽວກັບ ບປຜສ ແລະ ຜຄຕສ ສະບັບປັບປຸງຈາກອງປະຊຸມຂັ້ນວິຊາການ ແລະ ສະເໜີ ຜົນການທົບທວນຂັ້ນສຸດທ້າຍ ເພື່ອສັງລວມເອົາຄໍາຄິດເຫັນ ແລະ ຂໍ້ສະເໜີເພີ່ມເຕີມຈາກຕາງໜ້າຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ ນໍາໄປປັບປຸງ ບສຕສ ແລະ ຜຄຕສ ຮັບປະກັນໃຫ້ມີເນື້ອໃນຄົບຖ້ວນສົມບູນ ແລະ ສາມາດຮັບຮອງໄດ້, ໂດຍມີກິດຈະກໍາດັ່ງລຸ່ມນີ້:

- ເຈົ້າຂອງໂຄງການນຳສະເໜີຊີ້ແຈງອະທິບາຍກ່ຽວກັບ ບປຜສ ແລະ ຜສຕສ ສະບັບປັບປຸງຈາກກອງປະຊຸມປຶກສາຫາລືຂັ້ນວິຊາການ ແລະ ກຊສ ນຳສະເໜີ ຜົນການທົບທວນຂັ້ນສຸດທ້າຍ ພ້ອມທັງເປີດໂອກາດ ແລະ ອຳນວຍຄວາມສະດວກໃຫ້ຜູ້ເຂົ້າຮ່ວມໄດ້ປະກອບ ຄຳເຫັນ ແລະ ຂໍ້ສັກຖາມ ເພີ່ມເຕີມໄດ້ຢ່າງເຕັມທີ່.
- ກຊສ ເປັນເຈົ້າການໃນການບັນທຶກທຸກຄຳເຫັນ, ສ້າງ ແລະ ຜ່ານບົດບັນທຶກກອງປະຊຸມ ຮ່ວມກັນລະຫວ່າງ ເຈົ້າຂອງໂຄງການ ຫຼື ຜູ້ບໍລິການດ້ານສິ່ງແວດລ້ອມ, ຜູ້ຕາງໜ້າ ພຊສ, ຫຊສ, ຫ້ອງວ່າການປົກຄອງເມືອງ ແລະ ອົງການປົກຄອງຂັ້ນບ້ານ;
- ນຳສົ່ງສຳເນົາ ບົດບັນທຶກກອງປະຊຸມທີ່ມີລາຍເຊັນຄົບຖ້ວນ ແລະ ລາຍຊື່ຜູ້ເຂົ້າຮ່ວມ ໃຫ້ທຸກພາກສ່ວນທີ່ເຂົ້າຮ່ວມ;
- ເຈົ້າຂອງໂຄງການຕ້ອງສັງລວມ ແລະ ບັນຈຸຄຳເຫັນ ແລະ ຂໍ້ສະເໜີທັງໝົດ ຈາກການປຶກສາຫາລືຂັ້ນເມືອງ ເຂົ້າໃນການປັບປຸງ ບປຜສ ແລະ ຜຄຕສ ສະບັບສຸດທ້າຍ ແລ້ວນຳສົ່ງຫາ ກຊສ ເພື່ອພິຈາລະນາອອກໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຮັບຮອງ ບປຜສ ແລະ ຜຄຕສ.

## 7.4 ການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການກໍ່ສ້າງ ແລະ ດຳເນີນງານ

ຂໍ້ 2.11 ແລະ 2.15 ຂອງຄຳແນະນຳຂະບວນການສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 8029 /ກຊສ ແລະ ຄຳແນະນຳຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ສະບັບເລກທີ 8030 /ກຊສ ໄດ້ກຳນົດໄວ້ວ່າ ພາຍຫລັງໂຄງການໄດ້ຮັບການອະນຸມັດ ແລະ ໄດ້ອອກໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ , ມວນຊົນທົ່ວໄປ ແລະ ຊຸມຊົນ ແລະ ປະຊາຊົນ ທີ່ໄດ້ຮັບຜົນກະທົບ ຍັງສືບຕໍ່ມີບົດບາດສຳຄັນໃນການປະກອບເຂົ້າໃນການຕິດຕາມກວດກາ ແລະ ປະເມີນ ເພື່ອສົມທຽບກັບ ຜຄຕສ ແລະ ເງື່ອນໄຂ ຂອງໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ ໃນໄລຍະການຈັດຕັ້ງປະຕິບັດໂຄງການ. ພ້ອມນັ້ນ, ຂໍ້ 2.10 ແລະ 2.14 ໄດ້ກຳນົດວ່າ ຜູ້ມີສ່ວນຮ່ວມຢູ່ທ້ອງຖິ່ນ ແລະ ມວນຊົນ ຈະໄດ້ເຂົ້າຮ່ວມໃນການຕິດຕາມກວດກາ ໂຄງການ.

ຈາກບົດຮຽນທີ່ດີໃນການດຳເນີນການມີສ່ວນຮ່ວມຂອງມວນຊົນ ໄດ້ສະແດງໃຫ້ເຫັນວ່າຄວາມເຫັນດີເປັນເອກະພາບແມ່ນຍັງສືບຕໍ່ດຳເນີນຕາມຂະບວນການ, ຈະບໍ່ສິ້ນສຸດລົງໃນເວລທີ່ໂຄງການການໄດ້ຮັບການອະນຸມັດແລ້ວ ແລະ ຄວາມເຫັນດີເປັນເອກະພາບ ແມ່ນຂຶ້ນກັບຄວາມເອົາໃຈໃສ່ຂອງທຸກພາກສ່ວນ ໃນການເຜີຍແຜ່ຂໍ້ມູນ ກ່ຽວກັບການຕັດສິນໃຈ ແລະ ຜົນກະທົບ, ການປ່ຽນແປງ ບັນເງື່ອນໄຂທີ່ໄດ້ມີຄວາມເຫັນດີເປັນເອກະພາບ ແລະ ຄວາມໂປ່ງໃສໃນການດຳເນີນໂຄງການ ແລະ ຜົນໄດ້ຮັບ. ການປຶກສາຫາລື ແລະ ການມີສ່ວນຮ່ວມໃນການຕິດຕາມກວດກາ ໃນໄລຍະການດຳເນີນໂຄງການ ແມ່ນຄວາມສຳຄັນ ຕໍ່ການຮັບຮູ້ສິດຂອງຊຸມຊົນ ແລະ ປະຊາຊົນ ທີ່ໄດ້ຮັບຜົນກະທົບ.

### 7.4.1 ຄາດຄະເນຜົນທີ່ຈະໄດ້ຮັບ

- ເຈົ້າຂອງໂຄງການ ຈະໄດ້ຮັບຜົນປະໂຫຍດ ຈາກການສະໜັບສະໜູນ ແລະ ການຊ່ວຍເຫລືອ ຈາກທ້ອງຖິ່ນ ໃນການຕິດຕາມກວດກາບັນຫາຜົນກະທົບ ຈາກການດຳເນີນໂຄງການ ແລະ ຂໍ້ຄັດແຍ່ງ ແລະ ບັນຫາຄວາມເຂົ້າໃຈຜິດ.
- ຊຸມຊົນທ້ອງຖິ່ນ ໄດ້ຮັບຜົນປະໂຫຍດ ຈາກການເຂົ້າເຖິງ ແລະ ໂອກາດ ສະແດງຄຳເຫັນ ຕໍ່ກັບກິດຈະກຳ ແລະ ຜົນກະທົບ ຂອງໂຄງການເພີ່ມຂຶ້ນ.
- ຊຸມຊົນທ້ອງຖິ່ນ ໄດ້ຮັບການທົດແທນຄ່າເສຍຫາຍ ແລະ ຄ່າໃຊ້ຈ່າຍອື່ນໆ ຢ່າງຄົບຖ້ວນ ຕາມການຕົກລົງກັນໄວ້ ໂດຍສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງ ແລະ ສັນຍາກັບຊຸມຊົນ.
- ຊຸມຊົນທ້ອງຖິ່ນສາມາດປະກອບສ່ວນໃນການກຳນົດມາດຕະການໂຄງການ ເພື່ອຍົກສູງຜົນປະໂຫຍດ ແລະ ຫລຸດຜ່ອນຜົນກະທົບດ້ານລົບ.
- ຂະແໜງການລັດຖະບານທີ່ກ່ຽວຂ້ອງ ຈະໄດ້ຮັບການສະໜັບສະໜູນຈາກການເຂົ້າຮ່ວມຂອງຊຸມຊົນ ແລະ ຜູ້ມີສ່ວນຮ່ວມອື່ນໆ ໃນກິດຈະກຳການຕິດຕາມກວດກາ.

### 7.4.2 ຜູ້ມີສ່ວນຮ່ວມຫລັກ

ຜູ້ມີສ່ວນຮ່ວມຫລັກ ປະກອບມີ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ຊຸມຊົນທີ່ໄດ້ຮັບຜົນກະທົບ, ຂະ ແ ໜງການທີ່ກ່ຽວຂ້ອງ ໃນລະດັບສູນກາງ ແລະ ທ້ອງຖິ່ນ(ແຂວງ, ເມືອງ ແລະ ບ້ານ), ກຊສ, ພຊສ, ຫຊສ ແລະ ຜູ້ມີສ່ວນຮ່ວມອື່ນໆເຊັ່ນ: ອົງການຈັດຕັ້ງສັງຄົມຕ່າງໆ, ອົງການຈັດຕັ້ງສາກົນ, ຜູ້ຕາງໜ້າ ຈາກຫ້ອງວ່າການສະພາເຂດເລືອກຕັ້ງ, ອົງການຈັດຕັ້ງສາກົນ ແລະ ຜູ້ໃຫ້ທຶນ.

### 7.4.3 ການວາງແຜນ ແລະ ການກະກຽມການມີສ່ວນຮ່ວມຂອງມວນຊົນ

ເຈົ້າຂອງໂຄງການ ຕ້ອງໄດ້ກຳນົດ ແຜນການມີສ່ວນຮ່ວມຂອງມວນຊົນ ເຊິ່ງຕ້ອງໄດ້ຈັດຕັ້ງປະຕິບັດ ແລະ ດຳເນີນຢ່າງຕໍ່ເນື່ອງ ໃນໄລຍະການກໍ່ສ້າງ ແລະ ດຳເນີນງານ ແລະ ລວມເອົາແຜນການດັ່ງກ່າວ ເຂົ້າເປັນສ່ວນໜຶ່ງຂອງ ຜຄຕສ ເຊິ່ງຕ້ອງໄດ້ປັບປຸງ ແລະ ນຳສະເໜີໃຫ້ ໃຫ້ ກຊສ/ ພຊສ ພິຈາລະນາຮັບຮອງໃນແຕ່ໄລຍະ.

### 7.4.4 ກິດຈະກຳ ແລະ ວິທີການ ດຳເນີນການມີສ່ວນຮ່ວມຂອງມວນຊົນ

ເພື່ອຮັບປະກັນການດຳເນີນການມີສ່ວນຮ່ວມຂອງມວນຊົນໃນໄລຍະການກໍ່ສ້າງ ແລະ ດຳເນີນໂຄງການ ໃຫ້ມີປະສິດທິຜົນ, ເຈົ້າຂອງໂຄງການ ຕ້ອງດຳເນີນການມີສ່ວນຮ່ວມຂອງມວນຊົນ ດັ່ງນີ້:

**1. ການເຜີຍແຜ່ຂໍ້ມູນຂ່າວສານ**

ເຈົ້າຂອງໂຄງການ ຕ້ອງແຈ້ງຂໍ້ມູນຂ່າວສານ ກ່ຽວກັບ ແຜນພັດທະນາໂຄງການລົງທຶນ, ຄາດຄະເນຜົນປະໂຫຍດທີ່ຈະໄດ້ຮັບ ແລະ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ຈະເກີດຈາກໂຄງການລົງທຶນ ໃຫ້ປະຊາຊົນຜູ້ໄດ້

ຮັບ ຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ຊາບ ລວມທັງຂໍ້ມູນ ກ່ຽວກັບ ບົດລາຍງານ ສສຕ ຫລື ບົດລາຍງານ ປຜສ, ຜຄສລ, ຜຄສຄ. ຈຸດປະສົງຂອງການເຜີຍແຜ່ຂໍ້ມູນ ແມ່ນເພື່ອນຳສະເໜີຂໍ້ມູນໃຫ້ແກ່ປະຊາຊົນໃນເຂດທ້ອງຖິ່ນ ໂດຍສະເພາະ ບ້ານທີ່ມີໂຄງການຕັ້ງຢູ່ ແລະ ຜູ້ມີສ່ວນຮ່ວມອື່ນໆ ຮັບຊາບເຖິງຜົນກະທົບທີ່ເກີດ ຫຼື ຈະເກີດຂຶ້ນ ຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ແລະ ໄດ້ຮັບຂໍ້ມູນ ກ່ຽວກັບ ຄວາມຄືບໜ້າຂອງໂຄງການ ໃນແຕ່ລະໄລຍະ.

ການເຜີຍແຜ່ຂໍ້ມູນໃຫ້ມວນຊົນ, ຜູ້ພັດທະນາໂຄງການ ອາດປະຕິບັດໄດ້ດ້ວຍວິທີການໃດໜຶ່ງ ຫລື ຫລາຍວິທີ ດັ່ງລຸ່ມນີ້:

- **ການເຜີຍແຜ່ຂໍ້ມູນເອກະສານ:** ເປັນວິທີການໜຶ່ງທີ່ຜູ້ພັດທະນາໂຄງການ ຫລື ອົງການຈັດຕັ້ງລັດ ສາມາດໃຫ້ຂໍ້ມູນທີ່ຖືກຕ້ອງ ແລະ ເປັນລາຍລັກອັກສອນ ແກ່ມວນຊົນໂດຍກົງ ເພື່ອຫລີກຫລ່ຽງ ການໄດ້ຮັບຂໍ້ມູນທີ່ຜິດພາດ. ນອກນັ້ນ, ຜູ້ພັດທະນາ ອາດສັງລວມຂໍ້ມູນທີ່ສຳຄັນຢູ່ໃນ ບົດລາຍງານ ສສຕ ຫລື ບົດລາຍງານ ປຜສ, ຜຄສລ, ຜຄສຄ, ລະບຽບກົດຫມາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງ ເພື່ອມາເຜີຍແຜ່ຂໍ້ມູນດັ່ງກ່າວ ດ້ວຍຫລາຍວິທີການ ເຊັ່ນ:
    - **ບົດລາຍງານ:** ແມ່ນການສັງລວມເອົາບັນຫາສຳຄັນຢູ່ໃນບົດລາຍງານ ສສຕ ຫລື ບົດລາຍງານ ປຜສ, ຜຄສລ, ຜຄສຄ ລວມທັງຜົນການຕັດສິນຂໍ້ຂັດແຍ່ງໃດໜຶ່ງ ກ່ຽວກັບ ໂຄງການລົງທຶນ;
    - **ຈົດໝາຍຂ່າວ:** ແມ່ນການນຳສະເໜີຂໍ້ມູນ ກ່ຽວກັບ ການເຄື່ອນໄຫວວຽກງານຂອງໂຄງການລົງທຶນ/ບໍລິສັດ ຫລື ຂໍ້ມູນອື່ນໆ ເຊິ່ງເປັນທີ່ສົນໃຈຂອງປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ; ໂດຍທົ່ວໄປແລ້ວ ຈົດຫມາຍຂ່າວ ຈະຖືກຈັດພິມຕາມໄລຍະເວລາທີ່ແນ່ນອນ ເຊັ່ນ: ທຸກໆ 15 ວັນ ຫລື ແຕ່ລະເດືອນ.
    - **ແຈ້ງການ:** ແມ່ນການແຈ້ງຂໍ້ມູນໃຫ້ຜູ້ທີ່ຈະໄດ້ຮັບຜົນກະທົບຈາກໂຄງການລົງທຶນ ກ່ຽວກັບ ການປ່ຽນແປງ ຫລື ເຫດການ ທີ່ອາດຈະສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ເປັນຕົ້ນແມ່ນການປ່ອຍນ້ຳອອກຈາກອ່າງໜ້າເຂື່ອນ, ການນຳໃຊ້ສານເຄມີ, ການບຸກເບີກເນື້ອທີ່, ການລະເບີດຫີນ ແລະ ກິດຈະກຳອື່ນໆທີ່ຈະສົ່ງຜົນກະທົບຕໍ່ສຸຂະພາບຂອງປະຊາຊົນໃນເຂດດັ່ງກ່າວ. ໃນບາງກໍລະນີເຈົ້າຂອງໂຄງການ ຕ້ອງຂໍອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຕາມຂັ້ນຕອນ.
- **ການເຜີຍແຜ່ຂໍ້ມູນຜ່ານສື່:** ເປັນວິທີການໜຶ່ງ ທີ່ນິຍົມໃຊ້ທົ່ວໄປ ແລະ ເປັນການເຜີຍແຜ່ຂໍ້ມູນໃຫ້ມວນຊົນໄດ້ຢ່າງກວ້າງຂວາງ ແຕ່ກ່ອນຈະນຳໃຊ້ສື່ໃດໜຶ່ງ, ຜູ້ພັດທະນາ ຄວນພິຈາລະນາ ແລະ ຄຳນຶງເຖິງຄວາມເໝາະສົມກັບສະພາບຕົວຈິງຂອງທ້ອງຖິ່ນ. ການເຜີຍແຜ່ຂໍ້ມູນຜ່ານສື່ ສາມາດດຳເນີນດ້ວຍຫລາຍວິທີ ເຊັ່ນ: ວິດີໂອ, ໂທລະພາບ, ໜັງສືພິມ, ວາລະສານ, ແຜ່ນພັບ, ກະດານຂ່າວ, ວິທະຍຸ, ໂທລະໂຄ່ງ, ເວັບໄຊ້ ແລະ ອື່ນໆ.

❖ **ການຖະແຫລງຂ່າວ:** ແມ່ນການນຳເອົາຂ່າວໃດຫນຶ່ງ ກ່ຽວກັບ ໂຄງການລົງທຶນ ທີ່ກຳລັງເປັນບັນຫາເຄັ່ງຮ້ອນ ຫລື ເປັນທີ່ສົນໃຈຂອງມວນຊົນ ເຊິ່ງໄດ້ຜ່ານການວິເຄາະ ແລະ ກະກຽມ ເປັນລາຍລັກອັກສອນ ແລ້ວແຈ້ງໃຫ້ມວນຊົນຮັບຊາບຜ່ານ ສື່ (ໂທລະພາບ, ວິທະຍຸ, ໂທລະໂຄ່ງ). ການຖະແຫລງ ຂ່າວດັ່ງກ່າວ ຕ້ອງດຳເນີນຢ່າງຕໍ່ເນື່ອງ ນັບແຕ່ເລີ່ມຕົ້ນ ຈົນສິ້ນສຸດບັນຫານັ້ນໆ ຫລື ຈົນກວ່າບັນລຸ ຕາມເປົ້າຫມາຍ. ການຖະແຫລງຂ່າວ ຕ້ອງຄຳນຶງເຖິງບັນຫາສຳຄັນ ຄື:

- ເນື້ອໃນຂອງຂ່າວ ຕ້ອງຮັດກຸມ, ທັນສະພາບການ ແລະ ເປັນຈິງ;
- ພາສາທີ່ນຳໃຊ້ ຕ້ອງໃຫ້ແທດເຫມາະກັບກຸ່ມເປົ້າຫມາຍ ແລະ ທ້ອງຖິ່ນ;
- ອີງການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ດຳເນີນການຖະແຫລງຂ່າວ.

❖ **ສູນຂໍ້ມູນຂ່າວສານ ແລະ ປະຊາສຳພັນ:** ເປັນສະຖານທີ່ບໍລິການໃຫ້ຂໍ້ມູນຂ່າວສານ ແລະ ຮັບຄຳຄິດເຫັນ ຈາກມວນຊົນໂດຍສະເພາະຂໍ້ມູນທີ່ກ່ຽວຂ້ອງກັບໂຄງການລົງທຶນ ຫລື ກິດຈະກຳທີ່ຕ້ອງການໃຫ້ມວນຊົນມີສ່ວນຮ່ວມ. ໃນກໍລະນີ ໂຄງການລົງທຶນຂະໜາດໃຫຍ່ ແລະ ມີເງື່ອນໄຂ ກໍ່ອາດສາມາດສ້າງສູນການສຶກສາ ວິທະຍາສາດ ແລະ ສິ່ງແວດລ້ອມ ເພື່ອສຶກສາ ແລະ ສ້າງຈິດສຳນຶກ ໃຫ້ນັກຮຽນ ແລະ ປະຊາຊົນທີ່ສົນໃຈ ເຊິ່ງອາໄສຢູ່ອ້ອມຂ້າງໂຄງການລົງທຶນ. ໃນການສ້າງສູນຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຕ້ອງອີງໃສ່ເງື່ອນໄຂ ແລະ ປັດໃຈພື້ນຖານ ດັ່ງນີ້:

- ທີ່ຕັ້ງຂອງສູນຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຕ້ອງຢູ່ໃນເຂດຊຸມຊົນ ແລະ ມວນຊົນ ສາມາດເຂົ້າເຖິງໄດ້ງ່າຍ;
- ສູນຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຢ່າງຫນ້ອຍຕ້ອງມີ 2 ຈຸດ ຄື: ເຂດຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ສຳນັກງານໃຫຍ່ ຂອງໂຄງການລົງທຶນ;
- ການຈັດເກັບຂໍ້ມູນ ຕ້ອງເປັນລະບົບ, ຂໍ້ມູນຕ້ອງມີການປັບປຸງເປັນປະຈຳ;
- ຂໍ້ມູນທີ່ຈະນຳມາເຜີຍແຜ່ ຕ້ອງເປັນຂໍ້ມູນທີ່ຜ່ານການວິໄຈ ແລະ ມີການສັງລວມ;
- ຂໍ້ມູນທີ່ຈະນຳມາເຜີຍແຜ່ ຕ້ອງເປັນພາສາລາວ (ຖ້າຈຳເປັນ ຕ້ອງເປັນພາສາທ້ອງຖິ່ນ) ແລະ ຕ້ອງເຂົ້າໃຈງ່າຍ.

❖ **ກະດານຂ່າວ:** ຕ້ອງສ້າງຂຶ້ນຢູ່ພາຍໃນເຂດພັດທະນາໂຄງການ ທີ່ມວນຊົນສາມາດເບິ່ງເຫັນໄດ້ງ່າຍ ຫລື ສ້າງຂຶ້ນຢູ່ບ້ານອ້ອມຂ້າງ ແລະ ເຂດອື່ນໆທີ່ມີຄວາມເໝາະສົມ. ເນື້ອໃນທີ່ເຜີຍແຜ່ໃນກະດານຂ່າວ ຢ່າງຫນ້ອຍ ຕ້ອງປະກອບດ້ວຍຂໍ້ມູນພື້ນຖານ ລຸ່ມນີ້:

- ຊື່ ແລະ ທີ່ຢູ່ ຂອງຜູ້ພັດທະນາໂຄງການ;
- ລາຍລະອຽດໂຄງການລົງທຶນ ເຊັ່ນ : ຈຸດປະສົງ, ປະເພດ, ຂະໜາດ, ແຜນວາດ, ແຜນທີ່ສະແດງ ທີ່ຕັ້ງຂອງໂຄງການ ແລະ ອື່ນໆ;

- ຂໍ້ມູນ ດ້ານຜົນປະໂຫຍດທີ່ປະຊາຊົນຈະໄດ້ຮັບຈາກໂຄງການລົງທຶນ ແລະ ຜົນກະທົບດ້ານລົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ໃນກໍລະນີ ມີການຍົກຍ້າຍ ຕ້ອງມີລາຍລະອຽດ ກ່ຽວກັບ ການທົດແທນຄ່າເສຍຫາຍ ແລະ ຍົກຍ້າຍຈັດສັນປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການ;
- ຂໍ້ຄວາມແຈ້ງບອກ ຊື່ ແລະ ທີ່ຢູ່ຂອງບຸກຄົນ ທີ່ມວນຊົນສາມາດສົ່ງຄໍາເຫັນເປັນລາຍລັກອັກສອນ ກ່ຽວກັບໂຄງການລົງທຶນ ໃຫ້ແກ່ຜູ້ພັດທະນາໂຄງການ ໄດ້ງ່າຍ;
- ຂໍ້ຄວາມແຈ້ງບອກ ວັນ, ເວລາ ແລະ ສະຖານທີ່ ກ່ຽວກັບ ການຈັດກອງປະຊຸມ ໃນກໍລະນີ ຈະມີການຈັດປະຊຸມ.

❖ **ການທັດສະນະສຶກສາຢັ້ງຢາມໂຄງການ:** ແມ່ນການນໍາເອົາຕົວແທນຂອງປະຊາຊົນ ຫລື ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ໂດຍສະເພາະແມ່ນຜູ້ຈະຖືກຍົກຍ້າຍຈັດສັນ ແລະ ອົງການ ປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໄປຢັ້ງຢາມໂຄງການຕົວແບບທີ່ດໍາເນີນການແລ້ວ ຫຼື ເຂດຈັດສັນທີ່ຢູ່ອາໄສ ແລະ ເຂດທໍາການຜະລິດ ໃໝ່. ສໍາລັບ ການໄປທັດສະນະສຶກສາຢັ້ງຢາມໂຄງການລົງທຶນ, ຜູ້ພັດທະນາໂຄງການ ຕ້ອງປະສານສົມທົບ ກັບອົງການປົກຄອງຂັ້ນເມືອງ, ແຂວງ/ນະຄອນຫລວງ ວຽງຈັນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອວາງແຜນການກ່ຽວກັບ ການໄປທັດສະນະດັ່ງກ່າວ ໂດຍກໍານົດ ວັນ, ເວລາ, ສະຖານທີ່, ຜູ້ຕາງໜ້າຈາກແຂວງ/ນະຄອນຫລວງວຽງຈັນ, ເມືອງ ແລະ ບ້ານ, ເຈົ້າກົກເຈົ້າເລົ່າ, ແນວໂຮມ, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ. ການທັດສະນະສຶກສາຢັ້ງຢາມໂຄງການ ປະກອບມີ ດັ່ງນີ້:

- ການຢັ້ງຢາມໂຄງການຕົວແບບ ທີ່ດໍາເນີນການແລ້ວ : ການນໍາເອົາຕົວແທນປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ໄປຢັ້ງຢາມໂຄງການລົງທຶນໃດໜຶ່ງ ໂດຍສະເພາະແມ່ນເຂດກໍ່ສ້າງພື້ນຖານໂຄງລ່າງ, ເຂດຈັດສັນທີ່ຢູ່ອາໄສ ແລະ ໄປເບິ່ງແບບແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ(ການຊົດເຊີຍ, ການຝຶກອົບຮົມ, ການຈັດສັນອາຊີບຄົງທີ່ ແລະ ອື່ນໆ) ທີ່ຜູ້ພັດທະນາໂຄງການ ເຫັນວ່າ ເປັນໂຄງການທີ່ມີການດໍາເນີນການ ຫລື ກິດຈະກໍາທີ່ຄ້າຍຄືກັນ ແລະ ມີບົດຮຽນ ແລະປະສົບການ ໃນການຈັດຕັ້ງປະຕິບັດແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ທີ່ໄດ້ຮັບມາດຕະຖານ ແລະມີປະສິດທິຜົນ; ຈຸດປະສົງການຢັ້ງຢາມ ແມ່ນເພື່ອໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບແນວທາງນະໂຍບາຍການຈັດຕັ້ງປະຕິບັດແຜນພັດທະນາໂຄງການ ເພື່ອສ້າງຄວາມໝັ້ນໃຈໃຫ້ປະຊາຊົນຕໍ່ໂຄງການລົງທຶນ.
- ການຢັ້ງຢາມ ເຂດຈັດສັນທີ່ຢູ່ອາໄສ ແລະ ເຂດທໍາການຜະລິດ ໃໝ່ : ແມ່ນການນໍາເອົາຕົວແທນປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ໄປຢັ້ງຢາມເຂດພື້ນທີ່ໃໝ່ ຫຼື ເຂດບ້ານ ເຈົ້າພາບ ທີ່ໂຄງການຄາດຄະເນວ່າຈະພັດທະນາເປັນເຂດຍົກຍ້າຍຈັດສັນ ແລະ ເຂດທໍາການ ຜະລິດໃໝ່ ໃຫ້ກັບປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ເປັນຕົ້ນແມ່ນເຂດກໍ່ສ້າງ ເຮືອນ, ເຂດທໍາການຜະລິດ,

ເຂດກໍ່ສ້າງພື້ນຖານໂຄງລ່າງ ລວມທັງແຜນຜັງ, ແບບເຮືອນ ແລະ ອື່ນໆ, ຈຸດປະສົງການຢ້ຽມຢາມ ແມ່ນເພື່ອສຳຫຼວດຄວາມຄິດເຫັນຂອງປະຊາຊົນຜູ້ໄດ້ຮັບ ຜົນກະທົບຈາກໂຄງການຕໍ່ເຂດດັ່ງກ່າວ.

## 2. ການປະຊາສຳພັນ

ເຈົ້າຂອງໂຄງການ ຕ້ອງປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການປະຊາສຳພັນ ຂໍ້ມູນຂ່າວສານ ກ່ຽວກັບ ການຈັດຕັ້ງປະຕິບັດໂຄງການ ທີ່ອາດສົ່ງຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃຫ້ປະຊາຊົນທ້ອງຖິ່ນ, ກຸ່ມຄົນ(ຊາວໜຸ່ມ, ແມ່ຍິງ, ຊົນເຜົ່າ, ປະຊາຊົນຜູ້ທີ່ດ້ອຍໂອກາດ) ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ. ຜົນກະທົບດັ່ງ ອາດເກີດຈາກ ການອະນາໄມພື້ນທີ່, ການລະເບີດຫີນ, ການຂົນສົ່ງ, ການໃຊ້ ແລະ ເກັບຮັກສາ ວັດຖຸດິບ ແລະ ສານເຄມີອັນຕະລາຍ, ການປ່ອຍນ້ຳ ຈາກອ່າງເກັບນ້ຳ ແລະ ອື່ນໆ.

ເຈົ້າຂອງໂຄງການ ຕ້ອງໄດ້ປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການເຜີຍແຜ່ເອກະສານ ກ່ຽວກັບ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ໄດ້ຖືກຮັບຮອງຢ່າງເປັນທາງການ ເຊັ່ນ: ບົດລາຍງານ ການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ສັນຍາສຳປະທານໂຄງການ, ສັນຍາການຂຸດຄົ້ນ-ປຸງແຕ່ງ ແຮ່ທາດ ແລະ ອື່ນໆ.

## 3. ການເຂົ້າເຖິງຂໍ້ມູນຂ່າວສານ

ຜູ້ພັດທະນາໂຄງການ ຕ້ອງອຳນວຍຄວາມສະດວກ ແລະ ຮັບປະກັນ ໃຫ້ແກ່ປະຊາຊົນ ຫລື ກຸ່ມຄົນ (ຊາວໜຸ່ມ, ແມ່ຍິງ, ຊົນເຜົ່າ, ຜູ້ທີ່ບໍ່ສາມາດຊ່ວຍເຫລືອຕົນເອງໄດ້) ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ສາມາດເຂົ້າເຖິງຂໍ້ມູນ ກ່ຽວກັບ ບົດລາຍງານ ສສຕ ຫລື ບົດລາຍງານ ປຜສ, ຜຄສລ, ຜຄສຄ, ບົດລາຍງານການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ບົດລາຍງານການຈັດຕັ້ງປະຕິບັດ ຜຄສຄ, ຜຄສລ ຂອງໂຄງການໃນແຕ່ລະໄລຍະ. ເພື່ອເປັນການເຮັດໃຫ້ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ສາມາດເຂົ້າເຖິງຂໍ້ມູນໄດ້ສະດວກ, ຄວນຈະມີ ສິ່ງອຳນວຍຄວາມສະດວກໃນການເຂົ້າເຖິງຂໍ້ມູນ ດ້ວຍຫລາຍຮູບແບບ ເຊັ່ນ: ສູນຂໍ້ມູນຂ່າວສານ, ແຜ່ນພັບ, ຮູບພາບ, ກະດານຂ່າວ, ລົງໜັງສືພິມ, ເວັບໄຊ້ ແລະ ອື່ນໆ.

## 4. ການປຶກສາຫາລື, ເຈລະຈາ ແລະ ການມີສ່ວນຮ່ວມຂອງມວນຊົນໃນຂະບວນການຕັດສິນໃຈ

ເຈົ້າຂອງໂຄງການຕ້ອງດຳເນີນການຂຶ້ນບັນຊີຊັບສິນທີໄດ້ຮັບຜົນກະທົບຄືນຢ່າງລະອຽດ, ຄົບຖ້ວນ ແລະ ຖືກຕ້ອງໂດຍຮັບປະກັນໃຫ້ມີລາຍເຊັນຂອງເຈົ້າຂອງຊັບສິນ, ນາຍບ້ານ ແລະ ຕາງໜ້າຂອງໜ່ວຍງານລັດ. ພ້ອມກັນນີ້ເຈົ້າຂອງໂຄງການຕ້ອງດຳເນີນການປຶກສາຫາລື, ເຈລະຈາ ແລະ ການຕົກລົງເປັນເອກະພາບ ກ່ຽວກັບ ແຜນການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ (ອັດຕາການທົດແທນຄ່າເສຍຫາຍ, ການຄັດເລືອກ ເຂດ ຈັດສັນຍົກຍ້າຍ, ການອອກແບບເຮືອນ, ການຟື້ນຟູຊີວິດການເປັນຢູ່ ແລະ ການສົ່ງເສີມອາຊີບ)

ເຈົ້າຂອງໂຄງການ ຕ້ອງຈັດກອງປະຊຸມປຶກສາຫາລື ຮ່ວມກັບຜູ້ມີສ່ວນຮ່ວມໃນທ້ອງຖິ່ນ, ຜູ້ທີ່ໄດ້ຮັບຜົນກະທົບ ແລະ ມວນຊົນທົ່ວໄປ ຢ່າງໜ້ອຍສຸດ ປະຈຳປີ. ການປະຊຸມ ເພີ່ມເຕີມ ຕ້ອງໄດ້ຈັດຂຶ້ນ ກ່ຽວກັບຈຸດປະສົງສະເພາະ ໃນ

ກໍລະນີມີການປ່ຽນແປງທີ່ຫລວງຫລາຍ ຫຼື ຂໍ້ຄັດແຍ່ງໄດ້ເກີດຂຶ້ນ ຍ້ອນອຸປະຕິເຫດ, ຄວາມເຂົ້າໃຈຜິດ ຫຼື ສາເຫດອື່ນໆ. ຜູ້ຕາງໜ້າຈາກອົງການຈັດຕັ້ງລັດຖະບານ ແລະ ເຈົ້າຂອງໂຄງການ ຕ້ອງເຂົ້າຮ່ວມການປະຊຸມ. ບົດບັນທຶກກອງປະຊຸມ ແລະ ລາຍຊື່ ພ້ອມລາຍເຊັນ ຂອງຜູ້ເຂົ້າຮ່ວມຕ້ອງເກັບຮັກສາໄວ້. ອາດມີຄວາມຈຳເປັນ ການແຍກການປຶກສາຫາລື ກັບຄອບຄົວ ແລະ ບຸກຄົນ ຜູ້ທີ່ບໍ່ສາມາດຊ່ວຍເຫລືອຕົນເອງໄດ້ ເພື່ອຮັບປະກັນວ່າ ຂໍ້ຂ້ອງໃຈ ແລະ ຄວາມຕ້ອງການ ໄດ້ຮັບການພິຈາລະນາ.

### 5. ການເຂົ້າຮ່ວມ ການລົງກວດກາພາກສະໜາມ

ເຈົ້າຂອງໂຄງການ ແລະ ກຊສ ຫຼື ພຊສ ຕ້ອງດຳເນີນການຕິດຕາມກວດກາ ພາກສະໜາມ ໂດຍປະກອບມີຜູ້ມີສ່ວນຮ່ວມ , ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ມວນຊົນທົ່ວໄປ ຢ່າງໜ້ອຍສຸດເປັນປະຈຳປີ. ອາດມີຄວາມຈຳເປັນດຳເນີນການສຳພາດ ຄອບຄົວທີ່ບໍ່ສາມາດຊ່ວຍເຫລືອຕົນເອງໄດ້ ແລະ ບຸກຄົນໃດໜຶ່ງ ແຍກຕ່າງຫາກ ເພື່ອຮັບປະກັນວ່າຂໍ້ຂ້ອງໃຈ ແລະ ຄວາມຕ້ອງການ ຂອງເຂົາເຈົ້າ ໄດ້ຮັບການພິຈາລະນາ ແລະ ພວກເຂົາ ໄດ້ມີສ່ວນຮ່ວມ ໃນການຕິດຕາມກວດກາໂຄງການ ຢ່າງເປັນປົກກະຕິ.

### 6. ການສະແດງຄວາມຄິດເຫັນ

- **ປະຊາຊົນ ຫລື ກຸ່ມຄົນ** (ຊາວໜຸ່ມ, ແມ່ຍິງ, ຊົນເຜົ່າ, ຜູ້ທີ່ບໍ່ສາມາດຊ່ວຍເຫລືອຕົນເອງໄດ້) ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ສາມາດສະແດງຄຳຄິດເຫັນ ກ່ຽວກັບ ການຈັດຕັ້ງປະຕິບັດໂຄງການລົງທຶນ ດ້ວຍຫລາຍຮູບແບບ ເຊັ່ນ:
  - ສົ່ງຄຳເຫັນໄປໃຫ້ຜູ້ພັດທະນາໂຄງການ ຫລື ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງໂດຍຜ່ານທາງອີເມວ, ໄປສະນີ ແລະ ອື່ນໆ.
  - ສົ່ງຄຳຮ້ອງທຸກ, ຮ້ອງຟ້ອງ ກ່ຽວກັບ ຜົນການຈັດຕັ້ງປະຕິບັດໂຄງການລົງທຶນ ທີ່ເຫັນວ່າ ບໍ່ຖືກຕ້ອງ ແລະ ບໍ່ເປັນທຳ ບົນພື້ນຖານລະບຽບກົດໝາຍ ໄປຍັງຜູ້ພັດທະນາໂຄງການ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ;
- **ຜູ້ພັດທະນາໂຄງການ:** ຕ້ອງສ້າງກົນໄກ ເພື່ອຮັບຄຳຄິດເຫັນ, ຄຳຮ້ອງທຸກ-ຮ້ອງຟ້ອງ ຂອງປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ພ້ອມທັງຫາມາດຕະການແກ້ໄຂ ແລະ ແຈ້ງໄປຍັງປະຊາຊົນ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ຮັບຊາບ.
- **ອົງການຈັດຕັ້ງຂອງລັດ**: ຕ້ອງມີໜ່ວຍງານໄກ່ເກ່ຍຂໍ້ຂັດແຍ່ງ ເພື່ອຮັບຄຳຄິດເຫັນ, ຄຳຮ້ອງທຸກ - ຮ້ອງຟ້ອງຂອງປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ພ້ອມທັງຫາມາດຕະການແກ້ໄຂ ດ້ວຍຄວາມ ຖືກຕ້ອງ, ໂປ່ງໃສ ແລະ ເປັນທຳ ໃຫ້ແກ່ປະຊາຊົນ.

### 7.4.5 ການລາຍງານຜົນການດຳເນີນການມີສ່ວນຮ່ວມຂອງມວນຊົນ

ເຈົ້າຂອງໂຄງການ ຕ້ອງກະກຽມ ບົດລາຍງານ ກອງປະຊຸມປຶກສາຫາລື ລວມທັງລາຍຊື່ ແລະ ລາຍເຊັນ ຜູ້ເຂົ້າຮ່ວມແຕ່ລະຄົນ, ຊື່ ແລະ ລາຍເຊັນ ຂອງຜູ້ຕາງໜ້າຈາກບໍລິສັດ ແລະ ພະນັກງານລັດ, ວັນເວລາ, ເວລາ ແລະ ສະຖານທີ່ກອງປະຊຸມ ແລະ ຂໍ້ມູນອື່ນໆ ທີ່ກ່ຽວຂ້ອງ, ເນື້ອໃນການປຶກສາຫາລື, ຄຳຖາມ ແລະ ຂໍ້ຂ້ອງໃຈທີ່ສະເໜີໂດຍຜູ້ມີສ່ວນຮ່ວມ ແລະ ການອະທິບາຍຊີ້ແຈງ ໂດຍເຈົ້າຂອງໂຄງການ ແລະ ການເຄື່ອນໄຫວ ທີ່ຈະດຳເນີນແກ້ໄຂຂໍ້ຂ້ອງໃຈຕ່າງໆ.

ເມື່ອບົດລາຍງານການເຂົ້າຮ່ວມຕິດຕາມກວດກາຂອງມວນຊົນ ສຳເລັດ ແລະ ລົງນາມ ພ້ອມກາຈ້ຳ ຂອງອົງການປົກຄອງບ້ານ ໃຫ້ສຳເນົາບົດລາຍງານການປຶກສາຫາລື ດັ່ງກ່າວ ເປັນສາມສະບັບ, ສະບັບໜຶ່ງໃຫ້ບ້ານເກັບຮັກສາໄວ້, ສະບັບໜຶ່ງໃຫ້ເຈົ້າຂອງໂຄງການ ແລະ ສະບັບໜຶ່ງ ນຳສົ່ງໃຫ້ ກຊສ/ ພຊສ. ເຈົ້າຂອງໂຄງການມີພັນທະ ໃນການເຜີຍແຜ່ບົດລາຍງານດັ່ງກ່າວ ທັງໃນຮູບແບບສຳເນົາເອກະສານ ແລະ ເອເລັກໂຕນິກ ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ມີສ່ວນຮ່ວມ ອື່ນໆ ຕາມການຮ້ອງຂໍ.

## 7.5 ການມີສ່ວນຮ່ວມຂອງມວນຊົນໃນໄລຍະສິ້ນສຸດ ແລະ ຟື້ນຟູໂຄງການ

ຂໍ້ 2.11 ແລະ 2.15 ຂອງຄຳແນະນຳຂະບວນການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 8029 /ກຊສ ແລະ ຄຳແນະນຳຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ສະບັບເລກທີ 8030 /ກຊສ ໄດ້ກຳນົດໄວ້ວ່າ ກ່ອນການສິ້ນສຸດ ກິດຈະກຳຂອງໂຄງການລົງທຶນ, ເຈົ້າຂອງໂຄງການ ແມ່ນມີພັນທະແຈ້ງໃຫ້ມວນຊົນຮັບຊາບ ກ່ຽວກັບ ຄວາມຄືບໜ້າຂອງໂຄງການ, ລະດັບຄວາມສຳເລັດໃນການຈັດຕັ້ງປະຕິບັດພັນທະທີ່ກຳນົດໄວ້ໃນ ຜຄຕສ ແລະ ເງື່ອນໄຂ ຂອງໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ. ພ້ອມນັ້ນ, ຂໍ້ 2.10 ແລະ 2.14 ໄດ້ກຳນົດວ່າ ຜູ້ມີສ່ວນຮ່ວມຢູ່ທ້ອງຖິ່ນ ແລະ ມວນຊົນ ຈະໄດ້ເຂົ້າຮ່ວມໃນການຕິດຕາມກວດກາ ໂຄງການ. ພ້ອມດຽວກັນນັ້ນ, ເຈົ້າຂອງໂຄງການ ຈະຕ້ອງດຳເນີນຂະບວນການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການກະກຽມປິດໂຄງການ ແລະ ການວາງແຜນການຟື້ນຟູ ແລະ ການຈັດຕັ້ງປະຕິບັດ ເພື່ອເປີດໂອກາດໃຫ້ຊຸມຊົນທ້ອງຖິ່ນ, ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນໆ ໄດ້ຮັບຮູ້ຂໍ້ມູນຂ່າວສານ ແລະ ປະກອບຄຳເຫັນ.

### 7.5.1 ຄາດຄະເນຜົນທີ່ຈະໄດ້ຮັບ

- ເຈົ້າຂອງໂຄງການ ຈະສະແດງເຖິງຄວາມຮັບຜິດຊອບ ຕໍ່ຊຸມຊົນທ້ອງຖິ່ນ ແລະ ມວນຊົນ ທີ່ສູງຂຶ້ນ ໂດຍການເອົາລວມເອົາຂະບວນການມີສ່ວນຮ່ວມ ເຂົ້າຢູ່ໃນໄລຍະການປິດ ແລະ ການຟື້ນຟູ;
- ການປິດ ແລະ ການຟື້ນຟູ ໂຄງການ ຈະໄດ້ຮັບການປັບປຸງ ຜ່ານການມີສ່ວນຮ່ວມຂອງມວນຊົນ, ຈະມີການປ່ຽນແປງຕາມຄວາມຕ້ອງການ ແລະ ຜົນປະໂຫຍດ ຂອງຜູ້ຊົມໃຊ້ໃນທ້ອງຖິ່ນ ແລະ ສະແດງໃຫ້ເຫັນເຖິງ ຄວາມຍືນຍົງ ໂດຍການຍອມຮັບຈາກຊຸມຊົນທ້ອງຖິ່ນ;
- ຂະແໜງການລັດທີ່ກ່ຽວຂ້ອງ ຈະໄດ້ຮັບປະໂຫຍດ ຈາກການປັບປຸງການປິດໂຄງການ, ໄດ້ຮັບການຍອມຮັບ ແລະ ຮັບຮອງ ຈາກສັງຄົມ ກໍ່ຄືການຫລຸດຜ່ອນຂໍ້ຄັດແຍ່ງໃນສັງຄົມ.

### 7.5.2 ຜູ້ມີສ່ວນຮ່ວມຫລັກ

ຜູ້ມີສ່ວນຮ່ວມຫລັກ ປະກອບມີ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ, ຊຸມຊົນທີ່ໄດ້ຮັບຜົນກະທົບ, ຂະແໜງການທີ່ກ່ຽວຂ້ອງ ໃນລະດັບສູນກາງ ແລະ ທ້ອງຖິ່ນ (ແຂວງ, ເມືອງ ແລະ ບ້ານ), ກຊສ, ພຊສ, ຫຊນສ ແລະ ຜູ້ມີສ່ວນຮ່ວມອື່ນໆເຊັ່ນ: ອົງການຈັດຕັ້ງສັງຄົມຕ່າງໆ, ອົງການຈັດຕັ້ງສາກົນ, ຜູ້ຕາງໜ້າ ຈາກຫ້ອງວ່າການສະພາເຂດເລືອກຕັ້ງ, ອົງການຈັດຕັ້ງສາກົນ, ຜູ້ໃຫ້ທຶນ, ທີ່ປຶກສາ.

### 7.5.3 ການວາງແຜນ ແລະ ການກະກຽມ ການມີສ່ວນຮ່ວມຂອງມວນຊົນ

ເຈົ້າຂອງໂຄງການ ຕ້ອງໄດ້ກຳນົດ ແຜນການການປຶກສາຫາລື ແລະ ມີສ່ວນຮ່ວມ ໃນການຕິດຕາມກວດກາພາກສະໜາມ ຂອງຊຸມຊົນທ້ອງຖິ່ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ສຳລັບການປິດໂຄງການ. ເຊິ່ງຕ້ອງໄດ້ຈັດຕັ້ງປະຕິບັດ ແລະ ດຳເນີນຢ່າງຕໍ່ເນື່ອງ ໃນໄລຍະການກໍ່ສ້າງ ແລະ ດຳເນີນງານ ແລະ ລວມເອົາແຜນການດັ່ງກ່າວ ເຂົ້າເປັນສ່ວນໜຶ່ງຂອງແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ເຊິ່ງຕ້ອງໄດ້ປັບປຸງ ແລະ ນຳສະເໜີໃຫ້ ໃຫ້ ກຊສ/ ພຊສ ພິຈາລະນາຮັບຮອງໃນແຕ່ໄລຍະ. ຮ່າງຕາຕະລາງເວລາ ກອງປະຊຸມ ແລະ ວິທີການສະເພາະ ທີ່ຈະໃຊ້ໃນການປຶກສາຫາລື ແລະ ໃຫ້ການຕອບສະໜອງຕາມຄວາມຈຳເປັນ ເພື່ອຮັບປະກັນໃຫ້ການມີສ່ວນຮ່ວມ ມີປະສິດທິຜົນ.

ແຜນການມີສ່ວນຮ່ວມ ຕ້ອງນຳສິ່ງໃຫ້ ພຊສ/ກຊສ ເພື່ອທົບທວນ ແຜນການດັ່ງກ່າວ ຮັບປະກັນພາສາທີ່ນຳໃຊ້, ເຄື່ອງມື ແລະ ວິທີການ ເໝາະສົມກັບສະພາບຢູ່ໃນທ້ອງຖິ່ນ ແລະ ມີຄວາມເຂົ້າໃຈ ແລະ ຮັບປະກັນການຕອບສະໜອງທາງດ້ານເວລາ ແລະ ງົບປະມານ ໃຫ້ພຽງພໍ ເພື່ອຮັບປະກັນໃຫ້ບັນລຸຜົນຕາມ ການຄາດຄະເນຜົນໄດ້ຮັບ.

### 7.5.4 ວິທີການ ແລະ ກິດຈະກຳ ການມີສ່ວນຮ່ວມຂອງມວນຊົນ

ວິທີການມີສ່ວນຮ່ວມຂອງມວນຊົນໃນໄລຍະນີ້ ແມ່ນປະກອບມີ ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການປຶກສາຫາລື. ເພື່ອຮັບປະກັນ ການດຳເນີນການມີສ່ວນຮ່ວມຂອງມວນຊົນ ໃນໄລຍະການປິດ ແລະ ຟື້ນຟູ ໂຄງການ, ເຈົ້າຂອງໂຄງການ ຕ້ອງ:

- ເຜີຍແຜ່ຂໍ້ມູນຂ່າວສານ ໃຫ້ແກ່ຜູ້ມີສ່ວນຮ່ວມທ້ອງຖິ່ນ ຢ່າງນ້ອຍສຸດ ໜຶ່ງອາທິດ ກ່ອນການປຶກສາຫາລື, ລວມທັງລາຍລະອຽດບົດລາຍງານຄວາມຄືບໜ້າ ທີ່ເຈົ້າຂອງໂຄງການໄດ້ຈັດຕັ້ງປະຕິບັດ ໂດຍສົມທຽບກັບ ພຄຕສ ແລະ ເງື່ອນໄຂ ຂອງໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ, ກິດຈະກຳ ແລະ ໜ້າທີ່ ພົ້ນເດັ່ນ ທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດສຳເລັດ, ແລະ ແຜນການ ສຳລັບມາດຕະການ ທີ່ຈະດຳເນີນການ ເພື່ອປິດໂຄງການ ແລະ ຟື້ນຟູພື້ນທີ່. ເຈົ້າຂອງໂຄງການ ຍັງຕ້ອງໄດ້ປະສານງານກັບບ້ານ ເພື່ອຮັບປະກັນເວລາ ແລະ ສະຖານທີ່ ມີຄວາມເໝາະສົມ ສຳລັບຜູ້ເຂົ້າຮ່ວມ;
- ພົບປະກັບບ້ານທີ່ໄດ້ຮັບຜົນກະທົບ, ຄະນະກຳມະການຂັ້ນບ້ານ ແລະ ຜູ້ຕາງໜ້າ ຈາກອົງການຈັດຕັ້ງມະຫາຊົນ ເພື່ອປຶກສາຫາລື ກ່ຽວກັບ ເນື້ອໃນບົດລາຍງານ ຂອງໂຄງການ ແລະ ກຳນົດມາດຕະການ ສຳລັບການປິດໂຄງການ ແລະ ການຟື້ນຟູ;

- ໃຫ້ມີເວລາພຽງພໍສໍາລັບຜູ້ເຂົ້າຮ່ວມຢູ່ທ້ອງຖິ່ນ ໃນການສອບຖາມ ແລະ ໄດ້ຮັບຄໍາຕອບ, ສະເໜີຂໍ້ແນະນໍາ ແລະ ຂໍ້ຂ້ອງໃຈ. ການປຶກສາຫາລື ຕ້ອງໃຊ້ເວລາລະຫວ່າງ 3-4. ກຊສ ຫຼື ພຊສ ອາດແນະນໍາໃຫ້ນໍາໃຊ້ການບັນທຶກສຽງ ໃນກອງປະຊຸມດັ່ງກ່າວ. ແນະນໍາໃຫ້ນໍາໃຊ້ ເຈ້ຍແຜ່ນໃຫຍ່ ແລະ ບິກ ເພື່ອຂຽນລາຍການບັນຫາຕ່າງໆ ທີ່ຍົກຂຶ້ນ ແລະ ການແນະນໍາ ແລະ ຄວາມຄິດເຫັນອື່ນໆ ຈາກບ້ານ, ເພື່ອສ້າງຄວາມສະດວກໃຫ້ແກ່ການກະກຽມ ບົດລາຍງານການປຶກສາຫາລື. ແຍກການປຶກສາຫາລື ຫຼື ການສຜາດ (1-2 ຊົ່ວໂມງ ຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ) ອາດມີຄວາມຈໍາເປັນນໍາໃຊ້ ກັບຄອບຄົວທີ່ບໍ່ສາມາດຊ່ວຍເຫລືອຕົນເອງໄດ້ ແລະ ບຸກຄົນ ເພື່ອຮັບປະກັນວ່າ ຂໍ້ຂ້ອງໃຈ ແລະ ຄວາມຕ້ອງການ ຂອງເຂົາເຈົ້າ ໄດ້ຮັບການພິຈາລະນາ. ຜູ້ເຂົ້າຮ່ວມຢູ່ໃນທ້ອງຖິ່ນ ໂດຍສະເພາະຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ໄດ້ຮັບການເຊື້ອເຊີນເຂົ້າຮ່ວມ ການຕິດຕາມກວດກາພາກສະໜາມ ຢູ່ໃນພື້ນທີ່ໂຄງການ ເພື່ອສັງເກດການ ແລະ ປະເມີນຄວາມຄືບໜ້າ ໂດຍກົງ.
- ອີງຕາມຜົນໄດ້ຮັບຈາກການປຶກສາຫາລືຂັ້ນບ້ານ, ເຈົ້າຂອງໂຄງການຕ້ອງໄດ້ປັບປຸງ ແຜນການປິດໂຄງການ ແລະ ການຟື້ນຟູ ແລະ ນໍາສະເໜີ ການສັງລວມຫຍໍ້ ກ່ຽວກັບ ຂໍ້ຂ້ອງໃຈ ແລະ ຄວາມຄິດເຫັນ ທີ່ໄດ້ຮັບຈາກຜູ້ມີສ່ວນຮ່ວມ ແລະ ມວນຊົນ ໄດ້ຖືກນໍາມາພິຈາລະນາ ເຂົ້າໃນການປັບປຸງ ແຜນດ້ວຍວິທີໃດ.ໃນກໍລະນີຄວາມຄິດເຫັນທີ່ບໍ່ໄດ້ຖືກຍອມຮັບ ແລະ ບໍ່ມີຜົນຕໍ່ການປ່ຽນແປງ ຕ້ອງໄດ້ໃຫ້ລາຍລະອຽດ ແລະ ເຫດຜົນຢ່າງພຽງພໍ; ແລະ
- ເມື່ອສໍາເລັດການປັບປຸງແຜນການປິດ ແລະ ການຟື້ນຟູ ໂຄງການ, ເຈົ້າຂອງໂຄງການ ຕ້ອງປະສານສົມທົບກັບ ພຊສ /ກຊສ ໃນການກະກຽມ ກອງປະຊຸມປຶກສາຫາລື ໃນຂັ້ນແຂວງ ໂດຍການເຂົ້າຮ່ວມຂອງຜູ້ຕາງໜ້າຈາກຊຸມຊົນທີ່ໄດ້ຮັບຜົນກະທົບ, ຜູ້ຕາງໜ້າຈາກຂະແໜງການທີ່ກ່ຽວຂ້ອງ ຈາກສູນກາງ ແລະ ແຂວງ ແລະເມືອງ ແລະ ຜູ້ຕາງໜ້າຈາກ ກຊສ ໜຶ່ງທ່ານ ຫຼື ຫລາຍກວ່າ.
- ຜູ້ເຂົ້າຮ່ວມ ຈະໄດ້ຮັບແຜນການປິດ ແລະ ການຟື້ນຟູ ໂຄງການ ທີ່ໄດ້ປັບປຸງຕາມຄໍາເຫັນທີ່ໄດ້ຮັບຈາກ ການປຶກສາຫາລື ຂັ້ນບ້ານ. ກອງປະຊຸມປຶກສາຫາລື ຈະຕ້ອງໄດ້ນໍາສະເໜີເນື້ອໃນຂອງແຜນການປິດ ແລະ ການຟື້ນຟູ ໂຄງການ ສະບັບປັບປຸງ ແລະ ບັນຫາ ຫຼື ຂໍ້ຂ້ອງໃຈ ທີ່ໄດ້ແກ້ໄຂ. ຕ້ອງໄດ້ກໍານົດເວລາຢູ່ໃນວາລະກອງປະຊຸມຢ່າງໜ້ອຍສຸດ **30** ນາທີ ສໍາລັບຜູ້ຕາງໜ້າຈາກຊຸມຊົນທີ່ໄດ້ຮັບຜົນກະທົບ ເພື່ອສະແດງບັນຫາຂໍ້ຂ້ອງໃຈເຂົາເຈົ້າ ແລະ ໄດ້ຮັບການອະທິບາຍຊີ້ແຈງ ຈາກເຈົ້າຂອງໂຄງການ. ອີງຕາມຜົນກອງປະຊຸມນີ້, ເຈົ້າຂອງໂຄງການ ຈະປັບປຸງແຜນການປິດ ແລະ ການຟື້ນຟູ ໂຄງການ ແລະ ນໍາສົ່ງໃຫ້ ກຊສ /ພຊສ. ເຈົ້າຂອງໂຄງການ ຈະຕ້ອງສືບຕໍ່ການປຶກສາຫາລື ແລະ ການປັບປຸງ ຈົນກວ່າ ກຊສ /ພຊສ ພິຈາລະນາວ່າ ຄໍາເຫັນຂອງມວນຊົນ ແລະ ຂໍ້ຂ້ອງໃຈ ຂອງມວນຊົນ ໄດ້ປະກອບເຂົ້າຢູ່ໃນແຜນການດັ່ງກ່າວ.

### 7.5.5 ການລາຍງານຜົນການມີສ່ວນຮ່ວມຂອງມວນຊົນ

ເຈົ້າຂອງໂຄງການ ຕ້ອງກະກຽມ ບົດລາຍງານ ການປຶກສາຫາລື ທີ່ປະກອບມີລາຍການບັນຫາທີ່ຍົກຂຶ້ນ ແລະ ຄວາມຄິດເຫັນ ແລະ ການຮ້ອງຂໍ ທີ່ໄດ້ຮັບ, ລາຍຊື່ ແລະ ລາຍເຊັນ ຂອງຜູ້ເຂົ້າຮ່ວມແຕ່ລະຄົນ, ຊື່ ແລະ ລາຍເຊັນ ຂອງຜູ້ຕາງໜ້າຈາກບໍລິສັດ ແລະ ພະນັກງານລັດ, ວັນເວລາ, ເວລາ ແລະ ສະຖານທີ່ ກອງປະຊຸມ ແລະ ຂໍ້ມູນອື່ນໆ ທີ່ກ່ຽວຂ້ອງ.

ເມື່ອບົດລາຍງານການປຶກສາຫາລືສຳເລັດ ແລະ ລົງນາມ ພ້ອມກາຈ້ຳ ຈາກອົງການປົກຄອງບ້ານ ໃຫ້ສຳເນົາບົດລາຍງານການປຶກສາຫາລື ດັ່ງກ່າວ ເປັນສາມສະບັບ, ສະບັບໜຶ່ງໃຫ້ບ້ານເກັບຮັກສາໄວ້, ສະບັບໜຶ່ງໃຫ້ເຈົ້າຂອງໂຄງການ ແລະ ສະບັບໜຶ່ງ ນຳສົ່ງໃຫ້ ກຊສ/ ພຊສ. ເຈົ້າຂອງໂຄງການແມ່ນມີພັນທະ ໃນການເຜີຍແຜ່ບົດລາຍງານດັ່ງກ່າວ ທັງໃນຮູບແບບສຳເນົາເອກະສານ ແລະ ເອເລັກໂຕນິກ ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ມີສ່ວນຮ່ວມ ອື່ນໆ ຕາມການຮ້ອງຂໍ.

# 8 ການແກ້ໄຂບັນຫາ ຫຼື ຂໍ້ຄັດແຍ່ງ

ຂະບວນການມີສ່ວນຮ່ວມຂອງມວນຊົນ ຈະຊ່ວຍຫລຸດຜ່ອນ ຂໍ້ຄັດແຍ່ງ ແລະ ເພີ່ມຜົນໄດ້ຮັບດ້ານບວກ ດ້ວຍການສ້າງຄວາມໝັ້ນໃຈລະຫວ່າງເຈົ້າຂອງໂຄງການ, ອົງການຈັດຕັ້ງລັດ, ຜູ້ທີ່ໄດ້ຮັບຜົນກະທົບ, ຊຸມຊົນທ້ອງຖິ່ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ຜ່ານມາດຕະຖານການປະຊາສຳພັນ ແລະ ການເຂົ້າຮ່ວມ ທີ່ຈະແຈ້ງ.

ເຖິງແມ່ນວ່າຈະດຳເນີນຂະບວນການມີສ່ວນຮ່ວມຂອງມວນຊົນ, ແຕ່ວ່າຂໍ້ຄັດແຍ່ງອາດຄົງເກີດຂຶ້ນ. ເຈົ້າຂອງໂຄງການແມ່ນມີຄວາມຮັບຜິດຊອບ ເພື່ອຮັບປະກັນວ່າ ທັດສະນະຂອງມວນຊົນ ໂດຍສະເພາະຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ ໄດ້ຮັບການແກ້ໄຂ ຢ່າງຄົບຖ້ວນ ພາຍໃຕ້ພັນທະຕາມລະບຽບກົດໝາຍ ແລະ ສັນຍາ. ຂໍ້ຄັດແຍ່ງທີ່ຕິດພັນກັບ ຂະບວນການມີສ່ວນຮ່ວມຂອງມວນຊົນ ສາມາດຖືກແກ້ໄຂ ພາຍໃນຂອບເຂດກອງປະຊຸມປຶກສາຫາລື ໃນຂະບວນການມີສ່ວນຮ່ວມຂອງມວນຊົນ ຕາມທີ່ກຳນົດໄວ້ໃນ ບົດແນະນຳສະບັບນີ້.

ເພື່ອຮັບປະກັນຄວາມເປັນທຳ ລະຫວ່າງປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ກັບຜູ້ພັດທະນາໂຄງການ, ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການ ສາມາດສະເໜີຄຳຄິດເຫັນ ເພື່ອແກ້ໄຂບັນຫາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃດໜຶ່ງຂອງໂຄງການ ຫລື ສະເໜີ ຄຳຮ້ອງທຸກ ແລະ ຂໍ້ຂັດແຍ່ງຕ່າງໆ ກ່ຽວກັບ ການເວນຄືນທີ່ດິນ, ການທົດແທນຄ່າເສຍຫາຍ, ການຍົກຍ້າຍຈັດສັນປະຊາຊົນ ແລະ ບັນຫາສິ່ງແວດລ້ອມ ໂດຍປະຕິບັດ ດັ່ງນີ້:

- ສະເໜີ ຕໍ່ຜູ້ພັດທະນາໂຄງການ : ໂດຍຜ່ານໜ່ວຍງານຮັບຄຳຮ້ອງທຸກຮ້ອງຟ້ອງ ຂອງໂຄງການເອງ ເພື່ອດຳເນີນການແກ້ໄຂບັນຫາບົນພື້ນຖານການປຶກສາຫາລື ແລະ ວິທີການທີ່ໂປ່ງໃສ ແນໃສ່ການຕົກລົງແກ້ໄຂບັນຫາ ດ້ວຍການເຫັນດີ ເຫັນພ້ອມນຳກັນ ໃນລະດັບໂຄງການ.
- ສະເໜີ ຜ່ານອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ (ບ້ານ, ເມືອງ, ວິຊາການ ແລະ ລະດັບຊາດ) ເພື່ອສະເໜີໃຫ້ຜູ້ພັດທະນາໂຄງການ ແກ້ໄຂບັນຫາ.
- ສະເໜີ ຫາຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ : ໃນກໍລະນີໂຄງການລົງທຶນ ທີ່ມີການສ້າງຕັ້ງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ, ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ສາມາດຂຽນຄຳຮ້ອງທຸກ ຫລື ການລາຍງານປາກເປົ່າ ຕໍ່ຄະນະກຳມະການດັ່ງກ່າວແຕ່ລະຂັ້ນ ເພື່ອດຳເນີນການພິຈາລະນາແກ້ໄຂ ຕາມລະບຽບກົດຫມາຍ. ຖ້າວ່າບັນຫາທາງດ້ານສັງຄົມ ບໍ່ສາມາດ ຖືກແກ້ໄຂໄດ້, ບັນຫາດັ່ງກ່າວ ຈະຖືກນຳສະເໜີຫາຄະນະກຳມະການຊີ້ນຳລະດັບຊາດ.

- ສະເໜີ ຫາກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນກໍລະນີ ເກີດເຫດສຸກເສີນຮ້າຍແຮງ ດ້ານສິ່ງແວດລ້ອມ ຫລື ໃນກໍລະນີ ບັນຫາດ້ານສິ່ງແວດລ້ອມ ບໍ່ສາມາດແກ້ໄຂໄດ້ ໃນລະດັບ ອົງການ ປົກຄອງທ້ອງຖິ່ນ.
- ສະເໜີ ຫາອົງການ ຕຸລາການ-ສານ : ໃນກໍລະນີ ບັນຫາບໍ່ສາມາດແກ້ໄຂໄດ້, ຜູ້ໄດ້ຮັບຜົນກະທົບ ສາມາດ ສົ່ງຄຳຮ້ອງຟ້ອງຂຶ້ນຫາສານ ຕາມຂັ້ນຕອນ ແລະ ລະບຽບກົດໝາຍ.